ອີຊາກ ມິນຊ

# ການປະຕິວັດເດືອນຕຸລາ ເກີດຂຶ້ນແນວໃດ



ເຮືອກຳປັ່ນຮົບ "ອາວໍຣາ" ສັນຍາລັກຂອງການປະຕິວັດເດືອນຕຸລາແມ່ນການຍິງປືນໃຫຍ່ຈາກເຮືອລຳນີ້ເອງໄດ້ແຈ້ງການກ່ຽວກັບການບຸກທະຫລົ້ມວັງລະດູໜາວທີ່ວ່າໃນນັ້ນມີລັດຖະບານຊົ່ວຄາວຂອງນາຍທຶນ.

ມະຫາປະຕິວັດສັງຄົມນິຍົມເດືອນຕຸລາ-໗໐ ປີ

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

1 9 JAN 2010

# ການປະຕິວັດເດືອນຕຸລາ

ການປະຕິວັດຂອງກຳມະກອນແລະຊາວນາ ທີ່ນັກໂບນເຊວິກໄດ້ເວົ້າເຖິງຄວາມຈຳເປັນຂອງມັນ ໃນທຸກເວລານັ້ນ ໄດ້ປະກົດ...

ຈາກນີ້ໄປໃບຫນ້າໃຫມ່ ໃນປະຫວັດສາດ ຂອງປະເທດລັດເຊຍ ຈະໄດ້ເລີ່ມຕົ້ນ,ແລະໃນທີ່ສຸດການປະຕິວັດຄັ້ງນີ້, ຄັ້ງທີສາມຕ້ອງນຳໄປສູ່ ໄຊຊະນະຂອງສັງຄົມນິຍົມ.

ວ.ອ.ເລນິນ

ສຳນັກງານຂ່າວສານ ໂນໂວສະຕິ
ມົດສະກູ, I987

# ເກີດຂຶ້ນແນວໃດ

ອີຣາກ ມິນຊ

ແປໂດຍ: ຈ. ສິມບູນລັນ

0505030I0I

© ສຳນັກງານຂ່າວສານ ໂນໂວສະຕີ., I987
ກວດແລ້ວ ໑໐.໑໑.໘໖

# ສາລະບານ


1. ທີ່ຕັ້ງແລະບົດບາດຂອງການປະຕິວັດເດືອນຕຸລາໃນປະຫວັດສາດ... 7

-ການປະຕິວັດແມ່ນລັກສະນະບັງເອີນ ຫລືວ່າແມ່ນລັກສະນະກົດເກນແຫ່ງການຂະຫຍາຍຕົວຂອງສັງຄົມ?................ 7

-ການປະຕິວັດເດືອນຕຸລາແມ່ນສິ່ງຫລີກລ່ຽງບໍ່ໄດ້ແທ້ບໍ່?..... I3

-ຈຸດເລີ່ມຂອງສົງຄາມໂລກຄັ້ງທີໜຶ່ງ................ 25

2. ໄລຍະສັນຕິຂອງການປະຕິວັດ ປີ 1917................ 33

-ໄຊຊະນະຂອງການປະຕິວັດຄັ້ງທີສອງຢູ່ປະເທດລັດເຊຍ.... 33

-ການສ້າງຕັ້ງລະບົບສອງອຳນາດ................ 38

-"ຜູ້ກຳອຳນາດຊົ່ວຄາວ": ລະບົບອຳນາດດຽວຂອງນາຍທຶນ.. 44

-"ອຳນາດທັງໝົດຕ້ອງເປັນຂອງສະພາໂຊວຽດ!"....... 50

-"ການທັນເປັນເອີລົບໄປພ້ອມບາດ":ການເຂົ້າຮ່ວມປະສົມກຳອຳນາດ.......................... 57

-ວິກິດການຄັ້ງທີສອງຂອງອຳນາດ:ກຳມະກອນແລະກອງ ທະຫານຂອງນະຄອນຫລວງສະໜັບສະໜູນພັກໂບນເຊວິກ.... 64

-ວິກິດການທາງດ້ານການເມືອງຄັ້ງທີສາມ:ການຍຶດເອົາອຳນາດທັງໝົດຢ່າງສົມບູນໂດຍນາຍທຶນ................ 7I

3. ການບຸກທະລົ້ມລັດຖະບານທີ່ຕ້ານການປະຕິວັດ............ 78

-ນາຍທຶນກໍ່ສົງຄາມກາງເມືອງ................ 78

-ການປະຕິວັດບໍ່ພຽງແຕ່ຫລີກລ່ຽງບໍ່ໄດ້ເທົ່ານັ້ນ,ແຕ່ຍັງຈຳເປັນ

ອີກດ້ວຍ..............................87

-ຕ້ອງໂຄ່ນລົ້ມລັດຖະບານໃນມື້ນີ້, ເພາະວ່າມື້ອື່ນອາດຈະຊ້າເກີນ

ໄປ..................................91

-ການປະຕິວັດເດືອນຕຸລາໄດ້ໃຫ້ຫຍັງແດ່ແກ່ປະຊາຊາດຕ່າງ ໆ

ຂອງລັດເຊຍ ແລະຊາວຜູ້ອອກແຮງງານຂອງໂລກ......105

## 1. ທີ່ຕັ້ງແລະບົດບາດຂອງການປະຕິວັດ
## ເດືອນຕຸລາໃນປະຫວັດສາດ

### ການປະຕິວັດແມ່ນລັກສະນະບັງເອີນຫລືວ່າແມ່ນລັກສະນະ
### ກົດເກນແຫ່ງການຂະຫຍາຍຕົວຂອງສັງຄົມ?

ມີຫລາຍຄົນເລົ່າວ່າ, ເຈົ້າຊາ ນີໂກລາຍ ທີ 1 ເມື່ອເວລາຮູ້ ຂ່າວກ່ຽວກັບການປະຕິວັດປີ 1848 ຢູ່ປະເທດຝະລັ່ງ, ໄດ້ຟ້າວປົບເຂົ້າຫ້ອງຊຶ່ງໃນນັ້ນກຳລັງມີການເຕັ້ນລຳຢູ່ ແລະໄດ້ອອກຄຳສັ່ງດ້ວຍສຽງອັນດັງກ້ອງວ່າ: "ບັນດາທ່ານນາຍທະຫານ, ຣີບຟ້າວຂຶ້ນມ້າ ຢູ່ປະເທດຝະລັ່ງເກີດການປະຕິວັດ..."

ອາດເປັນໄປໄດ້ວ່າ ສຽງຊຸຫານດັ່ງກ່າວຂອງກະສັດທີ່ຮູ້ສຶກຄວາມກະວົນກະວາຍສຸດຂະໜາດນັ້ນ ມັນມີລັກສະນະແບບຫລິ້ນລະຄອນເກີນໄປໂພດ ກໍ່ໄດ້ ແຕ່ວ່າສຽງນັ້ນມັນໄດ້ສະແດງໃຫ້ ເຫັນຢ່າງຖືກຕ້ອງທີ່ສຸດເຖິງຄວາມຢ້ານກົວ ຂອງຊົນຊັ້ນປົກຄອງຕໍ່ໜ້າການປະຕິວັດ. ປະຫວັດສາດໄດ້ໃຫ້ແບບຢ່າງ ຄືແນວນີ້ນັບມື້ນັບຫລາຍ.

ການປະຕິວັດເດືອນຕຸລາປີ 1917 ຢູ່ລັດເຊຍໄດ້ປຸກຄວາມຢ້ານ ກົວຢ່າງໝັ້ນຄົງໄວ້ໃນວິນຍານຂອງ "ເຈົ້ານາຍ" ຂອງໂລກ? ຕໍ່ໜ້າຄວາມ ຄຽດແຄ້ນຂອງປະຊາຊົນ. ນາຍພົນເຢຍລະມັນ ຈີ່ ກອຟມານ ໄດ້ສະແດງຄວາມຢ້ານກົວນີ້ອອກແບບເປີດແປນ ທີ່ສຸດຢູ່ໃນປຶ້ມທີ່ໂດ່ງດັງ, ເວົ້າແຈ້ງວ່າ: ໂດ່ງດັງ

24/VII
ຫ້າມຈຳໜ່າຍ

ແບບໂສກເສົ້າ, ທີ່ໃຫ້ຊື່ວ່າ: "ຢູ່ໃສກໍແມ່ນມີດສະກູ!" ກອຟມານ ຖືວ່າແປວ ໄຟປະຕິວັດ ແຕ່ລະອັນ ທີ່ໄດ້ລະເບີດຂຶ້ນ ແລະໄດ້ແຜ່ລາມໄປ ໃນທຸກໆທະວີບ ພາຍຫລັງປີ 1917 ນັ້ນ ແມ່ນເງື່ອນມືມີດສະກູ. ທັງໆທີ່ວ່າເວລານັ້ນອຳນາດ ໂຊວຽດ ຫາກໍ່ໄດ້ເກີດຂຶ້ນ ແລະກໍ່ຍັງຈຳເປັນຕ້ອງປ້ອງກັນຕົວ ແລະຕ້ອງການ ການສະຫນັບສະຫນູນຢູ່. ແຕ່ວ່ານາຍພົນຊູນາລິກຜູ້ນີ້ ຈະເຂົ້າໃຈບັນຫານີ້ບໍ? ສຳລັບລາວນັ້ນ ສຳຄັນແມ່ນຕ້ອງເຮັດໃຫ້ປະຊາຊົນຢ້ານກົວດ້ວຍຄວາມຮ້າຍ ກາດຂອງການປະຕິວັດ ແລະປະຈຸບັນນີ້ ການຕໍ່ສູ້ ແຕ່ລະອັນຕ້ານການກົດ ຂີ່ ແລະການບັງຄັບຂົ່ມເຫັງນັ້ນ ເຖິງວ່າມັນຈະເກີດຂຶ້ນຢູ່ບ່ອນໃດກໍ່ຕາມ, ພວກ ເຂົາຖືວ່າແມ່ນເກີດຍ້ອນຄວາມລິເລີ່ມ ຂອງ"ພວກນັກຊຸກຍູ້ປັ່ນປ່ວນຂອງ ໂຊ ວຽດ".

ການປະດິດຄິດແຕ່ງແບບໂງ່ຈ້າກ່ຽວກັບ "ການສົ່ງນອກ" ຂອງການ ປະຕິວັດນັ້ນ ຕິດພັນຢ່າງສະຫນິດແຫນ້ນກັບຖ້ອຍທຳນອງດັ່ງກ່າວນີ້ - ຊຶ່ງ ສາ ມາດທຽບໄດ້ຄືກັນກັບສິນຄ້າສຳເລັດຮູບ ທີ່ແຈກຢາຍຕາມການສັ່ງຈ່ອງ ຂອງ ແຕ່ລະປະເທດ ໃນທຸກໆເວລາຕາມຈຳນວນເທົ່າໃດກໍໄດ້. ໃນແຕ່ລະປະເທດ, ການຊ່ວງຊາທາງຊົນຊັ້ນ, ກຳລັງແຮງຂອງມັນນັ້ນ ຈະຖືກສ້າງຂຶ້ນໂດຍຂຶ້ນກັບຈຸດ ພິເສດແຫ່ງຊາດຂອງຕົນ, ຂຶ້ນກັບທຳນຽມແລະປະເພນີ ທາງປະຫວັດສາດ. ບໍ່ ຄວນທີ່ຈະປຸກລະດົມປະຊາຊົນ, ນຳພາເຂົາເຈົ້າອອກສູ່ຖະຫນົນ ແລະຈັດຕັ້ງ ການຕໍ່ສູ້ແບບຈອມປອມ.

ການປະຕິວັດແມ່ນເອົາເຂົ້າມາບໍ່ໄດ້, ກໍ່ຂຶ້ນບໍ່ໄດ້ແລະຈະແຕ່ງຕັ້ງຂຶ້ນກໍ່ ບໍ່ໄດ້, ແຕ່ວ່າການປະຕິວັດຈະຕ້ອງເກີດຂຶ້ນ ແລະສຸກງອມຢູ່ ໃນກະໂຕ ຂອງ

ສັງຄົມ. ຖ້າຫາກບໍ່ແມ່ນແນວນີ້ຈະສາມາດຖາມໄດ້ວ່າ, ເປັນຫຍັງ"ນັກສົ່ງການປະຕິວັດອອກນອກ" ທີ່ແຂງແຮງກວ່າໝູ່ ຈຶ່ງຫລີກຈາກປະເທດໜຶ່ງ ແລະມັກປະເທດອື່ນຫລາຍກວ່າ? ຫລືວ່າຈະມີຜູ້ໃດຜູ້ໜຶ່ງບໍ ທີ່ມີເຂດລັບພິເສດ, ມີຢາວິເສດຕ້ານການປະຕິວັດ? ຖ້າຫາກວ່າເປັນແນວນັ້ນ, ແລ້ວເປັນຫຍັງຈຶ່ງບໍ່ແບ່ງປັນ"ເມັດຢາຕ້ານການປະຕິວັດ"ຂອງຕົນ ໃຫ້ຜູ້ຢູ່ໃກ້ຄຽງ ແລະໝູ່ເພື່ອນຂອງຕົນແດ່ ?

ແຕ່ວ່າ "ນັກປະດິດຄິດແຕ່ງ"ຖ້ອຍທຳນອງ ແລະທິດສະດີທັງໝົດເຫລົ່ານີ້, ກໍຄືພວກ ທີ່ສະໜັບສະໜູນຊຸກຍູ້ ແລະລ້ຽງເກືອມັນນັ້ນກໍ່ຮູ້ ຢາສັກເພື່ອຊ່ວຍກອບກູ້ພຽງແຕ່ຊະນິດດຽວຄື: ການເຂົ້າຫຍຸ້ງກ່ຽວດ້ວຍກຳລັງອາວຸດຕ້ານກັບປະຊາຊົນ ຊຶ່ງໄດ້ກຳເອົາຊາຕາກຳຂອງຕົນເອງ ໄວ້ໃນກຳມືຂອງຕົນ. ແຕ່ບົດຮຽນຂອງພູກມີ້ນີ້ ກໍ່ສະແດງໃຫ້ເຫັນແລ້ວວ່າ, ແມ່ນແຕ່ກຳລັງຄົນ ກໍບໍ່ສາມາດຈະເຮັດຫຍັງໄດ້, ຖ້າຫາກວ່າປະຊາຊົນຢຶດໝັ້ນ ຢ່າງແໜ້ນແກ່ນ ໃນຊົນການຂອງຕົນ ແລະຕໍ່ສູ້ຢ່າງເດັດດ່ຽວ, ຢ່າງເປັນເອກະພາບ, ຢ່າງພິລະອາດຫານຕ້ານກັບການແຊກແຊງດ້ວຍອາວຸດຂອງຕ່າງດ້າວ. ຄິດວ່າ ບໍ່ຈຳເປັນຈະຕ້ອງຍົກຕົວຢ່າງ - ທ່ານຜູ້ອ່ານກໍຍັງຈະຈື່ໄດ້ ເຖິງປະເທດຫວຽດນາມ, ກູບາ, ນີກາຣາກວາ ແລະປະເທດອື່ນໆ ໂດຍບໍ່ຕ້ອງໃຫ້ພວກເຮົາຊ່ວຍເຫລືອ.

ນັກຂຽນປຶ້ມພູກອື່ນ ທີ່ປົກປ້ອງລະບອບທຶນນິຍົມ ໄດ້ຊວນເຊື່ອ ຢ່າງແຂງແຮງ ເພື່ອໃຫ້ປະຊາຊາດຫລີກຈາກເສັ້ນທາງປະຕິວັດ. ພວກເຂົາ ໄດ້ປ່ອຍ"ທິດສະດີ"ກ່ຽວກັບ...ລາຄາຂອງການປະຕິວັດ ເຊັ່ນວ່າ:ລາຄານັ້ນແພງໂພດ, ມັນຕ້ອງມີການເສຍສະລະ, ມີການທັບມ້າງແບບແຜນດຳລົງຊີວິດ

ທີ່ຊຸມເຄີຍມາແລ້ວ, ມີການລົ້ມລະລາຍ ແລະການມ້າງເພ ເສດຖະກິດ."ທິດສະດີ"ນີ້ບໍ່ໃຫມ່ຈັກດີ້ ແລະຍ້ອນແນວນັ້ນ ຈິ່ງບໍ່ມີຫຍັງພິເສດ: ພວກເຈົ້າທີ່ດິນແລະນາຍທຶນລັດເຊຍ ກໍ່ເຄີຍໄດ້ເວົ້າເລື້ອຍໆວ່າ, ການປະຕິວັດນີ້ເຮັດໃຫ້ເກີດມີການເສຍສະລະ ຢ່າງຫລວງຫລາຍ, ເຮັດໃຫ້ມີການຫລັ່ງເລືອດ. ທັງຫມົດນີ້ ແມ່ນປະດິດແຕ່ງຂຶ້ນ ເພື່ອເຮັດໃຫ້ປະຊາຊົນຢ້ານກົວ, ແຕ່ວ່າປະຊາຊົນກໍ່ບໍ່ໄດ້ຢ້ານ ແລະໄດ້ຕໍ່ສູ້ຕ້ານກັບລະບອບເກົ່າ ຢ່າງອາດຫານ. ຊີວິດໄດ້ຢັ້ງຢືນຢ່າງສົມບູນແລ້ວວ່າຄວາມອາດຫານນີ້ ແມ່ນຖືກຕ້ອງ. ເລືອດໄດ້ໄຫລນອງກໍ່ມີແຕ່ໃນເມື່ອວ່າ,ອິດທິກຳລັງຕ້ານການປະຕິວັດພາຍໃນ ແລະພາຍນອກ ໄດ້ແກ່ດຶງເອົາປະເທດຊາດ ເຂົ້າສູ່ສົງຄາມກາງເມືອງອັນຍາວນານ. ຈະມີຫຍັງກ່ຽວຂ້ອງເຖິງລາຄາຂອງການປະຕິວັດ ? ມັນແມ່ນລາຄາ ຂອງການຕ້ານການປະຕິວັດ ທີ່ໄດ້ເຮັດໃຫ້ປະເທດຊາດ ຕ້ອງຫລັ່ງເລືອດ.

ໃນໄລຍະສຸດທ້າຍນີ້ ໄດ້ປາກົດມີ ທັດສະນະໃຫມ່ "ທາງດ້ານທິດສະດີ" ກ່ຽວກັບບັນຫາການປະຕິວັດເຊັ່ນວ່າ: ຈະຈຳເປັນຫຍັງ ໃຫ້ມີການ ປະຕິວັດ? ສິ່ງທີ່ຕ້ອງການຈະສາມາດບັນລຸໄດ້ໂດຍປາສະຈາກມາດຕາການ ທີ່ເລິກເຊິ່ງແບບນີ້; ເບິ່ງແມ ບັນດາປະເທດຕາເວັນຕົກ - ພວກເຂົາບໍ່ຮູ້ຮອດການປະຕິວັດ ແຕ່ກໍ່ຍັງບັນລຸການຂະຫຍາຍຕົວ ຢ່າງມີຜົນສຳເລັດ, ເຊີນເອົາ ຕົວຢ່າງຈາກເຂົາຕິ.

ຈຳເປັນຕ້ອງໄດ້ທວນຄືນໃຫ້ພວກເຂົາຮູ້ວ່າ, ສະຫະລັດອາເມລິກາໄດ້ຮັບການຂະຫຍາຍຕົວ ຢ່າງວ່ອງໄວນັ້ນກໍ່ຍ້ອນສອງການປະຕິວັດອັນສະຫງ່າອົງອາດຂອງອາເມລິກາ. ການປະຕິວັດອັງກິດ ທີ່ແນໃສ່ເພື່ອຕ້ານກັບຮ່ອງຮອຍ

ເສດເຫລືອຂອງສັກດີນານັ້ນ ໄດ້ສ້າງຄວາມອາດສາມາດ ແກ່ການທັນ ປ່ຽນທາງດ້ານອຸດສາຫະກຳ ແລະໄດ້ຮັບປະກັນການຫັນປ່ຽນປະເທດອັງກິດໃຫ້ເປັນ "ໂຮງງານຂອງໂລກ"ໃນໄລຍະອັນດົນນານ. ມະຫາປະຕິວັດໃນປະເທດຝະລັ່ງ, ດ້ວຍແນວຄິດຂອງຕົນໄດ້ກາຍເປັນ ບໍ່ເກີດແຫ່ງການຂະຫຍາຍຕົວ ຂອງທະວີບເອີລົບ, ອາເມລິກາເຫນືອ ແລະພ້ອມດຽວກັບການປະຕິວັດຝະລັ່ງອື່ນໆ ໄດ້ເຮັດໃຫ້ປະເທດຝະລັ່ງກ້າວຂຶ້ນຢູ່ ໃນລະດັບຂອງມະຫາອຳນາດ ທີ່ຂະຫຍາຍຕົວສູງ. ສາມາດເວົ້າໄດ້ຄືດຽວກັນ ເຖິງທຸກໆປະເທດອຸດສາຫະກຳ ທີ່ ຂະຫຍາຍຕົວສູງອື່ນໆຂອງທຶນນິຍົມ ທີ່ແຍ່ງຊີງເອົາບົດບາດເປັນຜູ້ນຳຫນ້າໃນໂລກທຶນນິຍົມທັງຫມົດວ່າ: ໃນພື້ນຖານແຫ່ງຜົນສຳເລັດຂອງພວກເຂົານັ້ນ ມີ ຂະບວນວິວັດຂອງການປະຕິວັດໃນອະດີດ. ຫມາຍຄວາມວ່າ, ກະໂຕມະຫາ ອຳນາດທຶນນິຍົມເອງ ກໍໄດ້ສວຍໃຊ້ ຢ່າງກວ້າງຂວາງຫມາກຜົນຂອງການປະ ຕິວັດຂອງຕົນ, ສ່ວນວ່າປະຈຸບັນນີ້ຊ້ຳພັດຢາກໃຫ້ ຜູ້ອື່ນຫລີກຈາກເສັ້ນທາງ ອັນຖືກຕ້ອງນີ້. ມີພຽງແຕ່ເຈົ້ານາຍເທົ່ານັ້ນ ທີ່ມີອະພິສິດ ທີ່ຈະຊົມໃຊ້ຫມາກຜົນຂອງການປະຕິວັດໃຫມ່ແມ່ນບໍ່ ? ສ່ວນຜູ້ອອກແຮງງານນັ້ນ ເຂົາບໍ່ມີສິດເຮັດອັນນັ້ນແມ່ນບໍ່ ?

ເມື່ອຄວາມພະຍາຍາມ ໃນການສ້າງຄວາມຢ້ານກົວແກ່ປະຊາຊາດດ້ວຍການປະຕິວັດໄດ້ຖືກທັບມ້າງອີກເທື່ອໃຫມ່, ພວກນັກໂຄສະນາ ຂອງຕາເວັນຕົກ ໄດ້ຕັດສິນໃຈ ບິດເບືອນກະໂຕທາດແທ້ ຂອງຄວາມສຳນຶກການ ປະຕິວັດ. ພວກເຂົາຊອກຫານິຍາມການປະຕິວັດ ທີ່ຄືກັນກັບຄາຖາອາຄົມ, ທີ່ຈະສ້າງຄວາມຢ້ານກົວແກ່ມະຫາຊົນ ເພື່ອໃຫ້ເຂົາຫລີກຫ່າງ ຈາກການປະຕິວັດ

ເຊັ່ນວ່າ: "ການລະເບີດທີ່ນອງເລືອດ", "ການຄົບຄິດກະບົດ ຂອງພວກຫລອກລວງປະຊາຊົນ" ,ພະຍາດເສຍຈິດອັນກວ້າງຂວາງ", "ພະຍາດຕິດຕໍ່ທາງສັງຄົມ", "ຄວາມເຂົ້າໃຈແບບງົມງວາຍ ທາງດ້ານຈິດຕະສາດ" ແລະອື່ນໆ.

ແຕ່ວ່າຢູ່ໃນລະບົບຄາຖາອາຄົມດັ່ງກ່າວນີ້ ກໍບໍ່ມີຄຳນິຍາມ ທີ່ເປັນເອກະພາບທາງດ້ານວິທະຍາສາດ ຂອງການປະຕິວັດ ທີ່ຄູສອນ ຂອງຊາວກຳມາຊີບໄດ້ວາງອອກແຕ່ຕົ້ນ ແລະໄດ້ຖືກທົດສອບ ດ້ວຍບົດຮຽນແຫ່ງສະຕະວັດ ນັ້ນເລີຍ. ນັກມາກຊິດຖືວ່າ, ການປະຕິວັດແມ່ນຂະບວນການອັນເລິກເຊິ່ງ ແລະກວ້າງຂວາງຂອງປະຊາຊົນ ທີ່ວ່າ ໃນນັ້ນ ອໍ້ອັດແຍ່ງທັງຫມົດ ທີ່ມີຢູ່ໃນສັງຄົມຈະໄດ້ຖືກລົບລ້າງ ດ້ວຍການເລີກລ້າງຊົນຊັ້ນ ເກົ່າອອກຈາກອຳນາດ ແລະການກຳອຳນາດໄວ້ໃນກຳມື ຂອງຊົນຊັ້ນໃຫມ່.

ຄຳນິຍາມ ຄືແນວນີ້ ຊ່ວຍໃຫ້ມີຄວາມສາມາດຈຳແນກ ໄດ້ຄວາມແຕກຕ່າງ ລະຫວ່າງການປະຕິວັດຂອງປະຊາຊົນ ກັບການລັດຖະປະຫານ ທຳນຽບແລະການປະຕິຮູບ. ເຖິງຢ່າງໃດກໍຕາມ ການຄົບຄິດກະບົດ ແຕ່ລະອັນຕໍ່ທຳນຽບ ແລະການຜັດປ່ຽນນາຍພົນນາຍພັນນັ້ນ ມັນແມ່ນພຽງແຕ່ ເພື່ອຮັກສາອຳນາດໄວ້ ໃນກຳມື ຂອງຊົນຊັ້ນປົກຄອງ ອັນເກົ່ານັ້ນໄວ້ຊື່ໆ. ທາດແທ້ຂອງການປະຕິຮູບນີ້ ກໍບໍ່ໄດ້ຂຶ້ນກັບຮູບການ ແຫ່ງການດຳເນີນການປະຕິຮູບນັ້ນເຊັ່ນ- ການຄົບຄິດກະບົດ ແບບສັນຕິ ຫລືວ່າການປາບປາມ ຝ່າຍຄ້ານແບບ   ນອງເລືອດ, ບໍ່ໄດ້ຂຶ້ນກັບ ຄວາມເລິກເຊິ່ງ ຂອງການປະຕິຮູບ ຫລືວ່າການເສຍສະລະ ຢ່າງຫລວງຫລາຍ, ແລະທັງຫມົດນີ້ ກໍແມ່ນເພື່ອຮັກສາອຳນາດໄວ້ໃນກຳມື ຂອງຊົນຊັ້ນເກົ່າເທົ່ານັ້ນ.

ການກຳເອົາອຳນາດໄວ້ໃນ ກຳມື ຂອງຊົນຊັ້ນໃໝ່ ໝາຍເຖິງການປ່ຽນແທນ ຊົນຊັ້ນທີ່ນຳພາສັງຄົມ, ໝາຍເຖິງການຂ້າມຜ່ານສູ່ຮູບຖານສັງຄົມໃໝ່. ປະຫວັດສາດໄດ້ຢັ້ງຢືນ ລັກສະນະກົດເກນ ແຫ່ງການຂະຫຍາຍຕົວຂອງສັງຄົມມະນຸດນີ້ແລ້ວ. ລະບອບສັກດີນາ ໄດ້ຖືກລົບລ້າງ ດ້ວຍການ ປະຕິວັດນາຍທຶນ ທີ່ໄດ້ເລີກລ້າງອຳນາດ ຂອງພວກຂຸນນາງສັກດີນາ ຈຶ່ງໄດ້ມອບອຳນາດ ໃຫ້ແກ່ນາຍທຶນ. ໃນຍຸກສະໄໝປະຈຸບັນ, ຢູ່ໃນສາຍຕາ ຂອງໜຶ່ງ-ສອງຮຸ່ນຄົນ ກໍໄດ້ເກີດມີການປ່ຽນສັງຄົມທຶນນິຍົມ ດ້ວຍຮູບຖານສັງຄົມ ໃໝ່-ດ້ວຍສັງຄົມນິຍົມ. ຊົນຊັ້ນໃໝ່ - ຊົນຊັ້ນກຳມາຊີບ ໄດ້ຂຶ້ນກຳອຳນາດ. ມະຫາປະຕິວັດສັງຄົມນິຍົມເດືອນຕຸລາ ແມ່ນບໍ່ເກີດ ແຫ່ງການປ່ຽນແທນດັ່ງກ່າວ. ມັນໄດ້ວາງ ຈຸດເລີ່ມ ໃຫ້ແກ່ການຂ້າມຜ່ານ ຂອງສັງຄົມມະນຸດ ຈາກລະບອບທຶນນິຍົມສູ່ສັງຄົມນິຍົມ.

## ການປະຕິວັດເດືອນຕຸລາ
## ແມ່ນສິ່ງຫລີກລ້ຽງບໍ່ໄດ້ແທ້ບໍ່ ?

ເບິ່ງແນວໜຶ່ງ ຄຳຖາມນີ້ ຄືບໍ່ມີເນື້ອໃນຫຍັງ. ມະຫາປະຕິວັດ ສັງຄົມນິຍົມເດືອນຕຸລາ ໄດ້ເກີດຂຶ້ນ ແລະກໍບໍ່ມີໃຜ ຈະສາມາດລົບລ້າງ ມັນອອກຈາກປະຫວັດສາດໄດ້. ແຕ່ກໍຍັງມີ "ນັກຊ່ຽວຊານ" ທີ່ເຫັນວ່າ,ການປະຕິວັດນີ້ອາດຈະບໍ່ເກີດຂຶ້ນກໍໄດ້.

ພວກເຂົາ ໄດ້ຄົ້ນຄວ້າຢູ່ໃນປຶ້ມຕຳລາຂໍ້ມູນ,ວ່າໃນຊຸມສິບປີສຸດທ້າຍ ຂອງສະຕະວັດທີ 19 ອຸດສາຫະກຳຫນັກໃນປະເທດລັດເຊຍ ໄດ້ພົ້ນທະວີການ ຜະລິດອອກ ເຖິງສອງເທົ່າ. ທັ້ນເດ! ຈຸດເລີ່ມ ຂອງການຫັນເປັນອຸດສາຫະ ກຳ,-ພວກນັກໃຫ້ຄຳສອນພາກັນວົນແຊວອອກ - ດ້ວຍຄວາມເບີກບານ...

ແມ່ນແທ້,ອຸດສາຫະກຳ ຂອງປະເທດລັດເຊຍເຈົ້າຊາ ໃນຕອນທ້າຍ ຂອງສະຕະວັດທີ 19 ໄດ້ມີບາດກ້າວກະໂດດແທ້ ແລະໄດ້ເພີ່ມທະວີການຜະ ລິດອອກສອງເທົ່າ. ແຕ່ພວກນັກໃຫ້ຄຳສອນ ຊ້ຳລືມວ່າ, ໃນຕອນຕົ້ນ ຂອງສະ ຕະວັດທີ 20 ນັ້ນ ວິກິດການຂອງໂລກ ໄດ້ມາຮອດແລ້ວ, ທັງໄດ້ແກ່ດຶງເອົາ ປະເທດຖອຍຫລັງຄືນໄປຕັ້ງໄກ ແລະຫລັງຈາກນັ້ນ ມາກໍ່ໄດ້ຕົກຢູ່ໃນສະພາບ ຄວາມຕົກຕໍ່າ ທາງດ້ານເສດຖະກິດ ຢ່າງຍາວນານ. ເຖິງວ່າ ຕໍ່ຫນ້າ ສົງ ຄາມໂລກ ປີ 1914 - 1918 ນັ້ນ ໃນເສດຖະກິດຂອງປະເທດລັດເຊຍຈະ ມີ ການຟື້ນຕົວເລັກໆນ້ອຍໆກໍ່ຕາມ...ຍັງມີນັກໃຫ້ຄຳສອນອີກຈຳນວນຫນຶ່ງ ທີ່ ສາລະພາບວ່າ, ພວກເຂົາໄດ້ຕຳນິລະບອບເຈົ້າຊາເກີນຂອບເຂດ, ເຈົ້າຊາ ນັ້ນແຫລະ ເປັນຜູ້ເຮັດໃຫ້ວິທະຍາສາດ ແລະວັດທະນະທຳ ໃນປະເທດລັດເຊຍ ຂະຫຍາຍຕົວ.ລັ້ນຊຸ້ນເປັນຫຍັງ ສາມສ່ວນສີ່ ຂອງພົນລະເມືອງ ຂອງປະເທດ ຈິ່ງບໍ່ຮູ້ຫນັງສື, ສ່ວນວ່າຜູ້ໃດຜູ້ຫນຶ່ງ ທີ່ລອດຈາກຊິກໂສ້ ແຫ່ງຄວາມໂງ່ຈ້າ ແລະໄດ້ເຂົ້າໂຮງຮຽນຊູດັ້ມນັ້ນ ພວກຫົວຫນ້າ ກໍ່ຈະເອີ້ນ ແບບຫມິ່ນປະຫມາດ ໂລດວ່າ "ເດັກນ້ອຍເຮືອນຄົວ".

ພວກນັກຄົ້ນຄວ້າຫາເສັ້ນທາງແກ້ໄຂ ບໍ່ໃຫ້ມີການປະຕິວັດເວົ້າ ກັບ ພວກເຮົາວ່າ, ໃນລະບອບເຈົ້າຊາ ກໍ່ຍັງມີການສຶກສາ, ໂຮງຮຽນ, ມະຫາ

ວິທະຍາໄລຢູ່ເດ.ກໍມີທັງວິທະຍາສາດ ຊຶ່ງມີຮອດບັນດາຕົວແທນ ທີ່ມີຊື່ສຽງລະດັບໂລກ.ຖືກຕ້ອງ. ແຕ່ວ່າ ການຂະຫຍາຍຕົວ ຂອງລະບອບທຶນນິຍົມ, ການນຳໃຊ້ເຄື່ອງຈັກ ມັນຮຽກຮ້ອງ ໃຫ້ມີຂ້ອຍຂ້າ ທີ່ຮູ້ຫນັງສື, ທີ່ຮູ້ນຳໃຊ້ພາຫາມະເຕັກນິກທັນສະໄຫມ, ຍັງຈຳເປັນຕ້ອງມີນາຍຊ່າງ, ວິສະວະກອນ. ລະບອບທຶນນິຍົມຮຽກຮ້ອງໃຫ້ກຳມະກອນນັ້ນ ຮູ້ຫນັງສື.

ພວກເຮົາຈະຍົກບາງຕົວເລກໃຫ້ເຫັນ. ໃນປີ 1897 ໃນປະເທດລັດເຊຍໄດ້ດຳເນີນການສຳຫລວດພົນລະເມືອງ. ເຫັນວ່າ, ໃນຈຳນວນ ພົນລະເມືອງ 126 ລ້ານຄົນນັ້ນ ມີພຽງແຕ່ 21,1% ເທົ່ານັ້ນຮູ້ຫນັງສື. ຫນຶ່ງຮ້ອຍລ້ານຄົນ ບໍ່ຮູ້ອ່ານ, ບໍ່ຮູ້ຂຽນ !ຊົນຊາດ ທີ່ບໍ່ແມ່ນລັດເຊຍແຮ່ງມີສະພາບຮ້າຍແຮງກວ່ານີ້ ເຊັ່ນວ່າ: ໃນທ່າມກາງຊາວຕາດຊິກ ມີຜູ້ບໍ່ຮູ້ຫນັງສື99,5%, ຊາວກີຣກີຊີ 99,4%, ຊາວອູສເບັກມີ 98,4%, ຫມາຍຄວາມວ່າມີຫນ້ອຍຄົນ ທີ່ຈະສາມາດຂຽນຊື່ຕົນເອງໃສ່ເອກະສານ. ສະພາບກ່ຽວກັບການບໍ່ຮູ້ຫນັງສືນັ້ນກໍບໍ່ໄດ້ດີຂຶ້ນຫລາຍ ໃນສະຕະວັດທີ 20; ໃນປີ 1913 ຢູ່ປະເທດລັດເຊຍມີຜູ້ບໍ່ຮູ້ຫນັງສືເຖິງ 73%, ໂດຍບໍ່ໄລ່ເດັກ ທີ່ມີອາຍຸບໍ່ທັນຮອດ 9 ປີ. ຄວາມຈິງ ມັນກໍຈະດີກວ່ານີ້ ໄດ້ແນວໃດຖ້າຫາກວ່າ ລະບອບເຈົ້າຊາຫາກໃຊ້ຈ່າຍພາຫະນະ ເພື່ອການສຶກສາຂອງປະຊາຊົນນັ້ນ ຫນ້ອຍກວ່າການໃຊ້ຈ່າຍ ເພື່ອສ້າງແລະສ້ອມແປງຄຸກ! ເມື່ອອ່ານບົດລາຍງານ ກ່ຽວກັບວ່າ, ໃນບັນດາ ຜູ້ທີ່ຖືກຮຽກຕົວເປັນທະຫານເກືອບບໍ່ມີຜູ້ຮູ້ຫນັງສືເລີຍນັ້ນ, ເຈົ້າຊານີໂກລາຍ ທີ 2 ໄດ້ເວົ້າອອກມາວ່າ: "ໂອຍ!ເທບພະເຈົ້າຊ່ວຍ!". ບໍ່ແມ່ນເລື່ອງບັງເອີນ ທີ່ວ.ອ.ເລນິນ ເອີ້ນກະຊວງສຶກສາ ເປັນ "ກະຊວງສ້າງຄວາມມືດມົນ".

ປະເທດລັດເຊຍເຈົ້າຊາ ແມ່ນປະເທດ ທີ່ຫລ້າຫລັງທາງດ້ານ ເຕັກນິກ-ເສດຖະກິດ. ຕ້ອງໄດ້ທວນຄືນອີກກ່ຽວກັບວ່າ, ກ່ອນສົງຄາມໂລກຄັ້ງ ທີຫນຶ່ງການໃຊ້ສອຍຫລັກ ເມື່ອໄລ່ໃສ່ຫົວຄົນ ຂອງພົນລະເມືອງ ປະເທດອັງກິດໄດ້ລື່ນປະເທດລັດເຊຍ ເຖິງ 4 ເທົ່າ, ປະເທດເຢຍລະມັນລື່ນ 5 ເທົ່າ, ສະຫະລັດອາເມລິກາລື່ນເຖິງ 10 ເທົ່າ.

ເວົ້າທົ່ວໄປແລ້ວ, ໃນເວລານັ້ນ ປະເທດລັດເຊຍໄດ້ຖືກຈັດເຂົ້າໃນບັນດາປະເທດ ທີ່ມີການຂະຫຍາຍຕົວປານກາງ ຕາມລະດັບການຂະຫຍາຍຕົວຂອງລະບອບທຶນນິຍົມ, ສ່ວນຕາມຈັງຫວະການເພີ່ມທະວີ ຂອງການຂະຫຍາຍຕົວນັ້ນ ມັນລື່ນທຸກໆປະເທດ ທີ່ນຳຫນ້າ. ເຊັ່ນວ່າ, ຕໍ່ຫນ້າສົງຄາມໂລກ ຄັ້ງທີຫນຶ່ງນັ້ນ 5% ຂອງວິສາຫະກິດ ໄດ້ເຕົ້າໂຮມເອົາເຄິ່ງຫນຶ່ງ ຂອງກຳມະກອນອຸດສາຫະກຳໄວ້, ສ່ວນວ່າ ໃນເວລາດຽວກັນນັ້ນຢູ່ສະຫະລັດອາເມລິກາ ຢູ່ໃນຈຳນວນຂອງວິສາຫະກິດຂະຫນາດດຽວກັນ ມີພຽງແຕ່ຫນຶ່ງສ່ວນສາມ ຂອງກຳມະກອນເທົ່ານັ້ນເຮັດວຽກຢູ່. ເປັນແນວນັ້ນ ກໍຍ່ອມວ່າ, ປະເທດລັດເຊຍກ້າວສູ່ເສັ້ນທາງທຶນນິຍົມຊ້າກວ່າປະເທດອື່ນໆ. ມັນບໍ່ຈຳເປັນຈະລໍຖ້າ, ຈົນວ່າໃຫ້ໂຮງງານຫັດຖະກຳ ກາຍເປັນວິສາຫະກິດອຸດສາຫະກຳ ຢູ່ທຸກບ່ອນທຸກທີ່ ແລະເທື່ອລະກ້າວເຊັ່ນຫລາຍຂະແຫນງການອຸດສາຫະກຳ ກ່ອນອື່ນຫມົດ ແມ່ນອຸດສາຫະກຳຫລອມໂລຫະ ໄດ້ເລີ່ມຕົ້ນດ້ວຍການກໍ່ສ້າງວິສາຫະກິດຂະຫນາດໃຫຍ່ໂລດ, ໃນນີ້ພວກນາຍທຶນຕ່າງປະເທດ ໄດ້ໃຫ້ການຊ່ວຍເຫລືອແກ່ ນາຍທຶນລັດເຊຍ.

ການເຕົ້າໂຮມເອົາ ຈຳນວນສ່ວນໃຫຍ່ ຂອງກຳມະກອນໄວ້ ໃນໂຮງ

ງານໃຫຍ່ໆ ແມ່ນຫນຶ່ງໃນບັນດາຈຸດພິເສດແຫ່ງການຂະຫຍາຍຕົວ ຂອງ ປະເທດລັດເຊຍ, ທີ່ໄດ້ຫລິ້ນບົດບາດອັນໃຫຍ່ຫລວງ ຢູ່ໃນຜົນສຳເລັດຂອງການປະຕິວັດ. ສະມາຊິກພັກໂບນເຊວິກ ໄດ້ດຳເນີນວຽກງານ ກ່ອນອື່ນໝົດ ແມ່ນຢູ່ໃນໂຮງງານໃຫຍ່ໆ ເຊັ່ນ: ວຽກງານໂຄສະນາ, ກໍ່ສ້າງພະນັກງານ ໃຫມ່ ເພື່ອປ່ຽນຜູ້ ທີ່ຖືກຕຳຫລວດລັບຈັບກຸມ, ສົ່ງໄປສັບພະຫູກ, ທຳຮ້າຍຢ່າງ ບໍ່ປະນີປະນອມ. ວິສາຫະກິດຂະຫນາດໃຫຍ່ ໄດ້ກາຍເປັນເຮືອນຮັງ, ເປັນກຳແພງຂອງພັກໂບນເຊວິກ*. ບໍ່ແມ່ນເລື່ອງບັງເອີນ ທີ່ກຳມະກອນເອີ້ນວິສາຫະກິດໃຫຍ່ໆ ເປັນ "ໂຮງງານ-ໂບນເຊວິກ".

ຄວາມຫລ້າຫລັງ ຂອງປະເທດລັດເຊຍ ບໍ່ແມ່ນຢູ່ບ່ອນວ່າ ມັນບໍ່ ມີລະບອບທຶນນິຍົມ, ແຕ່ຫາກຢູ່ບ່ອນວ່າ ທຶນນິຍົມນັ້ນ ຂະຫຍາຍຕົວອ່ອນນ້ອຍ . ມັນໄດ້ຖືກລົບກວນດ້ວຍຮ່ອງຮອຍເສດເຫລືອ ຂອງສັກດີນາ, ອຳນາດກະສິກຳ ທີ່ໄດ້ຄອບງຳປະເທດຊາດ ແລະພິເສດ ແມ່ນຊົນນະບົດ. ຊາວກຳມະຊີບໃນປະເທດລັດເຊຍຕົກທຸກໄດ້ຍາກ ມີສອງອັນຄື: ຍ້ອນການຂະຫຍາຍຕົວ ຂອງທຶນນິຍົມ ແລະກໍຍ້ອນ ມັນຂະຫຍາຍຕົວ ບໍ່ພຽງພໍ. ພວກນາຍທຶນ ໄດ້ຂູດຮີດ ຊາວກຳມາຊີບ ຢ່າງບໍ່ປະນີປະນອມ, ເພາະວ່າຢູ່ໃນສົມທະ ຂອງພວກເອົາມີກລາງ

24/VII
ຫາມຈຳໜາຍ

---

*ຢູ່ປະເທດລັດເຊຍຕັ້ງແຕ່ປີ 1903 ເປັນຕົ້ນມາ ນັກສັງຄົມ-ປະຊາທິປະໄຕທີ່ໄດ້ເລືອກເອົາເສັ້ນທາງການຕໍ່ສູ້ປະຕິວັດ, ທີ່ໄດ້ເດີນຕາມອຸດົມການຂອງມາກ ແລະອັງແກນຢ່າງສຸດກົກສຸດປາຍນັ້ນ ໄດ້ເອີ້ນຊື່ເປັນພວກໂບນເຊວິກ ( ສຽງສ່ວນຫລາຍ). "ນັກໂບນເຊວິກ" ຫມາຍເຖິງ "ນັກກອມມູນິດ".

ທັບແຮງງານສຳຮອງ ຢ່າງຫລວງຫລາຍຢູ່ຕະຫລອດເວລາເຊັ່ນວ່າ: ຢູ່ ໜ້າ ປະຕູ ຂອງໂຮງຈັກ,ໂຮງງານນັ້ນ ມີຊາວນາທຸກຈົນ ທີ່ໄດ້ໜີຈາກຊົນນະບົດ ຍ້ອນຄວາມອາດແຄນ ຢືນລຽນແຖວຍາວຢຽດຢູ່ ແລະກຽມພ້ອມ ຈະເຮັດວຽກ ດ້ວຍຄ່າແຮງງານຕໍ່າທີ່ສຸດ. ການຂະຫຍາຍຕົວທີ່ບໍ່ພຽງພໍ ຂອງທຶນນິຍົມ ອັນບໍ່ ທັນ ໄດ້ທັບມ້າງການສະກັດກັ້ນ ຂອງລະບອບຂ້າທາດກະສິກຳເທື່ອນັ້ນ ກໍ່ ໄດ້ ສົ່ງຜົນສະທ້ອນຢ່າງໜັກໜ່ວງ ໃສ່ສະພາບ ຂອງຊາວກຳມາຊີບ.ຕຳຫລວດ ໄດ້ຫ້າມກຳມະກອນ ບໍ່ໃຫ້ຈັດຕັ້ງ ແລະປ້ອງກັນສິດທິຂອງຕົນ.

ຊາວນາ ໄດ້ປະກອບເປັນສ່ວນໃຫຍ່ ຂອງກອງທັບຜູ້ ທີ່ຖືກຂູດຮີດ ທີ່ ມີຈຳນວນ ອັນມະຫາສານປະເພດຕ່າງໆ. ຢູ່ໃນຊົນນະບົດ ກໍຍັງແມ່ນເຈົ້າ ທີ່ ດິນ ເປັນຜູ້ເຈົ້າຄອບງຳ. ໃນປີ 1861 ເມື່ອໄດ້ປົດປ່ອຍຊາວນາ ອອກຈາກ ຄວາມເປັນທາດກະສິກຳແລ້ວ, ລັດຖະບານເຈົ້າຊາ ບໍ່ພຽງແຕ່ ບໍ່ໄດ້ຮັບ ປະ ກັນທີ່ດິນ ໃຫ້ພວກເຂົາ ຢ່າງພຽງພໍເທົ່ານັ້ນ, ກົງກັນຂ້າມ ຊ້ຳພັດຕັດແບ່ງພາກ ສ່ວນໜຶ່ງຂອງດິນ ຊຶ່ງຊາວນາ ເຄີຍມີແລະເຄີຍເຮັດເລີຍສ້າງມາແລ້ວ ນັ້ນ ໄປໃຫ້ເຈົ້າທີ່ດິນ. ຊາວນາ ທີ່ໄດ້ຖືກປົດປ່ອຍພຽງແຕ່ດ້ານຮູບນອກເທົ່ານັ້ນ,ໃນ ຕົວຈິງຍັງຕ້ອງໄດ້ຂຶ້ນ ກັບເຈົ້າທີ່ດິນອີກ ຍ້ອນການຊື້ດິນ ໃນລາຄາອັນມະຫາ ສານ. ຍິ່ງໄປກວ່ານັ້ນ ຜູ້ກຳອຳນາດ ຍັງໄດ້ຜູກມັດຊາວນາ ດ້ວຍການຈຳກັດ ທາງດ້ານກົດໝາຍ ທີ່ຫ້າມບໍ່ໃຫ້ເຂົາໜີ ຈາກຊົນນະບົດ, ຊຶ່ງຈຳເປັນ ຕ້ອງ ໄດ້ໄປກົ້ມຫົວ ໃຫ້ເຈົ້າທີ່ດິນຂອງຕົນ ພວກເກົ່ານັ້ນ ເພື່ອເຮັດເພື່ອສ້າງ ໃນ ຕອນດິນຂອງເຂົາ. ຕາມທາດແທ້ແລ້ວ ມັນກໍຍັງແມ່ນສະພາບຂ້າທາດກະສິກຳ ຢູ່ຄືເກົ່າ ຊຶ່ງໄດ້ດັດແປງໃໝ່ ທາງດ້ານກົດໝາຍ.

ດ້ວຍເຫດນັ້ນ ໜຶ່ງໃນບັນດາຂໍ້ຂັດແຍ່ງອັນສຳຄັນ ແລະສາເຫດ ອັນພື້ນຖານ ແຫ່ງຄວາມຫລ້າຫລັງ ຂອງປະເທດລັດເຊຍນັ້ນ ຈຶ່ງແມ່ນຂໍ້ຂັດ ແຍ່ງລະຫວ່າງຊຸດສາຫະກຳທຶນນິຍົມ ທີ່ຂະຫຍາຍຕົວບໍ່ສູງພໍເທົ່າໃດ ກັບຊົນນະບົດເຄິ່ງທາດກະສິກຳ.

ສະພາບຢູ່ໃນເຂດຊົນຊາດ ກໍ່ແຮ່ງໜັກໜ່ວງ ເປັນພິເສດ.ລະບອບເຈົ້າຊາ ໄດ້ຫັນປ່ຽນກົດໝາຍໝາໄນ ຂອງສັງຄົມຂູດຮີດ "ພົນແຍກ ແລະຄອບຄອງ!" ໃຫ້ເປັນລະບົບແຫ່ງການກົດຂີ່ຊົນເຜົ່າ ທີ່ບໍ່ແມ່ນລັດເຊຍ. ເຈົ້າຊາ ໄດ້ຊຸກ ໃຫ້ຊົນຊາດໜຶ່ງ ເປັນສັດຕູ ກັບຊົນຊາດໜຶ່ງ, ສ່ວນວ່າ ຢູ່ພາຍໃນ ຂອງແຕ່ລະຊົນຊາດນັ້ນ ເຂົາໄດ້ຊຸກຍູ້ ພວກເຈົ້ານາຍຜູ້ທີ່ມີຊື່ສຽງ ແລະຮັ່ງມີ ຂອງຊົນຊາດນັ້ນ ຕ້ານກັບປະຊາຊົນຜູ້ອອກແຮງງານ. ຊາວນາໄດ້ຖືກອັບໄລ່ ຈາກດິນ ທີ່ອຸດົມສົມບູນ ຊຶ່ງໄດ້ກາຍໄປເປັນກຳມະສິດ ຂອງເຈົ້າ ທີ່ດິນ, ຂອງອ້າລາຊະການຕຳຫລວດ ແລະພະນັກງານ ຂອງສຳນັກງານເຈົ້າຊາ.

ປະຊາຊາດ ທີ່ຖືກກົດຂີ່ ບໍ່ໄດ້ມີສິດແນວໃດໝົດ. ພວກເຂົາໄດ້ ຖືກຫ້າມ ພິມຈຳໜ່າຍປຶ້ມ ແລະໜັງສືພິມ ເປັນພາສາຕົນເອງ. ຢູ່ໃນໂຮງຮຽນທີ່ມີຫລວງຫລາຍເທົ່າໃດນັ້ນ ກໍ່ບໍ່ໄດ້ອະນຸຍາດ ໃຫ້ມີການສອນເປັນພາສາຂອງຕົນເອງ. ສຳລັບສ່ວນໃຫຍ່ ຂອງຊົນຊາດ ທີ່ບໍ່ແມ່ນລັດເຊຍໄດ້ ເຈົ້າໜ້າທີ່ໃສ່ຊື່ ໃຫ້ພວກເຂົາ ຢ່າງເປັນທາງການເປັນ "ພວກຊົນຊາດອື່ນ".

ມະຫາຊົນສ່ວນໃຫຍ່ທັງໝົດເຫລົ່ານີ້ ປະກອບເປັນປະຊາຊົນ ຊຶ່ງຖືກປົກຄອງ ດ້ວຍກຸ່ມເຈົ້າທີ່ດິນ ໂດຍການເປັນຫົວໜ້າ ຂອງເຈົ້າທີ່ດິນ ທີ່ໃຫຍ່

ກວ່າຫມູ່ ເຊັ່ນລຸ່ມພໍ່ເຈົ້າຊາ ທີ່ປົກຄອງປະເທດໂດຍຮ່ວມທັວ ຢ່າງແຫນ້ນແຟ້ນ ເອົາກັບກຸ່ມນາຍທຶນໃຫມ່.

ຜູ້ໃດ ຈະສາມາດປຸກລະດົມ ແລະຈັດຕັ້ງມະຫາຊົນ ອັນຫລວງຫລາຍ ນີ້ ລຸກຂຶ້ນຕໍ່ສູ້ ເພື່ອປົດປ່ອຍຕົນເອງ ອອກຈາກ ການກົດຂີ່ຂົ່ມເຫັງ ແລະຄວາມ ທຸກຍາກຫລ້າຫລັງ ?

ການປະຕິວັດລັດເຊຍ ເທື່ອທີຫນຶ່ງ ທີ່ໄດ້ເຮັດໃຫ້ປະເທດລັດເຊຍສັ່ນ ສະເທືອນ ໃນປີ 1905-1907 ນັ້ນ ໄດ້ຕອບຕໍ່ບັນຫານີ້ແລ້ວ. ຢູ່ໃນການປະ ຕິວັດທຸກໆຊົນຊັ້ນ ໄດ້ສະແດງຕົນເອງອອກຢູ່ ໃນການກະທຳ,ທັງຫມົດໄດ້ເປີດ ແບ ໃຫ້ເຫັນກຳລັງແຮງ ແລະຄວາມສາມາດ ຂອງຕົນ. ການປະຕິວັດ ໄດ້ ຖືກປະລະໄຊ, ແຕ່ວ່າມະຫາຊົນ ທີ່ມີຈຳນວນຫລວງຫລາຍໄດ້ ມອງເຫັນທຸກໆ ຊົນຊັ້ນຢູ່ ໃນການຕໍ່ສູ້, ສາມາດສົມທຽບໂຄງການຂອງເຂົາ ກັບການກະທຳ ແລະກໍ່ເຂົ້າໃຈ, ເລືອກເອົາກຳລັງແຮງ ທີ່ຈະສາມາດປົດປ່ອຍຊາວຜູ້ອອກແຮງ ງານ ອອກຈາກການກົດຂີ່.

ແຕ່ວ່າລະບອບເຈົ້າຊາ ທີ່ໄດ້ຖືກນາບຂູ່ ດ້ວຍການປະຕິວັດນັ້ນ ຈຳ ຕ້ອງ ໄດ້ກ້າວໄປຫາບ່ອນລົງລອຍ. ພວກນັກໃຫ້ຄຳສະບສະໄຫມໃຫມ່ຊຶ່ງແມ່ນ ປະເພດນັກປາດ ທີ່ຈອມປອມ ໄດ້ຄາດຄະເນວ່າ: ຈຳເປັນບໍ່ທີ່ຈະກ້າວໄປຕາ ການປະຕິຮູບຕື່ມອີກ. ແຕ່ວ່າ ຈະກ້າວໄປຫາ ການລົງລອຍ ຫລາຍໂພດນັ້ນ ກໍ່ຫມາຍຄວາມວ່າ ຈະບໍ່ມີລະບອບເຈົ້າຊາ. ໃຫ້ລອງຄິດເບິ່ງວ່າ, ລຸ້ມພໍ່ຂອງ ລະບອບເຈົ້າຊາ ທີ່ມີອຳນາດ ຢ່າງບໍ່ມີຂອບເຂດໄດ້ ເຊັ່ນຄຳສັ່ງກ່ຽວກັບການ ຈັດຕັ້ງລັດຖະສະພາ (ດູມາ) ຢູ່ປະເທດລັດເຊຍ! ນາຍທຶນທົ່ວໂລກ ໄດ້ ຖະ

ແຫລງກ່ຽວກັບ ລັດຖະສະພາ ດູມາ ນີ້ວ່າ ບໍ່ແມ່ນລັດຖະສະພາ ແທ້ຈິງ. ແຕ່ຄວາມຈິງ ມັນກໍຍັງໄກແທ້ ທີ່ຈະແມ່ນລັດຖະສະພາ. ມັນບໍ່ມີສິດ ເລືອກຕັ້ງແລະກວດກາລັດຖະບານ ທີ່ຢູ່ໃຕ້ຄວາມຮັບຜິດຊອບ ຂອງມັນ.

ເຈົ້າຊາກຽມພ້ອມ ທີ່ຈະລົ່ງລອຍ ຊຶ່ງຈະແຕະຕ້ອງເຖິງສິດພົນ ປະໂຫຍດສ່ວນໃດສ່ວນໜຶ່ງ ຂອງເຈົ້າທີ່ດິນ, ແຕ່ວ່າກໍບໍ່ໃຫ້ອຳນາດເຈົ້າຊາອ່ອນເພຍ. ໃນປີ 1906 ຍ້ອນການລຸກຮືຂຶ້ນຕໍ່ສູ້ປະຕິວັດຂອງຊາວນາ ຢ່າງຟົດເດືອດ, ສະໂຕລືຍປິນ ລັດຖະມູນຕີເຈົ້າຊາ ໄດ້ສະເໜີ ໃຫ້ແບ່ງຕອນດິນ ທີ່ແນ່ນອນ ໃຫ້ຊາວນາ, ແຕ່ບໍ່ແມ່ນແບ່ງດິນ ຂອງເຈົ້າທີ່ດິນ ແຕ່ຫາກແບ່ງຈາກດິນ ຂອງພວກເຂົາເອງ. ແຜນການ ຂອງ ສະໂຕລືຍປິນ ຈະນຳໄປສູ່ ການມອບກຳມະສິດໃຫ້ຊາວນາ ດ້ວຍການຊື້ໂອນເອົາທີ່ດິນ ທີ່ພວກເຂົາໄດ້ເປັນເຈົ້າຂອງແບບສະຫະຊີບ. ການຄິດໄລ່ ຂອງພວກກຳອຳນາດນີ້ ແນໃສ່ບ່ອນວ່າ , ຊາວນາຮັ່ງຈະຊື້ດິນມາພີ່ມເຕີມສ່ວນຊາວນາທຸກຊຶ່ງບໍ່ມີຄວາມສາມາດ ທີ່ຈະປູກຈະຝັງ ແມ່ນແຕ່ໃນຕອນດິນ ທີ່ໄດ້ມອບໃຫ້ນັ້ນ ຈຳເປັນຕ້ອງ ໄດ້ຂາຍຕອນດິນນ້ອຍໆນັ້ນ ໃຫ້ພວກຊາວນາຮັ່ງ.ແປັນຢັນທາງດ້ານສັງຄົມ ຂອງລະບອບ ເຈົ້າຊາ ໃນໂສມໜ້າ ຂອງພວກຊາວນາຮັ່ງ ໄດ້ຖືກສ້າງຂຶ້ນ ດ້ວຍວິທີແຫລະໃນຊົມນະບົດ.

ອັນນີ້ ມັນໄດ້ເຮັດໃຫ້ ການຕໍ່ສູ້ ລະຫວ່າງພວກຊາວນາຮັ່ງ ແລະຊາວນາທຸກຈົນຂັ້ນຮ້ຽວຂາດຂຶ້ນຕື່ມ. ຍາມກາງຄືນທອງຟ້າ ມັກຈະຮຸ່ງແຈ້ງຂຶ້ນເລື້ອຍໆ ຍ້ອນແສງສະຫວ່າງ ຂອງແປວໄຟ ແຫ່ງຄວາມແຄ້ນ ເຊັ່ນ: ການລັກຈູດເລົ້າເຂົ້າເຮືອນຊານ ຂອງເຈົ້າທີ່ດິນ. ລະບອບເຈົ້າຊາ ໄດ້ເລີ່ມຕົ້ນປະຕິບັດມາດ

ຕາກການ ແຫ່ງການປາບປາມການປະຕິວັດ ຄືແນວນີ້ແຫລະ, ແຕ່ວ່າ ໃນທີ່ສຸດ ຊ້ຳພັດແຮ່ງເຮັດ ໃຫ້ການປະຕິວັດ ມີເຂົ້າມາເລື້ອຍໆ.

ພວກນາຍທຶນ ບໍ່ມີແຮງ ທີ່ຈະຈັດຕັ້ງ ມະຫາຊົນ ເພື່ອຕໍ່ສູ້ ປົດປ່ອຍ ອອກຈາກແອກກົດຂີ່ ຂອງລະບອບອ້າຫາດກະສິກຳ, ອອກຈາກຄວາມໄຮ້ ກົດຫມາຍ ແລະການກົດຂີ່ຂົ່ມເຫັງ ຂອງລະບອບເຈົ້າຊາໄດ້. ນາຍທຶນ ລັດເຊຍ ໄດ້ປາກົດຕົວຂຶ້ນ ໃນເວທີການເມືອງ ໃນຖານະທີ່ເປັນປັດໃຈ ແຫ່ງການ ກະທົບ ທີ່ຕັ້ງຫນ້າ, ໃນເມື່ອວ່າຢູ່ ໃນບັນດາປະເທດອຸດສາຫະກຳຊາວກຳມາຊີບ ໄດ້ເຕີບໃຫຍ່ແລ້ວ ແລະໄດ້ສະແດງຄຳຮຽກຮ້ອງ ຂອງຕົນຕໍ່ອຳນາດການປົກຄອງແລ້ວ. ພັກທີ່ສຳຄັນ ຂອງນາຍທຶນ ໄດ້ເພີຍແຜ ໃຫ້ເຫັນເປົ້າຫມາຍຂອງຕົນ ຢູ່ໃນກະໂຕຂອງຊື່ພັກນັ້ນເອງຄື - ພັກຂອງນັກປະຊາທິປະໄຕລັດຖະບັນຍັດ, ຫມາຍຄວາມວ່າ ແມ່ນພັກ ຂອງພວກລາຊາທິປະໄຕລັດຖະບັນຍັດ. ປະຊາຊົນເອີ້ນພັກ ຂອງພວກນັ້ສັ້ນໆ ວ່າພວກກາເດ. ໃນເວລາເກີດການປະຕິວັດລັດເຊຍເທື່ອທີ່ຫນຶ່ງ ພວກກະເດ ໄດ້ດຳເນີນການເຈລະຈາລັບ ກັບ ລະບອບເຈົ້າຊາ ກ່ຽວກັບການເຂົ້າຮ່ວມ ໃນລັດຖະບານ ຂອງເຈົ້າຊາ.ນາຍທຶນ ຢ້ານຈະໄດ້ຕໍ່ສູ້ຫນຶ່ງຕໍ່ຫນຶ່ງ ກັບຊາວກຳມາຊີບ ແລະເພື່ອປ້ອງກັນຕົວ ພວກເຂົາ ຈຶ່ງຈຳເປັນຕ້ອງໃຫ້ມີລະບອບເຈົ້າຊາ.

ນາຍທຶນ ຕ້ອງການລະບອບເຈົ້າຊາ ຄືກັນກັບຕ້ອງການກຳລັງ ຕຳຫລວດ. ຢູ່ໃນຕະຫລາດພາຍນອກ, ບ່ອນທີ່ມີຜົນດີ ທັງຫມົດ ຢູ່ໃນພົບນີ້ ໄດ້ຖືກມະຫາອຳນາດໃຫຍ່ໆ ຍຶດຈອງໄວ້ ແຕ່ດົນແລ້ວ. ພວກນາຍທຶນລັດເຊຍຈະສາມາດຊອກຫາ ບ່ອນແນວນັ້ນ ໄດ້ກໍ່ມີແຕ່ ດ້ວຍກຳລັງ, ແຕ່ວ່າກຳລັງນີ້ຕົກຢູ່

ໃນກຳມື ຂອງເຈົ້າຊາຫມົດ ຊຶ່ງມີກອງທັບອັນໃຫຍ່ໂຕ. ຈາກບ່ອນນີ້ ຈຶ່ງ ໄດ້ ໃຫ້ການສະຫນັບສະຫນູນ ຢ່າງເປັນປະຈຳນະໂຍບາຍການເມືອງ ແຫ່ງຊາດ ຂອງເຈົ້າຊາ ຊຶ່ງແມ່ນນະໂຍບາຍ ແຫ່ງການກົດຂີ່ ຢ່າງຮ້າຍກາດ ແລະ ໄຮ້ສິດທິ. ພ້ອມນີ້, ຫນຶ່ງໃນຂັ້ນຕາສາຍເຫດ ແຫ່ງການຄົງຕົວ ຢ່າງຍາວ ນານ ຂອງລະບອບເຈົ້າຊາ ຢູ່ລັດເຊຍກໍແມ່ນຢູ່ ໃນການສະຫນັບສະຫນູນນີ້ ແຫລະ ເຊັ່ນ: ເມື່ອໄດ້ປະເຊີນຫນ້າ ກັບສິ່ງສະກັດກັ້ນ ຂອງລະບອບຂ້າທາດກະສິກຳ ຈຶ່ງໄດ້ກົດຫນ່ວງການຂະຫຍາຍຕົວ ຂອງກຳລັງການຜະລິດນັ້ນ ທຶນນິຍົມ ຈະ ຕ້ອງແຜ່ຂະຫຍາຍ ໄປຕາມລວງກວ້າງ ຍ້ອນເນື້ອ ທີ່ພາຍໃນ ແລະສ່ວນຫນຶ່ງ ແມ່ນຍ້ອນຕະຫລາດພາຍນອກ; ຄວາມສາມາດຄືແນວນີ້ ແຫ່ງການເປີດກວ້າງ ທຶນນິຍົມ ໄດ້ແກ່ຍາວ, ໄດ້ໂຈະການແກ້ໄຂຂໍ້ຂັດແຍ່ງພາຍໃນ ຂອງປະເທດ ໄວ້ຕື່ມອີກຫນ້ອຍຫນຶ່ງ.

ຂະບວນການປະຕິວັດ ໃນປະເທດລັດເຊຍ ໄດ້ສະແດງໃຫ້ເຫັນວ່າ, ມີແຕ່ຊາວກຳມາຊີບເທົ່ານັ້ນ ສາມາດກາຍເປັນຜູ້ນຳພາ ແລະຜູ້ຈັດຕັ້ງ ມະຫາ ຊົນຊາວຜູ້ອອກແຮງງານທັງຫມົດໄດ້ .ເມື່ອກ້າວເຂົ້າຊຸມປີ 70 ຂອງ ສະຕະ ວັດທີ່ຜ່ານມາ ຊົນຊັ້ນກຳມະກອນລັດເຊຍ ທີ່ກ້າວສູ່ເສັ້ນທາງ ແຫ່ງການຕໍ່ສູ້ປະ ຕິວັດ ເພື່ອສິດທິຂອງຕົນຫາ ກໍໄດ້ພຽງແຕ່ 15ປີເທົ່ານັ້ນ ກໍໄດ້ບັງຄັບ ໃຫ້ລະ ບອບເຈົ້າຊາ ຕ້ອງອອກກົດຫມາຍ ອັນທຳອິດ ກ່ຽວກັບໂຮງງານ, ຊຶ່ງ ວ່າ ຕາມກົດຫມາຍນັ້ນ ເງິນປັບໄຫມ ທີ່ພວກເຈົ້າ ຂອງໂຮງງານໄດ້ ບັງເອົາ ຕາມລຳພັງໃຈ ຈາກກຳມະກອນນັ້ນ ໄດ້ຕົກມາຕອບສະຫນອງຄວາມຕ້ອງການ ຂອງກຳມະກອນ ແຕ່ບໍ່ແມ່ນໄປຮັບໃຊ້ ໃຫ້ພວກເຈົ້າ ຂອງໂຮງງານອີກ. ໃນ

ປະເທດທຶນນິຍົມ ທີ່ຂະຫຍາຍຕົວກຳມະກອນ ໄດ້ບັນລຸກົດຫມາຍອັນທຳອິດກ່ຽວກັບໂຮງງານນີ້ ພາຍຫລັງການຕໍ່ສູ້ຕັ້ງຫລາຍໆສິບປີ. ຊາວກຳມາຊີບປະເທດລັດເຊຍ ໄດ້ສ້າງພັກ ຂອງຕົນເອງຂຶ້ນກ່ອນຊົນຊັ້ນອື່ນໆ ແລະພ້ອມນັ້ນ ກໍ ໄດ້ສະແດງໃຫ້ເຫັນຄວາມຕື່ນຕົວ ທາງດ້ານການເມືອງ ໃນລະດັບສູງ ຂອງຕົນອີກນຳ. ພັກກໍບໍ່ແມ່ນພັກ ແບບທຳມະດາ ອີງນັກສັງຄົມ -ປະຊາທິປະໄຕສ່ວນໃຫຍ່ ໃນເວລານັ້ນເຄີຍໄດ້ຮູ້ໄດ້ເຫັນ. ພັກສັງຄົມ - ປະຊາທິປະໄຕ ສ່ວນໃຫຍ່ ໄດ້ປັບຕົວ ເພື່ອຮັບໃຊ້ ໃຫ້ແກ່ຮູບການຕໍ່ສູ້ ແບບໃຊ້ລັດຖະສະພາ.ວ.ອ. ເລນິນ ໄດ້ສ້າງຕັ້ງພັກ ທີ່ມີລັກສະນະສູ້ຮົບ, ມີລັກສະນະປະຕິວັດ ຂອງຊາວກຳມາຊີບ, ພັກແບບໃຫມ່ ທີ່ເປັນຕົວແທນ ບໍ່ພຽງແຕ່ ໃຫ້ແກ່ຊາວກຳມາຊີບລັດເຊຍເທົ່ານັ້ນ, ແຕ່ຍັງເປັນຕົວແທນ ໃຫ້ແກ່ຫມູກາງຊົນຊາດ ຂອງປະເທດ, ອີງກຽມພ້ອມ ແລະມີຄວາມສາມາດ ນຳພາຊາວກຳມາຊີບ ໃນການຕໍ່ສູ້ ປະຕິວັດ ຂອງເຂົາ.

ຢູ່ພາຍໃນ ຊາວກຳມາຊີບລັດເຊຍໄດ້ເກີດມີສະພາໂຊວຽດ ຂອງຜູ້ແທນກຳມະກອນ ທີ່ເລນິນ ໄດ້ຕີລາຄາ ໃນທັນທີໂລດວ່າ ມັນແມ່ນບໍ່ພຽງ ແຕ່ຮູບການການຈັດຕັ້ງ ຂອງຊົນຊັ້ນກຳມະກອນເທົ່ານັ້ນ, ແຕ່ຍັງແມ່ນຮູບການອຳນາດແບບໃຫມ່ອີກດ້ວຍ.ປະຊາຊົນທັງຫມົດໄດ້ຮັບຮູ້ ບັນດາອົງການຈັດຕັ້ງຂອງພັນທະພາບກຳມະກອນແລະຊາວນາ. ຮູບການການຕໍ່ສູ້ ຂອງຊາວກຳມາຊີບ, ກ່ອນອື່ນຫມົດ ແມ່ນການນັດຢຸດງານ, ກໍ່ໄດ້ຖືກປະກອບເປັນອາວຸດ ໃຫ້ແກ່ຊົນຄົນອື່ນໆ ຂອງຊາວຜູ້ອອກແຮງງານ. ອິດທິພົນ ແລະບົດບາດ ຂອງຊາວກຳມາຊີບ ຢູ່ໃນການຕໍ່ສູ້ທົ່ວປວງຊົນ ກໍ່ໄດ້ສະແດງອອກ ຢ່າງຈະແຈ້ງ ຢູ່ບ່ອນ ນີ້

ຂອງ.

ຕາມສ່ວນປະກອບ ແລະຕາມແນວຄິດແລ້ວ ຊາວກຳມາຊີບ ລັດເຊຍ ແມ່ນສາກົນທີ່ສຸດ. ຊາວກຳມາຊີບລັດເຊຍ ເກືອບຈະບໍ່ຮູ້ "ກຳມະກອນ ຊຸນນາງ", ຍ້ອນວ່າ ພວກນາຍທຶນລັດເຊຍ ບໍ່ມີພາຫະນະ ເພີ່ມເຕີມ ແຫ່ງການຊື້ຈ້າງທາງສັງຄົມ,ດັ່ງທີ່ມະຫາອຳນາດທຶນນິຍົມ ທີ່ຂະຫຍາຍຕົວ ເຄີຍມີ ຍ້ອນການປຸ້ນສະດົມເມືອງຂຶ້ນ.

ພັກໂບນເຊວິກ ສາມາດສະກັດກັ້ນກຳມະກອນ ໃຫ້ພົ້ນ ຈາກລັດທິສວຍໂອກາດ ແລະຖະຫນຸຖະຫນອມມູນເຊື້ອປະຕິວັດ ຂອງການປະຕິວັດລັດເຊຍ ເທື່ອທີ່ຫນຶ່ງໄວ້ໄດ້. ພຽງແຕ່ສາມປີ ຫລັງຈາກການປະລະໄຊຂອງມັນ, ໃນປີ 1910 ຊາວກຳມາຊີບລັດເຊຍ ກໍໄດ້ລຸກຂຶ້ນອີກເທື່ອໃຫມ່ ດ້ວຍຄຳຮຽກຮ້ອງປະຕິວັດຂອງຕົນ.ໃນເດືອນກໍລະກົດປີ 1914 ໄດ້ເກີດມີກຳແພງປ້ອງກັນການສູ້ຮົບຢູ່ ຕາມຖະຫນົນຂອງເມືອງ ເປໂຕຣກຣາດ. ແຕ່ວ່າສົງຄາມໂລກ ທີ່ໄດ້ຂະຫຍາຍຕົວຢ່າງວ່ອງໄວ ໄດ້ຕັດຂາດການເຕີບໃຫຍ່ ຂອງການປະຕິວັດ.

## ຈຸດເລີ່ມຂອງສົງຄາມໂລກຄັ້ງທີ່ຫນຶ່ງ

ຜູ້ສ້າງ "ທິດສະດີ" ທີ່ເວົ້າວ່າ ສົງຄາມແມ່ນສາຍເຫດ ຂອງ ການປະຕິວັດ, ພວມພະຍາຍາມວາງຕົນ ເພື່ອຮັບໃຊ້ໃຫ້ແກ່ເຫດການທາງປະຫວັດສາດ ເຊັ່ນວ່າ: ສົງຄາມລັດເຊຍ-ຍີ່ປຸ່ນ ປີ 1904-1905 ໄດ້ເຮັດໃຫ້ເກີດ

ມີການປະຕິວັດລັດເຊຍ ເທື່ອທີໜຶ່ງ, ສົງຄາມໂລກຄັ້ງທີໜຶ່ງ ໄດ້ເຮັດໃຫ້ເກີດມີ ການປະຕິວັດເດືອນກຸມພາ ແລະເດືອນຕຸລາ, ສົງຄາມໂລກຄັ້ງທີສອງໄດ້ກາຍເປັນສາຍເຫດ ຂອງການປະຕິວັດສັງຄົມນິຍົມອື່ນໆອີກຫລາຍອັນ ໃນທະວີບເອີລົບ, ອາຊີ, ອາເມລິກາ...

ແຕ່ວ່າຄວາມກົງກັນ ຂອງມູນຄວາມຈິງ ທາງປະຫວັດສາດນີ້ ບໍ່ ໄດ້ແມ່ນສິ່ງອ້າງອີງເລີຍ: ຕ້ອງຈຳແນກເຫດ ແລະຜົນ ຢ່າງເຄັ່ງຄັດ.

ການປະຕິວັດບໍ່ອາດຈະເກີດຂຶ້ນໄດ້ ໂດຍປະສາຈາກສະພາວະການປະຕິວັດ ໃນເບື້ອງຕົ້ນ ແລະໂດຍປາສະຈາກວິກິດການລວມແຫ່ງຊາດ ໝາຍຄວາມວ່າ ບໍ່ສາມາດຈະເກີດຂຶ້ນໄດ້ ໂດຍປາສະຈາກສະພາບການ, ໃນເມື່ອວ່າ ຊົນຊັ້ນປົກຄອງ ບໍ່ສາມາດຈະຄຸ້ມຄອງປະເທດຊາດໄດ້ແລ້ວ, ບໍ່ມີຄວາມສາມາດແກ້ໄຂ ຂໍ້ຂັດແຍ່ງ ທີ່ຈະເຮັດໃຫ້ສັງຄົມນັ້ນພັງທະລາຍ, ສ່ວນວ່າ ຂັ້ນລຸ່ມຂອງສັງຄົມ, ຊາວຜູ້ອອກແຮງງານນັ້ນ ກໍບໍ່ຕ້ອງການຈະດຳລົງຊີວິດ ຕາມແບບເກົ່າອີກແລ້ວ ແລະອັນນີ້ມັນ ຊີ້ແຈງໃຫ້ເຫັນເຖິງການເພີ່ມທະວີການ ຕໍ່ສູ້ຢ່າງກວ້າງຂວາງ. ສະພາວະການ ອັນແຫລມຄົມຄືແນວນີ້ ບໍ່ແມ່ນຈະເກີດຂຶ້ນຄາວໜຶ່ງຄາວດຽວ. ມັນ ໄດ້ຖືກສ້າງຂຶ້ນ ດ້ວຍບາດກ້າວທັງໝົດ ແຫ່ງການຂະຫຍາຍຕົວ ຂອງສັງຄົມ, ດ້ວຍເງື່ອນໄຂທັງໝົດແຫ່ງການດຳລົງຊີວິດ. ໃນປະເທດລັດເຊຍ ເຄີຍມີສະພາວະການປະຕິວັດສາມຄັ້ງ ຄືໃນຕອນທ້າຍຊຸມ ປີ 50 ແລະຕອນທ້າຍຊຸມປີ 70 ຂອງສະຕະວັດ ທີ 19 ແລະໃນຕອນຕົ້ນ ຂອງສະຕະວັດທີ 20. ໃນນີ້ມີພຽງແຕ່ສະພາວະການຄັ້ງທີສາມ ເທົ່ານັ້ນ ໄດ້ ກາຍເປັນການປະຕິວັດ ແລະສົງຄາມ ກໍໄດ້ເລັ່ງລັດ ການຂ້າມຜ່ານ ອັນນີ້. ສົງ

ຄາມ ກໍແມ່ນອັນສ່ວນປະກອບ ໃນສະພາວະການປະຕິວັດ, ເຮັດໃຫ້ຂໍ້ຂັດແຍ່ງ ຂັ້ນຮວຂາດ.

ພົນສະທ້ອນຂອງສົງຄາມໂລກ ຄັ້ງທີ່ໜຶ່ງ ທີ່ຈັກກະພັດ ໄດ້ກໍ່ອັນ ນັ້ນ ເປັນແນວນີ້ແຫລະ. ໃນເຄິ່ງທີ່ສອງ ຂອງສະຕະວັດທີ 19 ປະເທດເຢຍລະ ມັນ ໄດ້ຖືກພົ້ນໄປ ດ້ວຍຢາດຝັນຄໍາແຫ່ງການໃຊ້ຄ່າເສຍຫາຍ ,ຈາກປະເທດ ຝະລັ່ງພາຍຫລັງ ທີ່ໄດ້ຮັບໄຊຊະນະໃນສົງຄາມ ແລະໄດ້ໄລ່ທັນປະເທດອັງກິດ ແລະຝະລັ່ງ ທາງດ້ານອຸດສາຫະກໍາ. ປະເທດເຢຍລະມັນ ໄດ້ທວງເອົາ ອັດ ຕາສ່ວນລາຍໄດ້ ຂອງໂລກ ຢ່າງຫລວງຫລາຍ ໃຫ້ແກ່ຕົນເອງ. ແຕ່ຍ້ອນວ່າ ຮອດຕອນທ້າຍ ຂອງສະຕະວັດແລ້ວນີ້ ໝົດທັງໂລກໄດ້ຖືກແບ່ງໝົດແລ້ວ ລະ ຫວ່າງມະຫາອໍານາດໃຫຍ່ໆ, ດ້ວຍເຫດນັ້ນ ພວກນາຍທຶນເຢຍລະມັນ ຈະສາ ມາດໄດ້ຮັບອັດຕາສ່ວນເຫລົ່ານັ້ນ ກໍຕ້ອງມີແຕ່ດ້ວຍການໃຊ້ກໍາລັງເທົ່ານັ້ນ.

ວັນທີ 1 ເດືອນສິງຫາ ປີ 1914 ສົງຄາມ ເພື່ອແບ່ງໂລກ ທີ່ ໄດ້ ແບ່ງແລ້ວນັ້ນ ຄືນໃໝ່ ໄດ້ເກີດຂຶ້ນ. ພວກຊົນຊັ້ນປົກຄອງ ຂອງທັງສອງກຸ່ມ ໄດ້ປະກາດວ່າສົງຄາມນີ້ ແມ່ນສົງຄາມປ້ອງກັນ, ເປັນທໍາ, ສົງຄາມຊາດ. ໃນຕົວຈິງແລ້ວມັນ ແມ່ນສົງຄາມຈັກກະພັດ,ສົງຄາມອະທໍາ ສໍາລັບຝ່າຍອັງກິດ, ຝະລັ່ງ,ລັດເຊຍ ແລະພັນທະມິດ ຂອງເຂົາ ກໍຄືສໍາລັບຝ່າຍເຢຍລະມັນ ແລະ ພັກພວກຂອງມັນ.

ຍັງມີສາຍເຫດອີກອັນໜຶ່ງ ທີ່ເລັ່ງລັດການເລີ່ມຕົ້ນ ຂອງສົງຄາມ.ຄື ການເພີ່ມທະວີຂະບວນການປະຕິວັດ ຂອງຊາວກໍາມາຊີບ ໃນຫລາຍປະເທດອຸດ ສາຫະກໍາ ທີ່ຂະຫຍາຍຕົວ. ຊົນຊັ້ນປົກຄອງ ມີຄວາມຫວັງວ່າ ຈະສາມາດຢັບ

ຢັ້ງ, ເອົາຊະນະຈີນຈັ້ນ ທີ່ໄດ້ຊຸບຫລໍ່, ເຂັ້ມແຂງ, ບັງຄັບ ໃຫ້ຊາວກຳມາຊີບຂອງປະເທດຕ່າງໆ ເຂັ້ນອ້າກັນ, ເຂັ້ນອ້າພາກສ່ວນ ທີ່ດີເດັ່ນ ຂອງຊົນຊັ້ນເຊັ່ນ-ຊຸ່ມຄົນ ທີ່ໜຸ່ມນ້ອຍ, ຫ້າວຫັນ, ຊຶ່ງກຽມພ້ອມແລ້ວ ທີ່ຈະແກ້ໄຂ ບັນຫາ ກ່ຽວກັບອຳນາດ.

ພວກນາຍທຶນ ໄດ້ສະໜັບສະໜູນ ຢ່າງເຕັມ ສ່ວນນະໂຍບາຍການເມືອງ ຂອງເຈົ້າຊາ ທີ່ໄດ້ສັນຍາ ຈະໃຫ້ກຳໄລອັນມະຫາສານ ແກ່ພວກເຂົາ. ແຕ່ວ່າຈັກກະພັດລັດເຊຍ ຊ້ຳພັດອອ່ນເພຍກວ່າຈັກກະພັດອື່ນໆ. ຄວາມຫລ້າຫລັງລວມ ຂອງປະເທດໄດ້ນຳໄປສູ່ການປະລາໄຊ ຢ່າງວ່ອງໄວຢູ່ ໃນແນວຣົບ, ເຖິງວ່າ ຈະມີລັດທິວິລະຊົນ ແລະຄວາມເດັດດ່ຽວ ຂອງທະຫານກໍຕາມ. 30 ເດືອນ ຂອງສົງຄາມ, ປະເທດລັດເຊຍເຈົ້າຊາ ຊຶ່ງປຽບເໝືອນຮູບນັ້ນອະໜາດໃຫຍ່ ທີ່ໃຊ້ດິນດາກເຮັດຂານັ້ນ ໄດ້ຖືກທຳລາຍ ຢ່າງໜັກ.

ການປະລາໄຊ, ການສູນເສຍກຳລັງຄົນ ຢ່າງຫລວງຫລາຍ ຢູ່ ໃນແນວຣົບ, ຄວາມອຶດຫິວ ແລະການຖືກທຳລາຍເຜົາຜານ ຢູ່ແນວຫລັງໄດ້ເຮັດໃຫ້ເກີດມີ ຄວາມບໍ່ພໍໃຈ ຢ່າງກວ້າງຂວາງ. ຈຳນວນ ຂອງຜູ້ທີ່ໄດ້ເຂົ້າຮ່ວມໃນການຢຸດງານ ໃນປີ 1916 ມີເຖິງ 1 ລ້ານ 5 ແສນຄົນ. ທາງດ້ານຄວາມຫ້າວຫັນ ໃນການຕໍ່ສູ້ຢຸດງານ, ຊາວກຳມາຊີບລັດເຊຍ ໄດ້ນຳໜ້າທຸກໆປະເທດທີ່ສູ້ຣົບ.

ປະເທດ ໄດ້ຕົກຢູ່ ໃນໄລຍະແຫ່ງການຄອງຄອຍການປະຕິວັດ.

ລະບອບເຈົ້າຊາ ເຊື່ອໝັ້ນ ດ້ວຍຄວາມກະວົນກະວາຍ, ວ່າການໜີບຮັດ ຈະບໍ່ສາມາດບັນລຸເປົ້າໝາຍໄດ້. ຢູ່ໃນກຸ່ມຊຸນນາງ ໄດ້ເລີ່ມຕົ້ນຄິດ

ເຖິງການຢຸດເຊົາສົງຄາມແລ້ວ. ບາດລ້ຽວສູ່ນະໂຍບາຍການເມືອງ ຈາກ ສົງຄາມສູ່ສັນຕິພາບນັ້ນ ແມ່ນສັບສົນທີ່ສຸດ ແລະສຸດທີ່ອັນຕະລາຍສຳລັບລະບອບເຈົ້າຊາ. ພວກນາຍທຶນ ບໍ່ຕ້ອງການໄດ້ງິນ ກ່ຽວກັບການຢຸດເຊົາສົງຄາມ ທີ່ໄດ້ນຳເອົາກຳໄລຈຳນວນມະຫາສານມາໃຫ້ພວກເຂົາ. ລັດຖະບານ ຂອງມະຫາອຳນາດພັນທະມິດ ໄດ້ເກີດມີຄວາມສົງໄສ ຕໍ່ກົນອຸບາຍຂອງເຈົ້າຊາ ໂດຍຢ້ານວ່າ ຈະສູນເສຍ "ຊິ້ນຕ່ອນໃຫຍ່" ທີ່ປະເທດລັດເຊຍເຄີຍມີສຳລັບພວກເຂົາ. ໂດຍໄດ້ສວຍໃຊ້ສາຍພົວພັນ ທາງຍາດພີ່ນ້ອງ ທີ່ເຄີຍມີລະຫວ່າງເຊື້ອເຈົ້າລັດເຊຍ ແລະເຢຍລະມັນ, ເຈົ້າຊາໄດ້ເລີ່ມຕົ້ນເຈລະຈາແບບປິດລັບທີ່ສຸດ ກ່ຽວກັບຄວາມອາດສາມາດ ໃນການເຊັນສັນຍາສັນຕິພາບ ແຕ່ຝ່າຍດຽວ ເພື່ອຈະເຊົາສູ້ຮົບຢູ່ ແນວຮົບ ແລະສຸມທຸກກຳລັງ ເພື່ອທັບມ້າງ ການປະຕິວັດ ທີ່ຈະ ເກີດຂຶ້ນ ໃນມໍ່ໆນີ້. ເຈົ້າໜ້າທີ່ ຂອງພະເຈົ້າຊາ ໄດ້ປະກາດວ່າ ສັດຕູພາຍໃນອັນຕະລາຍ ກວ່າສັດຕູພາຍນອກ.

ພວກນາຍທຶນ ເມື່ອສົງໄສ ກ່ຽວກັບຄວາມມຸ້ງຫວັງ ຂອງເຈົ້າຊາໃນການເລີ່ມຕົ້ນ ເຈລະຈາແລ້ວ ກໍໄດ້ແຍກຕົນອອກຫ່າງຈາກເຈົ້າຊາ. ໃນ ກຸ່ມນາຍທຶນ ການຄົບຄິດກະບົດໄດ້ສຸກງອມຂຶ້ນ ເຊັ່ນວ່າ: ຕ້ອງປ່ຽນເຈົ້າ ນິໂກລາຍ ທີ 2 ດ້ວຍລູກຊາຍຂອງລາວ ຜູ້ທີ່ມີອາຍຸອ່ອນຢູ່, ສ່ວນຜູ້ປົກຄອງ ນັ້ນຕ້ອງເລືອກເອົາເຈົ້າມີຄາຍອິນ ຜູ້ເປັນນ້ອງຂອງເຈົ້າ ນິໂກລາຍ; ເຈົ້າມ, ມີຄາຍອິນນີ້ ບໍ່ແມ່ນ ນັກການເມືອງ ທີ່ຮູ້ກວ້າງມອງໄກ ແຕ່ຫາກໄກ້ຊິດກັບນາຍທຶນໃຫຍ່.

ນັກໂບນເຊວິກຖືວ່າ ການປະຕິວັດເທື່ອນີ້ ຕ້ອງແມ່ນການປະຕິວັດປະ

ຊາທິປະໄຕ-ນາຍທຶນ. ໜ້າທີ່ຂອງມັນ ຍັງຄົງແມ່ນການລຶບລ້າງ ຮ່ອງຮອຍ
ເສດເຫລືອ ຂອງລະບອບສັກດີນາ ແລະອ້າຫາດກະສິກຳ, ລຶບລ້າງ ລະບອບ
ລາຊາທິປະໄຕ ແລະສ້າງຕັ້ງ ສາທາລະນະລັດປະຊາທິປະໄຕ, ກຳນົດ ວັນ
ງານ 8 ຊົ່ວໂມງ, ມອບດິນຂອງພວກເຈົ້າທີ່ດິນ ໃຫ້ຊາວນາ ຢ່າງບໍ່ມີ ການ
ຊົດ ໃຊ້ໆ.ແຕ່ກໍດີ ໃນປີ 1905 ນັ້ນເອງ, ນັກໂບນເຊວິກເຂົ້າໃຈແລ້ວວ່າ ,
ເວລາແຫ່ງການເຄື່ອນໄຫວປະຕິວັດ ສຳລັບນາຍທຶນນັ້ນ ໄດ້ຜ່ານພົ້ນໄປ ແລ້ວ:
ນາຍທຶນ ບໍ່ມີຄວາມສາມາດ ແລະ ກໍບໍ່ຕ້ອງການຢາກເປັນຜູ້ນຳພາ, ຍ້ອນວ່າ
ມັນຕິດພັນ ຢ່າງສະໜິດແໜ້ນ ກັບສິດຜົນປະໂຫຍດ ຂອງລະບອບເຈົ້າຊາ.

ສິບປີ, ທີ່ຜ່ານພົ້ນໄປ ພາຍຫລັງການປະຕິວັດເທື່ອທີໜຶ່ງນັ້ນ ຊາວກຳ
ມາຊີບໄດ້ຖືກຊຸບຫລໍ່ ຢູ່ໃນການຕໍ່ສູ້ວຸ້ນວຸ້ນ, ການພັນແຍກທາງວຸ້ນວຸ້ນ ໃນວົງ
ນະບົດ ກໍເລິກເຊິ່ງກວ່າເກົ່າ, ສາຍພົວພັນລະຫວ່າງຊາວນາທຸກກັບຊາວ ກຳ
ມາຊີບ ກໍແໜ້ນແຟ້ນ ກວ່າເກົ່າ. ພັກໂບນເຊວິກ ໄດ້ມີບົດຮຽນ ແຫ່ງການ
ຕໍ່ສູ້ວຸ້ນວຸ້ນ, ຮູ້ປົກປັກຮັກສາແນວທາງ ຂອງຕົນ ຈາກລັດທິດແກ້ຝ່າຍຊ້າຍແລະ
ຝ່າຍຂວາ. ທັງໝົດນີ້ ມັນໄດ້ສ້າງຄວາມເຊື່ອໝັ້ນວ່າ, ການປະຕິວັດຈະ ບໍ່
ຢຸດຢູ່ ພຽງແຕ່ໃນໄລຍະປະຊາທິປະໄຕ-ນາຍທຶນເທົ່ານັ້ນ, ແຕ່ຈະຕ້ອງ ກາຍ
ເປັນ ການປະຕິວັດສັງຄົມນິຍົມ. ລັດຖະບານປະຕິວັດ ຈະກ້າວສູ່ ການຢຸດເຊົາ
ສົງຄາມປຸ້ນສະດົມ ຂອງຈັກກະພັດ ໃນທັນໃດ, ແຕ່ກໍບໍ່ແມ່ນດ້ວຍການເຈັນສັນ
ຍາກັບປະເທດໃດປະເທດໜຶ່ງ ແຕ່ຝ່າຍດຽວ. ແຕ່ດ້ວຍການສະເໜີໃຫ້ສ້າງ
ສັນຕິພາບລວມທົ່ວໄປ ແບບປະຊາທິປະໄຕ ສຳລັບທຸກໆປະຊາຊາດ ໂດຍ ປາ
ສະຈາກ ການບັງຄັບຊາດນ້ອຍລວມເຂົ້າຊາດໃຫຍ່ ແລະໃຊ້ຄ່າເສຍຫາຍທາງ

ທະຫານໃດໆ.ແຕ່ຖ້າຫາກວ່າ ຈັກກະພັດແຫ່ງໂລກ ບໍ່ຮັບຮູ້ສັນຕິພາບ ຄືແນວນັ້ນ ແລະຍັງພະຍາຍາມ ດ້ວຍທຸກໆກຳລັງ ເພື່ອບັບຄໍການປະຕິວັດສັງຄົມນິຍົມນັ້ນ, ປະຊາຊົນຈະລຸກຂຶ້ນປົກປັກຮັກສາ ການປະຕິວັດນັ້ນ ແລະຈະດຳເນີນສົງຄາມ ປະຕິວັດ, ພາຍໃຕ້ຄວາມເປັນມິດຈິດມິດໃຈ ແລະການສະໜັບສະໜູນ ຂອງ ທຸກໆກຳລັງປະຕິວັດຂອງໂລກ.

ໜ້າປະຫວັດສາດ ແຫ່ງການຕໍ່ສູ້ ຂອງພັກໂບນເຊວິກ ເພື່ອ ຍາດ ແຍ່ງເອົາມະຫາຊົນ ໃນເວລາສົງຄາມນັ້ນ ແມ່ນເຕັມໄປດ້ວຍລັດທິວິລະຊົນ , ຄວາມທໍລະຫົດອົດທົນ, ຄວາມເຊື່ອໝັ້ນ ຢ່າງເລິກເຊິ່ງ ຕໍ່ການເຄື່ອນໄຫວທີ່ ຖືກຕ້ອງຂອງຕົນ.ຢູ່ນະຄອນຫລວງ ແລະສູນກາງອຸດສາຫະກຳອື່ນໆ ຕຳຫລວດ ລັບ ດ້ວຍການຊ່ວຍເຫລືອ ຂອງພວກສອດແນມ ໄດ້ຕິດຕາມຊອກຄົ້ນຫາອົງການ ຈັດຕັ້ງໂບນເຊວິກ ແລະໄດ້ຈັບກຸມສະມາຊິກ ຂອງອົງການຈັດຕັ້ງນັ້ນ. ວຽກ ງານຂອງນັກໂບນເຊວິກ ຢູ່ໃນກອງທັບ ກໍ່ແຮ່ງອັນຕະລາຍເປັນພິເສດ. ຍ້ອນ ຄຳເວົ້າປະທ້ວງຈະຖືກສົ່ງໄປເຮັດວຽກສັບພະທຸກ,ຍ້ອນໃບປິວ ຫລືວ່າ ຮຽກ ຮ້ອງປະຕິວັດກອງບັນຊາການຈະບໍ່ຜ່ອນໂທດໃຫ້ເດັດຂາດ-ຕ້ອງຍິງເປົ້າ. ນັກ ຕໍ່ສູ້ປະຕິວັດຫລາຍໆພັນຄົນ ໄດ້ເສຍຊີວິດ, ແຕ່ວ່າພັກໂບນເຊວິກ ກໍ່ຕ້ອງໄດ້ ປະຕິບັດພັນທະ ຂອງຕົນ ເພາະວ່າ ມັນແມ່ນພັກໜຶ່ງພັກດຽວ ທີ່ໄດ້ຂົນຂວາຍ ເອົາກອງທັບ ເຂົ້າຫາຝ່າຍປະຕິວັດ.

ໃນເງື່ອນໄຂຂອງການເຄື່ອນໄຫວປິດລັບນັ້ນ ຫຍຸ້ງຍາກແທ້ທີ່ຄິດໄລ່ ໄດ້ວ່າສະມາຊິກ ຂອງພັກໂບນເຊວິກ ມີຫລາຍປານໃດ, ຕາມຂໍ້ມູນ ທີ່ຄ້າຍ ຄຽງນັ້ນຄາດວ່າ ຈະມີ 35 ຫາ 40 ພັນຄົນ. ອົງການຈັດຕັ້ງຂອງພັກ ມີ

ແລະໄດ້ດຳເນີນງານຢູ່ ໃນ 200 ຕົວເມືອງ. ກຳລັງແຮງຂອງພັກມີຢູ່ ໃນສາຍພົວພັນກັບມະຫາຊົນ, ຢູ່ໃນຄວາມເປັນເອກະພາບທາງດ້ານທິດສະດີ, ໃນຄວາມສາມັກຄີທາງດ້ານການຈັດຕັ້ງ. ນັກໂບນເຊວິກ ບໍ່ເຄີຍໄດ້ຮູ້ກ່ຽວກັບການແບ່ງແຍກເປັນພັກຝ່າຍ-ພວກເຂົາໄດ້ຍຶດໝັ້ນຢູ່ໃນໂຄງການລວມອັນດຽວ, ໄດ້ດຳເນີນແນວທາງ ທີ່ເປັນເອກະພາບ, ປະຕິບັດ ຕາມກົດລະບຽບ ທາງດ້ານການຈັດຕັ້ງອັນດຽວ. ນັກປະຕິວັດຜູ້ຫ້າວຫັນ ທີ່ບໍ່ແມ່ນສະມາຊິກພັກ ກໍ່ ໄດ້ສາມັກຄີກັນ ຢູ່ອ້ອມຂ້າງ ຂອງນັກໂບນເຊວິກ. ຄວາມເດັດດ່ຽວ ຢ່າງ ເປັນຫລັກການ ຂອງນັກໂບນເຊວິກ, ຄວາມກົມກຽວ ແລະຄວາມແຂງແມ່ນ ຂອງຖັນແຖວຂອງພັກ ໄດ້ດູດດຶງເອົາສະຕິປັນຍາ ແລະດວງໃຈ ຂອງຫຼກງຄົນ ຊຶ່ງກຽມພ້ອມແລ້ວ ທີ່ຈະຕໍ່ສູ້ ເພື່ອສິດຜົນປະໂຫຍດ ຂອງປະຊາຊົນ ເພື່ອພາລະກິດປະຕິວັດ.

## 2. ໄລຍະສັນຕິຂອງການປະຕິວັດປີ1917

### ໄຊຊະນະຂອງການປະຕິວັດຄັ້ງທີ 2 ໃນປະເທດລັດເຊຍ

ເມືອງເປໂຕຣກຣາດນັດຢຸດງານ! ໃນຕອນທ້າຍ ຂອງເດືອນກຸມພາ ປີ 1917 ຂ່າວນີ້ໄດ້ແຜ່ລາມໄປທົ່ວປະເທດລັດເຊຍ ຢ່າງວ່ອງໄວເໝືອນດັ່ງ ສຽງສັນຍານໄພອັນຕະລາຍ. ວັນທີ 23 ເດືອນກຸມພາ ຢູ່ທີ່ນະຄອນຫລວງ ມີ ຜູ້ນັດຢຸດງານຫລາຍກວ່າ 100 ພັນຄົນ, ວັນທີ 24 ເດືອນກຸມພາ ມີ ຫລາຍ ກວ່າ 200 ພັນຄົນ, ສ່ວນໃນວັນທີ 25 ກຸມພານັ້ນ ແມ່ນໝົດທຸກຄົນ ໄດ້ນັດ ຢຸດງານ, ການນັດຢຸດງານ ລວມທົ່ວໄປໄດ້ ກວມເອົາຈຳນວນກຳມະກອນທັງ ໝົດຂອງເມືອງເປໂຕຣກຣາດ ເກືອບເຖິງ 400 ພັນຄົນ ! ໃນໄລຍະສາມ ວັນ, ການນັດຢຸດງານ ໄດ້ກາຍເປັນການນັດຢຸດງານລວມທົ່ວໄປ, ອັນນີ້ ມັນ ແມ່ນສິ່ງຢັ້ງຢືນ ທີ່ເປັນຈິງແຫ່ງການກຽມພ້ອມ ຂອງມະຫາຊົນຕໍ່ການລຸກຂຶ້ນ ຕໍ່ ສູ້.

ພັກໂບນເຊວິກໃນນີ້ ຂອງການປະຕິວັດ ໄດ້ດຳເນີນການເຄື່ອນໄຫວ ຫລາຍດ້ານກ່ຽວກັບ ການນຳພາຂະບວນ ບໍ່ວ່າຢູ່ ໃນຕົວເມືອງເປໂຕຣກຣາດ ກໍຄືຢູ່ໃນທ້ອງຖິ່ນ.

ນັກໂບນເຊວິກຂອງນະຄອນຫລວງ, ຊຶ່ງໃນປີ 1915 ນັ້ນ ມີຫລາຍ

ກວ່າ 2 ພັນຄົນ, ໄດ້ເປັນຫົວຫນ້າການແຫ່ຂະບວນ, ໄດ້ແຈກຢາຍຜູ້ນຳພາ ຕາມບ່ອນສູ້ຣົບ, ໄດ້ອົບຂວາຍທະຫານ. ແຕ່ລະວັນ ເມື່ອຮອດຕອນແລງ,ເມື່ອ ເວລາໄດ້ເຕົ້າໂຮມຢູ່ ໃນຫ້ອງເຮືອນ ແບບລັບໆ, ສະມາຊິກຂອງຄະນະກຳມະການເມືອງເປແຕກບວກ* ໄດ້ວິເຄາະບາດກ້າວ ຂອງເຫດການ, ໄດ້ວາງແຜນການ ການເຄື່ອນໄຫວໃນມື້ຫນ້າ. ວັນທີ 25 ເດືອນກຸມພາ, ເມື່ອເຊື່ອຫມັ້ນ ຕໍ່ໄຊຊະນະ ຂອງການນັດຢຸດງານລວມທົ່ວໄປແລ້ວ, ຄະນະກຳມະການໄດ້ຕັດສິນໃຈວ່າ, ໄລຍະແຫ່ງການລຸກຮືຂຶ້ນ ປະກອບອາວຸດ ໄດ້ສຸກງອມແລ້ວ. ເພື່ອສິ່ງດັ່ງກ່າວນີ້ ຈຳເປັນຕ້ອງໄດ້ຍຶດເອົາສູນກາງສາຖານີໂທລະສັບ, ຕ້ອງຕັ້ນຖະຫນົນດ້ວຍກຳແພງປ້ອງກັນ, ສ້າງຕັ້ງກອງສູ້ຣົບ,ຍຶດໂຮງງານ.

ໄດ້ຕົກລົງ ສົ່ງຄຳຮຽກຮ້ອງໃຫ້ທະຫານສະຫນັບສະຫນູນ ການລຸກຮືຂຶ້ນ. ໄດ້ສົ່ງຕົວແທນ ຈາກນະຄອນຫລວງ ໄປມົດສະກູ ແລະນິຊະນີໂນວໂກໂຣດ, ອັນນີ້ສະແດງໃຫ້ເຫັນ ຢ່າງຈະແຈ້ງວ່າ, ນັກໂບນເຊວິກ ບໍ່ໄດ້ຖື ວ່າເຫດການຢູ່ ໃນເມືອງເປໂຕຣກຣາດນັ້ນ ແມ່ນພຽງແຕ່ ປາກົດການຂອງທ້ອງຖິ່ນເທົ່ານັ້ນ. ໄດ້ຕົກລົງຈັດຕັ້ງຄະນະກຳມະການພິເສດ ຢູ່ຕາມໂຮງງານແລະໄດ້ສ້າງຕັ້ງຫ້ອງການຂ່າວ ຈາກຕົວແທນ ຂອງຄະນະກຳມະການເຫລົ່ານັ້ນເພື່ອເຮັດແນວໃດ ຕ້ອງຫັນປ່ຽນຫ້ອງການນີ້ ເປັນສະພາຜູ້ແທນກຳມະກອນໄປພ້ອມກັບການເຕີບໃຫຍ່ ຂອງເຫດການ. ແນວຄິດກ່ຽວກັບສະພາໂຊວຽດ ໃນຖານະ ທີ່ເປັນອົງການອຳນາດແບບໃຫມ່ນັ້ນ ນັກໂບນເຊວິກກຳໄດ້ ຢ່າງເຖິງຖອງ

---

* ໃນປີ 1914 ເມືອງເປແຕກບວກໄດ້ປ່ຽນຊື່ມາເປັນ ເມືອງເປໂຕຣກຣາດ. ຄະນະກຳມະການເມືອງເປແຕກບວກໄດ້ຮັກສາຊື່ຂອງຕົນຈົນຮອດເດືອນພະຈິກ ປີ 1917.

ແລະເລິກເຊິ່ງ, ໄດ້ເຊື່ອມຊຶມເຂົ້າ ໃນຈິດສຳນຶກ ຂອງມະຫາຊົນຈົນເຖິງຂັ້ນ ວ່າ, ໃນເທື່ອທຳອິດ ຂອງການຮູ້ຂ່າວກ່ຽວກັບການລຸກຮືຂຶ້ນນັ້ນ ໄດ້ຮັບຮອງ ເອົາມະຕິກ່ຽວກັບການຈັດຕັ້ງ ສະພາໂຊວຽດ ໃນທັນໃດ.

ໃນສ່ວນປະກອບ ຂອງຄະນະກຳມະການເມືອງເປແຕກບວກ ມີ ນັກ ສືບປັ່ນປ່ວນຄົນໜຶ່ງ - ພາຍຫລັງມາໄດ້ຖືກເພີຍແຜ ແລະໄດ້ຖືກຕັດສິນ ລົງ ໂທດ ຢ່າງເໝາະສົມຄື - ຍິງເປົ້າ. ໃນຄືນວັນທີ 25 ກຸມພາປີ 1917ລາວ ໄດ້ສົ່ງໂກປີເອກະສານບັນທຶກ ຂອງກອງປະຊຸມຄະນະກຳມະການສູນກາງ ໃຫ້ ຕຳຫລວດ. ໂດຍອີງໃສ່ເອກະສານບັນທຶກ, ຕຳຫລວດໄດ້ລາຍງານ ໃຫ້ເຈົ້າ ໜ້າທີ່ວ່າ: "ອົງການຈັດຕັ້ງພັກສັງຄົມປະຊາທິປະໄຕກຳມະກອນລັດເຊຍ ເມືອງເປໂຕຣກຣາດ ໃນໄລຍະສອງວັນ ຂອງການຈະລາຈົນ ທີ່ເກີດຂຶ້ນ ຢູ່ ເມືອງ ເປໂຕຣກຣາດ ໄດ້ຕົກລົງນຳໃຊ້ຂະບວນການ ທີ່ໄດ້ເກີດຂຶ້ນນັ້ນ ເພື່ອ ເປົ້າໝາຍຂອງພັກ ແລະເມື່ອກຳເອົາການນຳພາມະຫາຊົນ ຜູ້ທີ່ປະກອບສ່ວນ ເຂົ້າໃນ ຂະບວນການນັ້ນ ໄວ້ໃນກຳມືຂອງຕົນແລ້ວ ຈະເຮັດໃຫ້ຂະບວນການ ນັ້ນ ມີທິດທາງປະຕິວັດຢ່າງຈະແຈ້ງ". ພວກເຮົາຍົກເອກະສານນີ້ ຂອງ ຕຳ ຫລວດໃຫ້ເຫັນ ກໍເພື່ອຢ້ຳຕື່ມອີກເທື່ອໜຶ່ງວ່າ: ເຈົ້າໜ້າທີ່ ຂອງອຳນາດການ ປົກຄອງ ຂອງເຈົ້າຊາຮູ້ວ່າ, ໃຜເປັນຜູ້ນຳພາຂະບວນການນີ້ແທ້ໆ. ຄວາມພະ ຍາຍາມທັງໝົດ ຂອງພວກນັກຂຽນປະຫວັດສາດ ການປະຕິວັດໃນປະຈຸ ບັນ ທີ່ພາກັນຊີ້ແຈງວ່າ, ນັກໂບນເຊວິກ ບໍ່ໄດ້ປະກອບສ່ວນເຂົ້າ ໃນການຕໍ່ສູ້, ວ່າແມ່ນການຍຶດເອົາແບບຟ້າວຟັ່ງບັງເອີນ, ບໍ່ມີຄວາມເຂົ້າໃຈກ່ຽວກັບສະພາ ໂຊວຽດເລີຍ - ນັ້ນມີຄ່າໜ້ອຍແດ່.

ສຳລັບນັກໂບນເຊວິກແລ້ວ ສະພາໂຊວຽດ ແມ່ນອົງການລຸກຮື້ນ, ແມ່ນອົງການອຳນາດແບບໃຫມ່ ຕັ້ງແຕ່ເວລາ ແຫ່ງການປະກົດຕົວ ເທື່ອ ທຳອິດຂອງມັນ ໃນການປະຕິວັດລັດເຊຍ ເທື່ອທີ່ຫນຶ່ງ. ຕັ້ງແຕ່ຊຸມນັ້ທຳອິດ ຂອງການນັດຢຸດງານຢູ່ ເປໂຕຣກຣາດ ໃນບັນດາໂຮງງານຕ່າງໆ ໄດ້ດຳເນີນການເລືອກຕັ້ງ ຕົວແທນເຂົ້າຮ່ວມໃນສະພາໂຊວຽດແລ້ວ ຕາມຄວາມລິ ເລີມຂອງກຳມະກອນ.

ຕອນແລງວັນທີ 27 ເດືອນກຸມພາຜູ້ແທນກຳມະກອນໄດ້ປາກົດຕົວ ຢູ່ໃນວັງຕາວຣິແລ້ວ. ສຳລັບຕົວແທນກຳມະກອນ ມັນແມ່ນສະພາການທີ່ບໍ່ປົກກະຕິ ແລະບໍ່ຊຸ້ນເຄີຍ. ຢູ່ໃນນັ້ນ ຍັງມີຜູ້ນຳ ຂອງຝ່າຍ ແມນເຊວິກ* ຈາກລັດຖະສະພາ ທີ່ບໍ່ໄດ້ປະກອບສ່ວນຫຍັງຫມົດຢູ່ ໃນການຕໍ່ສູ້ກາງຖະຫນົນ.ພວກນັກຫຼີ້ນການເມືອງ ທີ່ມີບົດຮຽນ,ພວກເຂົາພາກັນຄິດໄລ່ສະພາບການ ຢ່າງວ່ອງ ໄວ ແລະໄດ້ລວງກຳເອົາການນຳພາເຫດການໄວ້ ໃນກຳມື ຂອງຕົນ: ໄດ້ປະກາດຕົນເອງ ເປັນຄະນະກຳມະການ ບໍລິຫານງານຊົ່ວຄາວ ຂອງສະພາໂຊວຽດ. ນັກໂບນເຊວິກ ທີ່ຫາກໍ່ສຳເລັດການສູ້ຮົບ ກາງຖະຫນົນ ໄດ້ມອງເຫັນສະພາບ ຂອງຄະນະບໍລິຫານງານ ທີ່ບໍ່ມີໃຜ ໄດ້ເລືອກຕັ້ງຂຶ້ນມານີ້ ພໍແຮງແລ້ວ.

---

* ໃນປີ 1903, ໃນກອງປະຊຸມໃຫຍ່ ຂອງພັກສັງຄົມ-ປະຊາທິປະໄຕ ລັດເຊຍ ໄດ້ເກີດມີການແຍກພັກຄື: ສຽງສ່ວນຫນ້ອຍ ຂອງກອງປະຊຸມໃຫຍ່(ເປັນພວກແມນຸເຊວິກ) ທີ່ບໍ່ເຫັນດີນຳຫລັກການ ການສ້າງຕັ້ງພັກແບບໃຫມ່ ຂອງເລນິນ,ຊຶ່ງມີຄວາມສາມາດ ແລະກຽມພ້ອມແລ້ວ ທີ່ຈະນຳພາການຕໍ່ສູ້ປະຕິວັດເພື່ອໂຄ່ນລົ້ມຜະເດັດການ ຂອງນາຍທຶນ,ເພື່ອສັງຄົມນິຍົມ(ພ້ອມກັບນັກໂບນຸເຊວິກ),ແລະໄດ້ຢຶດຫມັ້ນ ໃນທັດສະນະຂອງສັງຄົມ-ປະຊາທິປະໄຕແບບເກົາ

ພວກແມນເຊວິກ ກໍຄືກັນກັບພວກແອສແອຣ** ບໍ່ໄດ້ປະຕິເສດວ່າ ສະພາຜູ້ແທນກຳມະກອນ ແມ່ນຮູບການຂອງການຈັດຕັ້ງ ທີ່ຈະຕ້ອງເປັນໄປ ແລະມີຄ່າຢ່າງເຕັມສ່ວນ ຊຶ່ງໄດ້ເຕົ້າໂຮມເອົາກຳມະກອນ ໂດຍບໍ່ຂຶ້ນກັບວິຊາຊີບ, ອາຍຸການ, ຊົນຊາດ, ສາດສະໜາ, ເພດແລະອື່ນໆ. ແຕ່ວ່າ ຕາມຄວາມເຫັນ ຂອງພວກແມນເຊວິກ, ສະພາໂຊວຽດ ບໍ່ຄວນຈະກຳເອົາພາລະ ບົດບາດ ໃນການຈັດຕັ້ງການລຸກຮື້ຂຶ້ນ ມາໃຫ້ແກ່ຕົນເອງ ແລະກາຍເປັນອົງການອຳນາດ. ພວກແມນເຊວິກ ບໍ່ເຫັນດີນຳການເຕົ້າໂຮມກຳມະກອນ ແລະ ທະຫານໃນສະພາໂຊວຽດ. ດ້ວຍຂໍ້ອ້າງອີງ ແບບຫລອກລວງ ກ່ຽວກັບ ການຮັກສາ "ຄວາມປອດໄສທາງຊົນຊັ້ນ" ຂອງອົງການກຳມະກອນ. ພວກແມນເຊວິກ ແລະແອສແອຣ ມີຄວາມມຸ່ງຫວັງຢາກຈະຮັກສາສະພາໂຊວຽດ ໄດ້ຕາມ ລະບຽບການ ແບບດຽວກັນ ກັບສະຫະພັນກຳມະບານ.

ສະພາໂຊວຽດໄດ້ລົງມະຕິສ້າງຕັ້ງ ຄະນະກຳມະການສະບຽງອາຫານ, ໄດ້ມອບໝາຍ ໃຫ້ຄະນະກຳມະການດັ່ງກ່າວຂຶ້ນບັນຊີເຂົ້າ ສ່ວນແຮທັງໝົດທັງ ຂອງລັດ ແລະຂອງເອກະຊົນ, ແລ້ວຈັດຕັ້ງການສະໜອງເຂົ້າ ນັ້ນໃຫ້ກອງທັບ ແລະປະຊາຊົນນະຄອນຫລວງ ທີ່ອຳນາດການປົກຄອງ ຂອງເຈົ້າຊາ ໄດ້ຕັດສະບຽງອາຫານ ໂດຍແນໃສ່ຈະປາບປາມ ການປະຕິວັດ ທີ່ພວມ

---

ທີ່ປັບຕົວເຂົ້າກັບການເຄື່ອນໄຫວໃນລັດຖະສະພາ. ຈາກເວລານັ້ນມາພວກແມນເຊວິກໄດ້ເຫີນຫ່າງອອກຈາກຫລັກການມາກຊິດ ອັນພື້ນຖານຈາກການຮັບຮູ້ຜະເດັດການກຳມາຊີບ, ຈາກໂຄງການກະສິກຳແບບປະຕິວັດເທື່ອລະກ້າວ ແລ້ວໄດ້ຮ່ວມຫົວເຂົ້າກັບກຸ່ມສວຍໂອກາດທີ່ເຫັນດີເຫັນພ້ອມກັບນາຍທຶນ.

**ພັກຂອງພວກນັກປະຕິວັດ-ສັງຄົມນິຍົມ(ແອສແອຣ) ໄດ້ສ້າງຕັ້ງຂຶ້ນໃນ ຕອນ

ຈະເກີດຂຶ້ນນັ້ນ ດ້ວຍຄວາມອຶດຫິວ. ການສະໜອງສະບຽງອາຫານໄດ້ຖືກຕັດແຍກອອກຈາກກຳມື ຂອງອຳນາດການປົກຄອງ. ການຊຸມຄອງກອງທັບໄດ້ຖືກຖອນອອກຈາກການຊີ້ນຳ ຂອງກອງບັນຊາການ ຂອງເຈົ້າຊາ. ໄດ້ຮັບເອົາມະຕິໃຫ້ແຍກຕົວແທນ ຂອງສະພາໂຊວຽດ ເພື່ອຈັດຕັ້ງສາຂາ ຂອງມັນ ຢູ່ໃນເຂດຕ່າງໆ ແລະເລີ່ມພິມຈຳໜ່າຍໜັງສືພິມ "ອິສເວຍສະເຕຍ" ຊຶ່ງແມ່ນກະບອກສຽງ ຂອງສະພາໂຊວຽດ.

ມະຕິຕົກລົງທັງໝົດເຫຼົ່ານີ້ ລ້ວນແຕ່ມີລັກສະນະປະຕິວັດ ໄດ້ ຫັນປ່ຽນສະພາໂຊວຽດເປັນອົງການອຳນາດ.

## <u>ການສ້າງຕັ້ງລະບອບສອງອຳນາດ</u>

ໃນມື້ ຂອງການລຸກຮື້ຂຶ້ນ ເຈົ້າ ນິໂກລາຍ ທີ 2 ໄດ້ເຊັນໃບດຳລັດໃຫ້ຍຸບລັດຖະສະພາດູມາ ແລະໄດ້ອອກຄຳສັ່ງກ່ຽວກັບການສົ່ງກອງກຳລັງເຂົ້າໄປນະຄອນຫລວງ.

---

ທ້າຍຂອງປີ 1901.ພວກແອສແອຣ ມີຄວາມເຫັນວ່າ ຊາວຜູ້ອອກແຮງງານທັງໝົດ, ກຳມະກອນ,ຊາວນາ,ປັນຍາຊົນແມ່ນກຳລັງດັນຂອງການປະຕິວັດໃນຂະໜາດສຳຄັນ.ຕາມຫລັກການແລ້ວ ພວກແອສແອຣເມື່ອຮັບຮູ້ບົດບາດຂອງອົງການຈັດຕັ້ງອັນກວ້າງຂວາງແຕ່ຊ້ຳພັດເຫັນວ່າ ທິດສະດີ"ວິລະຊົນ"ແລະ"ຝູງຊົນ"ສຳຄັນກວ່າໝູ່, ສ່ວນວ່າຫົວຈັກພົ້ນຖານຂອງການປະຕິວັດນັ້ນຊ້ຳຖືວ່າແມ່ນການກໍ່ວິນາດຊະກຳ.

ໃນຕອນເຊົ້າວັນທີ 27 ກຸມພາໄດ້ແຈ້ງການກ່ຽວກັບດຳລັດ ຂອງ ເຈົ້າຊາ ວ່າດ້ວຍການໃຫ້ຍຸບລັດຖະສະພາດູມາ. ຈະເຮັດແນວໃດ? ບໍ່ ຍອມ ຟັງຫມາຍຄວາມວ່າຕ້ອງຖືກຈັບ; ຖ້າຍອມປະຕິບັດ - ຫມາຍເຖິງປ່ອຍ ໃຫ້ ເຫດການເປັນໄປ ຕາມລຳພັງໃຈ, ຈະສູນເສຍ ທຸກຄວາມອາດສາມາດ ໃນ ການສົ່ງຜົນກະທົບ ຕໍ່ສະພາບການໃນປະເທດ. ຢູ່ຕໍ່ຫນ້າການເລືອກອັນສັບສົນ, ບັນດາຜູ້ແທນ ໄດ້ໃຊ້ກົນອຸບາຍ ອັນຄ່ອງແຄ້ວຄື: ປະຕິບັດຕາມດຳລັດ ຂອງ ເຈົ້າຊາກ່ຽວກັບການຍຸບ, ແຕ່ບໍ່ທັນແຍກກັນໄປແລ້ວ ໄປລວມກັນຢູ່ຫ້ອງໃກ້ ຄຽງນັ້ນ ເປັນກອງປະຊຸມພາກສ່ວນ. ໃນກອງປະຊຸມນີ້ ໄດ້ຕົກລົງສ້າງຕັ້ງຄະ ນະກຳມະການ ຊົ່ວຄາວ ຂອງລັດຖະສະພາດູມາ.

ໃນຕອນກາງຄືນ ໄດ້ຮູ້ຂ່າວກ່ຽວກັບການຮວມປະຊຸມ ຂອງສະພາໂຊ ວຽດເມືອງ ເປໂຕຣກຣາດ ແລະຮູ້ກ່ຽວກັບມະຕິຊຸມທຳອິດ ຂອງສະພາ ໂຊ ວຽດ. ສະພາໂຊວຽດ ຂອງຜູ້ແທນກຳມະກອນ ແລະທະຫານ ໄດ້ກາຍເປັນ ຜູ້ ນຳພາເຫດການໃນຕົວຈິງ. ຄະນະກຳມະການຊົ່ວຄາວ ໄດ້ຕົກລົງຈະພະຍາ ຍາມນຳພາຂະບວນການຄືກັນ. ບໍ່ຕ້ອງສົງໄສເລີຍວ່າ, ຜູ້ນຳນາຍທຶນ ໄດ້ ຕັ້ງ ແກ້ງເຮັດໃຫ້ ຊັກຊ້າ ໂດຍສ້າງຄວາມຫວັງຈະໃຊ້ເວລາ ເພື່ອລໍຖ້າກອງກວາດ ລ້າງມາຮອດນະຄອນຫລວງ. ການຄືນວັນທີ 28 ກຸມພາຄະນະກຳມະການຊົ່ວ ຄາວໄດ້ຮັບຮອງເອົາມະຕິກຳເອົາການຟື້ນຟູ ຄວາມເປັນລະບຽບຮຽບຮ້ອຍ ແຫ່ງລັດ ແລະທາງສັງຄົມໄວ້ໃນກຳມືຂອງຕົນ ແລະສ້າງຕັ້ງລັດຖະບານໃຫມ່.

ໄດ້ແຈ້ງກ່ຽວກັບມະຕິ ຂອງຄະນະກຳມະການຊົ່ວຄາວ ໃຫ້ກອງ ທະ ຫານແລະໄດ້ຮຽກຫມົດກອງພ້ອມດ້ວຍນາຍທະຫານເຂົ້າມາລັດຖະສະພາດູມາ.

ຄວາມເວົ້າ ບໍ່ໄດ້ມີການໃຫ້ຄຳໝັ້ນສັນຍາຫຍັງຫລວງຫລາຍ - ສ່ວນໃຫຍ່ແມ່ນເວົ້າກ່ຽວກັບການປົກປັກຮັກສາ ຄວາມເປັນລະບຽບຮຽບຮ້ອຍ,ຄວາມສະຫງົບແລະຄວາມເຊື່ອ ໝັ້ນຕໍ່ນາຍທະຫານ.ຍັງໄດ້ເວົ້າກ່ຽວກັບການສືບຕໍ່ ຂອງສົງຄາມ. ພວກທະຫານ ທີ່ຄອງຄອຍສັນຕິພາບ ດ້ວຍຄວາມຈົດຈໍ່ນັ້ນ ຟັງຢ່າງບໍ່ພໍໃຈ ແລະໄດ້ຮ້ອງຂຶ້ນ ແບບແຫ້ງແລ້ງວ່າ "ໄຊໂຍ!"

ພວກນັກການເມືອງນາຍທຶນ ຊຶ່ງດີໃຈນຳຜົນສຳເລັດຊົ່ວຄາວໄດ້ຕົກລົງ ສືບຕໍ່ການເຄື່ອນໄຫວ. ໄດ້ເຊັນຄຳສັ່ງໃຫ້ທະຫານກັບຄືນສູ່ຄ້າຍແລ້ວມອບອາວຸດທີ່ໄດ້ເອົາຢູ່ໃນສາງຂອງກອງພັນນັ້ນຄືນ, ສ່ວນນາຍທະຫານທີ່ຍັງຄ້າງຢູ່ກອງຮ້ອຍຂອງຕົນ ໃນເວລາການລຸກຮືຂຶ້ນນັ້ນ ໃຫ້ກັບຄືນໄປກົມກອງ.

ຄຳສັ່ງນີ້ ໄດ້ເຮັດໃຫ້ເກີດຄວາມກັງວົນໃຈລວມທົ່ວໄປແກ່ກອງປ້ອງກັນເມືອງ ເປໂຕຣກຣາດ. ບໍ່ໄດ້ປ່ອຍໃຫ້ນາຍທະຫານ ກັບຄືນຫາກົມກອງສ່ວນວ່າຜູ້ທີ່ຍັງຄ້າງຢູ່ກົມກອງນັ້ນ ຊໍ້າຖືກຈັບ,ໃນບາງກອງກໍໄດ້ມີການເລືອກຕັ້ງຜູ້ບັນຊາການຄົນໃໝ່ ຂະບວນການໄດ້ກວມເອົາໝົດທົ່ວກອງປ້ອງກັນນະຄອນຫລວງ ໃນກາງຖະໜົນໄດ້ມີກອງທະຫານປະກອບອາວຸດປາກົດຕົວ ຂຶ້ນມາອີກ. ກອງກຳມະກອນກໍໄດ້ເຂົ້າຮ່ວມສົມທົບ ກັບພວກເຂົາພວກທະຫານຊຶ່ງພວມວິຕົກກັງວົນຢູ່ນັ້ນ ໄດ້ພາກັນແກ່ເຂົ້າໄປຫາສະພາໂຊວຽດ, ເພື່ອຮຽກຮ້ອງ ໃຫ້ລົບລ້າງຄຳສັ່ງ ແລະບໍ່ໃຫ້ໃຊ້ລະບຽບວິໃນ ແບບເກົ່າຢູ່ ໃນກົມກອງອີກຕື່ມ.

ວັນທີ 1 ເດືອນມີນາສະພາໂຊວຽດເມືອງເປໂຕຣກຣາດ ໄດ້ພິມເຜີຍແຜ່ "ຄຳສັ່ງເບີ 1 " ໄປທົ່ວກອງປ້ອງກັນ ຂອງນະຄອນຫລວງ ຊຶ່ງມີ

ບົດບາດສຳຄັນເປັນພິເສດ ໃນການດຶງດູດເອົາ ທັງຫມົດກອງທັບເຂົ້າຝ່າຍປະ
ຕິວັດດັ່ງນີ້: 1) ໃນທຸກງວຽກງານ, ທຸກໆກອງພົນ,ກອງພັນ,ຫນ່ວຍປືນກົນ,
ໃນກອງທະຫານມ້າຕ້ອງເລືອກຕັ້ງ ຄະນະກຳມະການຈາກຕົວແທນທະຫານ;
2) ເລືອກຕັ້ງເອົາຕົວແທນຜູ້ຫນຶ່ງຈາກແຕ່ລະກົມກອງເຂົ້າໃນສະພາໂຊວຽດ
ເມືອງ ເປໂຕຣກຣາດ; 3) ຢູ່ໃນທຸກງການຕໍ່ສູ້ທາງດ້ານການເມືອງຂອງຕົນ
ນັ້ນ ພາກສ່ວນກອງທະຫານຕ້ອງຂຶ້ນກັບສະພາໂຊວຽດ ຂອງຜູ້ແທນກຳມະກອນ
ແລະທະຫານ ແລະຂຶ້ນກັບຄະນະກຳມະການຂອງຕົນ; 4) ຄຳສັ່ງຂອງຄະນະ
ກຳມະການການທະຫານ ຂອງລັດຖະສະພານັ້ນ ຕ້ອງປະຕິບັດຖ້າຫາກວ່າ ມັນ
ບໍ່ຕ້ານກັບຄຳສັ່ງ ແລະມະຕິຕົກລົງຂອງສະພາໂຊວຽດ; 5) ອາວຸດຕ້ອງມອບ
ເປັນສັນທະ ແລະໃຫ້ຢູ່ພາຍໃຕ້ການຄວບຄຸມ ຂອງຄະນະກຳມະການ, ບໍ່ ໃຫ້
ມອບອາວຸດ ແກ່ພວກນາຍທະຫານ; 6) ທະຫານຕ້ອງປະຕິບັດ ແລະຮັກສາ
ລະບຽບວິໄນ ໃນເວລາປະຕິບັດຫນ້າທີ່,ນອກຈາກນັ້ນ ທະຫານມີສິດທິສຳດຽວ
ກັນກັບປະຊາຊົນທົ່ວໄປ; 7) ຍົກເລີກ ຊັ້ນຕຳແຫນ່ງ ຂອງນາຍທະຫານ ,
ເວັ້ນເສຍແຕ່ການໃຊ້ຄຳວ່າ ທ່ານນາຍທະຫານ.

ໂດຍຈິງຈັງພັກດີ ຕໍ່ແນວທາງທີ່ຜິດພາດ ຂອງຕົນ ຈຶ່ງຕາມແນວທາງ
ນັ້ນໃນການປະຕິວັດນາຍທຶນ-ນາຍທຶນຕ້ອງໄດ້ຄຸ້ມຄອງປະເທດ, ພວກຜູ້ນຳສະ
ພາໂຊວຽດ-ພວກແອສແຊຣ ແລະແມນເຊວິກ ໄດ້ຕົກລົງ ປ່ອຍອຳນາດ ໃຫ້
ນາຍທຶນ. ຢູ່ໃນກອງປະຊຸມລວມໄດ້ຕົກລົງວາງບາງຈຸດ ດັ່ງຕໍ່ໄປນີ້ ເປັນ ພື້ນ
ຖານ ຂອງການສ້າງຕັ້ງລັດຖະບານ: ໑) ຕ້ອງເລີກໂທດ ຢ່າງສົມບູນ ແລະ
ວ່ອງໄວຕໍ່ຜູ້ທີ່ມີຄະດີ ທາງດ້ານການເມືອງ ແລະສາສະຫນາ; ໒) ມີເສ ລີ

ພານໃນການເວົ້າ, ພິມ, ຕັ້ງສະມາຄົມ, ຣວມຊຸມນຸມ ແລະນັດຢຸດງານ; ພ) ລົບລ້າງ ການຈຳກັດ ທາງດ້ານຊົນຄົນ ການເຊື່ອຖື ແລະທາງດ້ານຊົນຊາດ; ຝ) ກະກຽມຣຽກປະຊຸມສ້າງຕັ້ງ ບົນພື້ນຖານ ຂອງການລົງຄະແນນສຽງແບບລວມທົ່ວໄປ, ສະເໝີພາບ, ໂດຍກົງ ແລະປິດລັບ; ຝ) ປ່ຽນຕຳຫລວດເກົ່າເປັນຕຳຫລວດຂອງປະຊາຊົນ; ຝ) ດຳເນີນການເລືອກຕັ້ງ ເຂົ້າໃນອົງການປົກຄອງຕົນເອງ ປະຈຳທ້ອງຖິ່ນ ແບບລວມທົ່ວໄປ, ສະເໝີພາບ ແລະອື່ນໆ; ກ) ບໍ່ໃຫ້ປົດອາວຸດ ແລະບໍ່ໃຫ້ຖອນກອງທະຫານ ທີ່ໄດ້ປະກອບສ່ວນ ໃນການປະຕິວັດອອກຈາກ ເມືອງເປໂຕຣກຣາດ.

ບໍ່ມີຈັກອັນໃນຈຳນວນເງື່ອນໄຂ ທີ່ພວກແມນເຊວິກ ແລະແອສແອຣ ໄດ້ວາງອອກ ຈະຂັດແຍ່ງ ກັບຄວາມມຸ້ງຫວັງ ຂອງນາຍທຶນ ແລະຈະບໍ່ພົວພັນກັບການເຄື່ອນໄຫວຂອງມັນ. ພາກສ່ວນໃຫຍ່ ຂອງຄຳຣຽກຮ້ອງເຫລົ່ານີ້ ໄດ້ຖືກປະຕິບັດໄປແລ້ວ ໃນບາດກ້າວ ຂອງການປະຕິວັດ.

ຕ້ອງເອົາໃຈໃສ່ ຍ້ອນວ່າ, ໃນເງື່ອນໄຂ ຂອງການຄົບຄິດກ່ຽວກັບການມອບອຳນາດ ໃຫ້ພວກນາຍທຶນນັ້ນ ພວກເຂົາບໍ່ໄດ້ເວົ້າຫຍັງໝົດກ່ຽວກັບຮູບການອຳນາດ–ຈະຮັກສາລະບອບລາຊາທິປະໄຕໄວ້ບໍ່ ຫລືວ່າຈະສະຖາປະນາສາທາລະນະລັດ: ຜູ້ນຳຂອງທັງສອງພັກ ທີ່ເອີ້ນຕົນ ເປັນ "ນັກສັງຄົມນິຍົມ" ນັ້ນ ໄດ້ລືມໝົດກ່ຽວກັບສາທາລະນະລັດ, ສ່ວນພວກຜູ້ນຳ ນາຍທຶນ ນັ້ນກໍແຮ່ງບໍ່ຕ້ອງການ ຈະຕັດສິນຊາຕາກຳ ຂອງລະບອບລາຊາທິປະໄຕເລີຍ.

ຢູ່ໃນອັນນີ້ ພວກແອສແອຣ ແລະແມນເຊວິກ ໄດ້ຢ້ານຈະເສຍຄວາມເຊື່ອໝັ້ນ ຈາກມະຫາຊົນ ທີ່ປະຕິວັດ, ດ້ວຍເຫດນັ້ນ ບັນຫາກ່ຽວກັບ ການ

ເຂົ້າຮ່ວມ ຂອງ "ນັກສັງຄົມນິຍົມ" ໃນລະນະລັດຖະບານ ຈຶ່ງບໍ່ທັນມີເທື່ອ , ສ່ວນວ່າ ນາຍທຶນນັ້ນ ຄຣອນ ກໍຍັງບໍ່ທັນຕ້ອງການ ການຊ່ວຍເຫລືອຂອງພວກເຂົາເທື່ອ-ພວກຜູ້ນຳ ຂອງເຂົາພາກັນຄິດວ່າ ພວກເຂົາເອງ ຈະສາມາດແກ້ໄຂສະພາບ ເພື່ອຮັກສາອຳນາດນີ້ໄວ້ໄດ້.

ວັນທີ ໒ ເດືອນມີນາປີ ໑໙໑໗ ໄດ້ສ້າງຕັ້ງລັດຖະບານຊົ່ວຄາວຂຶ້ນ.

ຕາມການແນະນຳ ຢ່າງເອົາຈິງເອົາຈັງ ຂອງກອງບັນຊາການ ສູງສຸດ ຂອງກອງທັບ,ເຈົ້າຊາ ນິໂກລາຍ ທີ ໒ ເມື່ອສູ້ຊົນຢູ່ ໄດ້ສອງສາມວັນ, ວັນທີ ໓ ມີນາ ກໍໄດ້ມອບລາດຊະບັນລັງ ແກ່ນ້ອງຊາຍຂອງຕົນ ຄືເຈົ້າມີ ຄາອີນ. ແຕ່ເຈົ້າຈັກກະພັດຜູ້ສຸດທ້າຍ ໂດຍບໍ່ໄດ້ນັ່ງລາຊະບັນລັງ ແລະບໍ່ພໍ ເທົ່າໃດວັນ ກໍປະຕິເສດຈາກການເປັນກະສັດ. ລະບອບລາຊາທິປະໄຕ ໄດ້ພັງທະລາຍ, ແຕ່ວ່າທາງດ້ານກົດໝາຍແລ້ວ ອັນນີ້ແມ່ນບໍ່ໄດ້ບັນທຶກໄວ້ຢູ່ໃສເລີຍ.

ສະພາບການດ້ານການເມືອງ ທີ່ຫາໄດ້ຍາກທີ່ສຸດ ໃນປະຫວັດສາດໄດ້ເກີດຂຶ້ນຢູ່ໃນປະເທດ ຄືລະບອບສອງອຳນາດ: ລັດຖະບານຊົ່ວຄາວກໍ່ມີອຳນາດ, ແຕ່ວ່າສະພາໂຊວຽດ ຊຶ່ງມີປະຊາຊົນ ຢ່າງຫລວງຫລາຍ ທີ່ປະກອບອາວຸດ ສະໜັບສະໜູນນັ້ນ ກໍ່ມີອຳນາດຄືກັນ.

ອັນນີ້ ຈະອະທິບາຍໄດ້ ຄືແນວໃດ ຖ້າຫາກວ່າ ແມ່ນກຳມະກອນແລະທະຫານ, ຊາວນາສ່ວນໃຫຍ່ ໃນເຄື່ອງແບບ ຂອງກອງທັບ ໄດ້ດຳເນີນການປະຕິວັດ ແຕ່ວ່າອຳນາດຊ້ຳຕົກ ເປັນ ຂອງນາຍທຶນ ? ຖ້າຫາກວ່າແມ່ນນັກໂບນເຊວິກ ເປັນຜູ້ນຳພາມະຫາຊົນໃນການຕໍ່ສູ້, ແຕ່ເປັນຫຍັງຢູ່ ໃນການນຳຂອງສະພາໂຊວຽດ ຊຶ່ງແມ່ນອົງການ ຂອງປະຊາຊົນນັ້ນຊ້ຳພັດແມ່ນ ພວກ

ແອສແຊຣ ແລະພວກແມນເຊວິກ ?

ສາເຫດ ອັນສຳຄັນ ແມ່ນລັກສະນະນາຍທຶນນ້ອຍ ຂອງປະເທດ . ພາຍຫລັງການລົ້ມລະລາຍ ຂອງລະບອບເຈົ້າຊານັ້ນ ຄົນທຳມະດາ ທີ່ບໍ່ຮູ້ການ ເມືອງນັບເປັນລ້ານໆ ໄດ້ຖືກແກ່ເຂົ້າ ໃນວົງການ ການເມືອງໂລດບາດດຽວ. ພວກເຂົາ ບໍ່ສາມາດເຂົ້າໃຈ ໄດ້ບາດດຽວກ່ຽວກັບພັກ, ບໍ່ທັນຮູ້ຈຳແນກ ນັກ ປ້ອງກັນ ທີ່ແທ້ຈິງ ຂອງຕົນ ຈາກພວກຫົວ ມືຄວາມສຸກດ້ວຍຍົດສັກ, ພວກປັບ ຕົວໄປນຳສະພາບ ເຊັ່ນພວກທະນາຍຄວາມ ທີ່ເວົ້າເກັ່ງ, ພວກນາຍຄູ,ແພດ ທີ່ເວົ້າເກັ່ງແຕ່ ຕາມທາດແທ້ຂອງຕົນແລ້ວ ຍັງໄກ ຈາກການປະຕິວັດ. ສ່ວນ ປະກອບ ຂອງຊາວກຳມາຊີບ ກໍ່ປ່ຽນແປງຄື: ໃນຊົ່ວເວລາ ຂອງສົງ ຄາມ ພວກຊາວນາ ໄດ້ເຂົ້າມາເຮັດວຽກຢູ່ໂຮງງານ, ພາກສ່ວນຫນຶ່ງ ຂອງນາຍ ທຶນນ້ອຍ ໄດ້ເຊື່ອງຊ້ອນຕົນເອງຢູ່ ໃນໂຮງງານ ການທະຫານ ເພື່ອຫລີກ ຈາກການເກນໄປແນວຫນ້າ.

ພວກນາຍທຶນນ້ອຍ ໄດ້ນຳເອົາ ຄວາມຈິນເລີຍ, ແນວຄິດອັນ ຫລັາ ຫລັງມາໃຫ້. ດ້ວຍເຫດນີ້ແລ້ວ ການປະຕິວັດ ທີ່ໄດ້ດຳເນີນໄປ ໂດຍ ປາສະ ຈາກນາຍທຶນ ແລະຕ້ານນາຍທຶນນັ້ນ ຈຶ່ງໄດ້ນຳເອົາຜົນສຳເລັດຊົ່ວຄາວໃຫ້ແກ່ ພວກເຂົາ.

## "ຜູ້ກຳອຳນາດຊົ່ວຄາວ" : ລະບອບອຳນາດດຽວຂອງນາຍທຶນ

ເມື່ອໄດ້ຮັບອຳນາດ ຈາກກຳມື ຂອງປະຊາຊົນຜູ້ມີໄຊ,ພວກ ນາຍ

ທຶນໄດ້ຟ້າວຟັ່ງປັບປຸງອຳນາດນັ້ນໄປພ້ອມ. ລັດຖະບານຊົ່ວຄາວ ໄດ້ໃຊ້ຄວາມພະຍາຍາມ ເພື່ອຮັກສາກົງຈັກລັດ ອັນເກົ່າໄວ້. ສະພາການປະຕິວັດໄດ້ຮັບເອົາມະຕິ ກ່ຽວກັບການລົບລ້າງ ກົງຈັກລັດ ຂອງເຈົ້າຊາ, ແຕ່ວ່າລັດຖະບານຊົ່ວຄາວຍັງໄດ້ສືບຕໍ່ເກືອກູນ ພວກເຂົາໄວ້ຢູ່. ເລີ່ມແຕ່ວັນທີ ໑ ພຶດສະພາ ສະພາ, ຜ່ານໄປສອງເດືອນພາຍຫລັງໄຊຊະນະ ຂອງການປະຕິວັດ ! ກໍ່ໄດ້ຮັບຮອງເອົາ ດຳລັດວ່າດ້ວຍການໄລ່ອ້າລາຊະການເຈົ້າຊາອອກຈາກໜ້າທີ່, ແຕ່ຊຳພັດ ໃຫ້ເບັ້ຍບຳນານແກ່ ພວກເຂົາໃນລະດັບສູງ.

ລັດຖະບານຊົ່ວຄາວ ຍັງໄດ້ຮັກສາກົດໝາຍ ຂອງເຈົ້າຊາ, ແມ່ນແຕ່ກົດໝາຍ ທີ່ໄດ້ຮັບຮອງເອົາ ໂດຍປາສະຈາກລັດຖະສະພາດູມາ. ໃນ ຖະແຫລງການ ກ່ຽວກັບການສ້າງຕັ້ງລັດຖະບານຊົ່ວຄາວນັ້ນ ໄດ້ໃຫ້ຄຳໝັ້ນ ສັນຍາວ່າ ຈະປ່ຽນຕຳຫລວດ ດ້ວຍຕຳຫລວດຂອງປະຊາຊົນ, ແຕ່ໃນຕົວຈິງແລ້ວມັນແມ່ນພຽງແຕ່ ການປ່ຽນສາລະວັດທະຫານ ແລະນາຍຕຳຫລວດ ດ້ວຍນາຍທະຫານ, ສ່ວນວ່າຢູ່ໃນເຂດ ທີ່ຫ່າງໄກນັ້ນ ເກືອບວ່າທຸກສິ່ງທຸກຢ່າງ ບໍ່ ມີຫຍັງປ່ຽນແປງ. ໃນເຂດຊົນຊາດ ຍັງຮັກສາກົງຈັກການປົກຄອງເກົ່າໄວ້ໝົດ.

ຢູ່ໃນຖະແຫລງການ ກ່ຽວກັບການສ້າງຕັ້ງ ລັດຖະບານຊົ່ວຄາວ ນັ້ນບໍ່ໄດ້ເວົ້າຫຍັງໝົດກ່ຽວກັບການສືບແຕ່ເຄື່ອນໄຫວ ທາງດ້ານການທະຫານ. ແນ່ນອນແລ້ວ ນາຍທຶນບໍ່ໄດ້ຕ້ອງການຈະລົບລ້າງ ບໍ່ເກີດຂອງການສ້າງ ຮັ່ງ ລູນມີແບບ ບໍ່ເຄີຍຮູ້ເຄີຍເຫັນມີຈັກດີ, ແຕ່ວ່າຈະເວົ້າ ຢ່າງເປີດເຜີຍ ກ່ຽວກັບບັນຫານີ້ ຊຳພັດຢ້ານ.

ສົງຄາມ ໄດ້ຖືກປະກາດເປັນສົງຄາມແຫ່ງຊາດ, ສົງຄາມປ້ອງກັນ,

ສົງຄາມປະຕິວັດ, ໂດຍໄດ້ຢັ້ງຢືນວ່າ ລັກສະນະສົງຄາມ ໄດ້ປ່ຽນແປງ, ລະບອບເຈົ້າຊາ ຈະຖືກໂຄ່ນລົ້ມບາດດຽວ. ນາຍທຶນ ໄດ້ພະຍາຍາມທຸກສິ່ງ ຢ່າງເພື່ອຮັກສາກອງທັບໄວ້ ທີ່ແນວຣົບ, ບໍ່ປ່ອຍໃຫ້ມີຂະບວນປະຕິວັດເກີດຂຶ້ນຢູ່ໃນຖັນແຖວ ຂອງມັນ.

ຢູ່ໃນຖະແຫລງການ ບໍ່ໄດ້ເວົ້າຫຍັງຫມົດ ກ່ຽວກັບບັນຫາສຳຄັນ ອັນເປັນຕາຍອື່ນໆ ເຊັ່ນບັນຫາກ່ຽວກັບທີ່ດິນ. ໂດຍຢ້ານກົວ, ຕໍ່ການເພີ່ມ ທະວີຂອງຂະບວນການຊາວນາ ເພື່ອທີ່ດິນ ແລະຍ້ອນບໍ່ມີຄວາມເຊື່ອຫມັ້ນວ່າ, ທະຫານຊຶ່ງໃນນັ້ນ ສ່ວນໃຫຍ່ແມ່ນຊາວນາ ຈະປະຕິບັດບົດບາດການກວາດ ລ້າງພາຍໃຕ້ຄວາມຈຳເປັນບໍ່ຫລີບໍ, ລັດຖະບານຊົ່ວຄາວໄດ້ປະກາດ ກ່ຽວກັບການແກ່ຍາວການແກ້ໄຂ ບັນຫາກະສິກຳໄວ້ ຈົນຮອດກອງປະຊຸມສ້າງຕັ້ງ, ແຕ່ວ່າໄລຍະເວລາ ຂອງການຮຽກປະຊຸມນັ້ນ ຊ້ຳບໍ່ໄດ້ແຈ້ງໃຫ້ຮູ້. ລັດຖະບານ ຊົ່ວຄາວໄດ້ຕັດສິນໃຈສະຫລະດິນ ຂອງເຈົ້າຊາ ແລະເຊື້ອເຈົ້າໃຫຍ່ໆ, ນອກຈາກນັ້ນ ຈະສ້າງຕັ້ງຄະນະກຳມະການທີ່ດິນ ຊຶ່ງຈະໄດ້ຖືກມອບຫມາຍ ໃຫ້ກະກຽມກົດຫມາຍກ່ຽວກັບທີ່ດິນສຳລັບກອງປະຊຸມສ້າງຕັ້ງໃນອະນາຄົດ. ແຕ່ວ່າ ຊາວນາເຊື່ອຫມັ້ນຫນ້ອຍທີ່ສຸດຕໍ່ຄວາມສາມາດກອບກູ້ ຂອງມາດຕາການເຫລົ່ານັ້ນ ແລະໄດ້ກ້າວສູ່ ການແກ້ໄຂບັນຫາກະສິກຳ ແບບຕາມໃຈຕົນເອງ ເລື້ອຍໆ ເຊັ່ນ - ຢຶດເອົາດິນ ຂອງເຈົ້າທີ່ດິນ, ຍາດເອົາເຄື່ອງມືກະສິກຳ, ປະຕິເສດຈາກການຈ່າຍຄ່າເຊົ່າ ທີ່ແພງໂພດ ໃຫ້ແກ່ເຈົ້າທີ່ດິນ ແລະອື່ນໆ.

ໃນຂົງເຂດເສດຖະກິດຄວາມຢາກແບບສັດປ່າຂອງພວກນາຍທຶນ ໄດ້ປາກົດອອກ ຢ່າງຜິດປົກກະຕິເປັນພິເສດ. ລັດຖະບານຊົ່ວຄາວໄດ້ລົບລ້າງ

ໝົດສິ່ງສະກັດກັ້ນສຳລັບການສ້າງຮັ່ງມຸ່ມີ ຂອງນາຍທຶນ. ພວກນາຍທຶນ ໄດ້ປ່ອຍມືຂອງຕົນ ເຂົ້າເລິກໃນການຮັບເອົາຊັບສົມບັດເງິນຄຳ ຂອງປະເທດລັດເຊຍ ຊຶ່ງໄດ້ຕົກຢູ່ພາຍໃຕ້ສັນທະ ຂອງລັດຖະບານຊົ່ວຄາວ ເຊັ່ນໄດ້ແຈກຢາຍການບຸດໜູນເງິນ ຂອງລັດຖະບານ, ໄດ້ຂຶ້ນລາຄາຜະລິດຕະພັນການທະຫານ. ການຄ້າເຖື່ອນ ໄດ້ມີຂະໜາດ ທີ່ບໍ່ຮູ້ເລີຍເຫັນມາກ່ອນ.

ເມື່ອຢາດຝົນຄຳແຫ່ງກຳໄລ ຈາກອຳນາດ ທີ່ຂາດການຄວບຄຸມ ໄດ້ຮວຍລົງພໍແລ້ວ, ນາຍທຶນທີ່ມີນທຶນ ໄດ້ຕົກລົງວ່າ, ຈະສາມາດເປີດໃບໄພ້ຂອງບັນຫາກ່ຽວກັບສົງຄາມໄດ້ແລ້ວ. ພວກພັນທະມິດ ໄດ້ບັງຄັບ ໃຫ້ນາຍທຶນຕ້ອງປະຕິບັດແບບນັ້ນ ໃນທັນທີທັນໃດ. ວັນທີ 20 ເດືອນເມສາ ປີ 1917 ຢູ່ ໃນການພິມ ໄດ້ເຜີຍແຜ່ ບັນທຶກ ຂອງ ມິລູກອບ ລັດຖະມູນຕີການຕ່າງປະເທດກ່ຽວກັບການສືບຕໍ່ ສົງຄາມຂອງປະເທດລັດເຊຍ. ການປາໄສ ຂອງລັດຖະມູນຕີ ຜູ້ເດັດດ່ຽວ ຊຶ່ງເຄື່ອນໄຫວ ຕາມການມອບໝາຍ ແລະຕາມຄວາມເຫັນດີ ຢ່າງເຕັມສ່ວນຂອງລັດຖະບານຊົ່ວຄາວນັ້ນ ໄດ້ເຮັດໃຫ້ມະຫາຊົນ ເກີດ ມີຄວາມຮູ້ສຶກ ແບບຟ້າຮ້ອງຍາມແລ້ງ. ທະຫານເປັນພັນໆ ໄດ້ອອກສູ່ຖະໜົນເພື່ອຄັດຄ້ານ ແລະໄດ້ມຸ້ງໜ້າສູ່ອາຄານ ຊຶ່ງໃນເວລານັ້ນລັດຖະບານ ພວມປະຊຸມຢູ່.

ຜູ້ນຳພາສະພາໂຊວຽດ - ພວກແມນເຊວິກ ແລະແອສແອຣ ໄດ້ຮັບຮອງວ່າຈະຊຸ່ນອຽນ ພວກເດີນຂະບວນ ທີ່ຄຽດແຄ້ນ ແລະເກັ້ຍກ່ອມ ລັດຖະບານ ໃຫ້ຜ່ອນຄາຍບັນທຶກນັ້ນລົງ. ຄະນະບໍລິຫານງານສູນກາງ ຂອງພັກໂບນເຊວິກ ໄດ້ຮັບເອົາມະຕິ ຂອງວ.ອ.ເລນິນ ຊຶ່ງໃນນັ້ນ ໄດ້ເວົ້າ ເຖິງວ່າ,

ຄຳຮຽກຮ້ອງປົດລັດຖະມົນຕີຜູ້ໃດຜູ້ໜຶ່ງນັ້ນ ສະແດງເຖິງຄວາມເຂົ້າໃຈ ແບບຮູ້ເທົ່າບໍ່ເຖິງການຂອງມະຫາຊົນ ທີ່ບໍ່ມີບົດຮຽນ ຢູ່ໃນການເມືອງເຊື່ອວ່າພວກເຂົາ ໄດ້ປຽນ ການຕໍ່ສູ້ຊົນຊັ້ນ ດ້ວຍການສັບຊ້ອນບາງຄົນ ຄົນໃໝ່. ໃນມະຕິຂອງເລນິນໄດ້ຂຽນວ່າ: "ມີພຽງແຕ່ພາຍຫລັງ ທີ່ຊາວກຳມາຊີບປະຕິວັດຮ່ວມກັບທະຫານປະຕິວັດ ໃນຮູບຂອງສະພາໂຊວຽດ ຂອງຜູ້ແທນກຳມະກອນແລະທະຫານ ໄດ້ກຳອຳນາດທັງໝົດແຫ່ງລັດ ໄວ້ໃນກຳມືຂອງຕົນ ພາຍໃຕ້ການສະໜັບສະໜູນ ຂອງມະຫາຊົນສ່ວນຫລວງຫລາຍແລ້ວເທົ່ານັ້ນ ຊາວກຳມາຊີບປະຕິວັດຈິງ ຈະສາມາດສ້າງຕັ້ງລັດຖະບານ ໄດ້ ຊຶ່ງແມ່ນກຳມະກອນຂອງທຸກໆປະເທດ ຈະເຊື່ອໝັ້ນແລະຈະເປັນລັດຖະບານແບບດຽວ ທີ່ສາມາດເຮັດໃຫ້ສົງຄາມຊິ່ນສຸດລົງ ໄດ້ຢ່າງວ່ອງໄວ ດ້ວຍສັນຕິພາບແບບປະຊາທິປະໄຕທີ່ແທ້ຈິງ.*

ພາຍໃຕ້ຄຳຂວັນ ຂອງໂບນເຊວິກ ໄດ້ເປີດກວ້າງ ການເດີນຂະບວນ ຢ່າງມີການຈັດຕັ້ງ: ໃນນັ້ນໄດ້ມີຜູ້ເຂົ້າປະກອບສ່ວນຫລາຍກວ່າ 100 ພັນຄົນ. ການເດີນຂະບວນຍັງດຳເນີນໄປໃນສູນກາງອຸດສາຫະກຳອື່ນໆ.

ລັດຖະບານຊົ່ວຄາວ ໄດ້ເສຍຂວັນ. ນາຍພົນກອກນີລອບຜູ້ບັນຊາການກອງທະຫານເມືອງ ເປໂຕຣກຣາດ ໄດ້ສະເໜີຢາກໃຫ້ໃຊ້ອາວຸດ ແລະຍັງຢາກອອກຄຳສັ່ງໃຫ້ຍິງປືນໃຫຍ່, ແຕ່ໃນທີ່ສຸດບັນດາລັດຖະມົນຕີ ທີ່ກໍ່ຢ້ານສັ່ນ ໄດ້ເກ້ຍກ່ອມ ກອກນີລອບ ບໍ່ໃຫ້ເຮັດແບບນັ້ນ. ລັດຖະບານຊົ່ວຄາວ ໄດ້ຕົກຢູ່ໃນສະພາບ ແຫ່ງການພັງທະລາຍ. ສະພາໂຊວຽດ ຂອງຜູ້ແທນກຳມະ

---

* ວ.ອ.ເລນິນ, ນິພົນຄົບຊຸດ,ເຫລັ້ມ 31ດ;ນ້າ 292.

ກອນແລະທະຫານເມືອງເປໂຕຣກຣາດ ທີມີປະຊາຊົນປະກອບອາວຸດສະໜັບສະໜູນ ມີຄວາມສາມາດ ທີຈະກຳອຳນາດໄວ້ ໃນກຳມືຂອງຕົນໄດ້ ໂດຍປາສະຈາກ ການຕ້ານຄືນໃດໆ. ພວກຜູ້ນຳນາຍທຶນນ້ອຍຊ້ຳພັດຢ້ານໄຟລຸກແຮງຂຶ້ນ; ພວກຍອມຈຳນົນ ໄດ້ເວົ້າຊ້ຳແລ້ວຊ້ຳອີກ ດ້ວຍຄວາມຢ້ານວ່າ: ຈຸ້ມຄອງປະເທດ ໂດຍປາສະຈາກ ນາຍທຶນນັ້ນ ເປັນໄປບໍ່ໄດ້.

ພວກຜູ້ນຳນາຍທຶນໄດ້ຕັດສິນໃຈສວຍໃຊ້ຄວາມຢ້ານກົວ ເປົ່າປ້ອນເພື່ອເອົາຕົນອອກ ຈາກສະພາບການ ທີບໍ່ໄປບໍ່ມາ, ທີປະຊາຊົນຜູ້ມີຄວາມ ຂັດຂ້ອງໄດ້ຍູ້ ພວກເຂົາ ໄປບ່ອນນັ້ນ. ຢູ່ໃນກອງປະຊຸມຮ່ວມກັນກັບຜູ້ນຳພາ ສະພາໂຊວຽດ, ພວກລັດຖະມົນຕີ ໄດ້ຮຽກຮ້ອງ ຕໍ່ຜູ້ ທີເຄີຍໄດ້ຊ່ວຍກອບກູ້ນາຍທຶນມາແລ້ວຄັ້ງໜຶ່ງວ່າ: ຊ່ວຍແດ່ຫລີບໍ ກໍ່ກຳອຳນາດເອງສາ. ຜູ້ນຳຂອງພັກແອສແອຣ ແລະແມນເຊວິກ ໄດ້ຕົກລົງເຫັນດີເຂົ້າຮ່ວມ ໃນຄະນະລັດຖະບານເພື່ອກອບກູ້ມັນ: ລັດຖະບານປະສົມ ຊຸດທີໜຶ່ງໄດ້ຖືກສ້າງຂຶ້ນ.

## "ອຳນາດທັງໝົດຕ້ອງເປັນຂອງສະພາໂຊວຽດ!"

ພັກໂບນເຊວິກໄດ້ອອກຈາກການເຄື່ອນໄຫວໃຕ້ດິນ ແລະເປັນເທື່ອທຳອິດໄດ້ມີຄວາມສາມາດເປີດກ້ວາງການເຄື່ອນໄຫວຂອງຕົນຢ່າງອິດສະລະ. ວັນທີ ໕ ມີນາ ໜັງສືພິມ "ປຣາວະດາ" -ສຽງຂອງສູນການ ແລະຄະນະກຳມະການພັກໂບນເຊວິກເມືອງ ເປແຕກບວກ ໄດ້ເລີ່ມຕົ້ນພິມເຜີຍແຜ່ຄືນອີກເທື່ອໃໝ່.

ຄະນະກຳມະການພັກໄດ້ຖືກຈັດຕັ້ງຄືນໃໝ່ບົນພື້ນຖານຂອງລັດທິລວມສູນປະຊາທິປະໄຕ. ໄດ້ກຳນົດການເລືອກຕັ້ງເຂົ້າໃນອົງການພັກຕັ້ງແຕ່ລຸ່ມຮອດເທິງ. ໄດ້ເລີ່ມຕົ້ນພິມເຜີຍແຜ່ໜັງສືພິມຂອງພັກໂບນເຊວິກອອກຢູ່ມົດສະກູ ແລະໃນເຂດອຸດສາຫະກຳອື່ນໆ. ນັກໂບນເຊວິກທີ່ຖືກຈັບດ້ວຍພວກກຳອຳນາດຂອງເຈົ້າຊາໄດ້ຖືກປ່ອຍອອກຈາກຄຸກ. ສະມາຊິກສູນກາງພັກ ແລະ ນັກເຄື່ອນໄຫວຜູ້ມີຊື່ສຽງຂອງພັກ ເຊັ່ນ: ຊືຊິນສະກີ, ກູຍບີເຊັບ, ອອກໂຊນືກິດເຊ, ຊະວອຍຣລອບ, ສະຕາລິນ, ຊາອູມຽນ ແລະອີກຫລາຍຄົນໄດ້ກັບຈາກບ່ອນເນລະເທດ, ຈາກຄຸກ ແລະການລີ້ໄພ.

ສະພາບການໃໝ່ໄດ້ຮຽກຮ້ອງໃຫ້ພັກຕ້ອງມີທິກເລັງໃໝ່, ມີແຜນການຍຸດທະສາດໃໝ່, ມີຍຸດໂທບາຍຕ່າງເກົ່າ ແລະມີຄຳຂວັນແບບອື່ນ.

ໃນຊຸມມື້ທຳອິດຂອງການປະຕິວັດ, ເມື່ອເວລາລີ້ໄພຢູ່ຕ່າງປະເທດວ. ອ. ເລນິນໄດ້ຂຽນ "ຈົດໝາຍຈາກແດນໄກ", ຊຶ່ງໃນນັ້ນໄດ້ວາງແນວທາງຂອງພັກພາຍຫລັງການປະຕິວັດເດືອນກຸມພາ. ເພິ່ນໄດ້ຂຽນວ່າ, ການປະຕິວັດຍັງບໍ່ທັນຊົນສຸດ

ລົງເທື່ອ, ມັນຫາກໍ່ສຳເລັດພຽງແຕ່ຂັ້ນທີ່ໜຶ່ງຂອງມັນເທົ່ານັ້ນ, ກຳມະກອນຕ້ອງໄດ້ສະແດງລັດທິວິລະຊົນ ແລະຕ້ອງຕໍ່ສູ້ໃຫ້ບັນລຸເຖິງໄຊຊະນະໃນຂັ້ນທີ່ສອງຂອງການປະຕິວັດ. ເລນິນໄດ້ວາງໜ້າທີ່ສ້າງກອງຕຳຫຼວດຂອງກຳມະກອນຫຼືວ່າສ້າງກອງໝູນຂອງກຳມະກອນເພື່ອບໍ່ໃຫ້ລັດຖະບານນາຍທຶນຟື້ນຟູ ຕຳຫຼວດເກົ່ານັ້ນຄືນ ແລະກອບກູ້ເອົາລະບອບລາຊາທິປະໄຕໄວ້. "...ບໍ່ໃຫ້ມີຄວາມເຊື່ອໝັ້ນໃດໆ, ບໍ່ໃຫ້ມີການສະໜັບສະໜູນໃດໆຕໍ່ລັດຖະບານໃໝ່;... ປະກອບອາວຸດໃຫ້ຊາວກຳມາຊີບ-ແມ່ນການຮັບປະກັນອັນໜຶ່ງອັນດຽວ; ເລືອກຕັ້ງຢ່າງວ່ອງໄວເຂົ້າໃນສະພາປະຊາຊົນຂອງເມືອງ ເປໂຕຣກຣາດ; ບໍ່ມີການເຂົ້າໃກ້ຊິດໃດໆກັບພັກອື່ນໆ".໑)

ວັນທີ ໓ ເມສາ ໑໙໑໗ ເລນິນ ພ້ອມດ້ວຍໝວດຄົນທີ່ລີ້ໄພໄດ້ກັບຄືນປະເທດລັດເຊຍໂດຍຜ່ານປະເທດເຢຍລະມັນ ແລະ ຊະວິສ ທີ່ເປັນກາງ. ຊຸມປີແຫ່ງການເນລະເທດທີ່ຈຳເປັນໄດ້ຊິ້ນສຸດລົງແລ້ວ. ປະຊາຊົນໄດ້ຕ້ອນຮັບ ຜູ້ນຳພາທີ່ຍິ່ງໃຫຍ່ຂອງຕົນດ້ວຍຄວາມກະຕືລືລົ້ນ. ໃນມື້ຕໍ່ມາ ວ.ອ.ເລນິນ ໄດ້ອ່ານປາໄສຢູ່ວັງ ຕາວຣີ. ກ່ອນອື່ນໝົດເລນິນໄດ້ເວົ້າເຖິງບັນຫາກ່ຽວກັບ ສົງຄາມ. ດັ່ງທີ່ຮູ້ກັນແລ້ວວ່າ, ລັກສະນະຂອງສົງຄາມນັ້ນແມ່ນຖືກກຳນົດດ້ວຍ ຊົນຊັ້ນທີ່ດຳເນີນສົງຄາມນັ້ນ. ສົງຄາມດຳເນີນໂດຍລະບອບເຈົ້າຊາທີ່ໄດ້ນຳພາປະເທດຮ່ວມກັບກຸ່ມຂອງນາຍທຶນໃຫຍ່. ເຈົ້າຊາໄດ້ຖືກໂຄ່ນລົ້ມ, ແຕ່ວ່າອຳນາດໄດ້ຕົກຢູ່ໃນກຳມືຂອງນາຍທຶນ-ສົງຄາມກໍ່ດຳເນີນໄປເພື່ອສິດຜົນປະໂຫຍດຂອງພວກເຂົາ ແລະກໍ່ແມ່ນນາຍທຶນເປັນຜູ້ສືບຕໍ່ສົງຄາມ. ສົງຄາມຈະບໍ່ກາຍເປັນສົງ

---

໑) ວ.ອ.ເລນິນ ນິພົນຄົບຊຸດ ເຫຼັ້ມ ໓໑, ໜ້າ ກ.

ຄາມປະຊາຊົນ,ສົງຄາມປະຕິວັດໄດ້,ມັນຍັງຈະແມ່ນສົງຄາມຈັກກະພັດທັງສຳລັບຝ່າຍປະເທດລັດເຊຍເຖິງວ່າໃນນັ້ນຈະເກີດມີການປະຕິວັດແລ້ວກໍຕາມ. ໜ້າທີ່ມີຢູ່ບ່ອນວ່າ,ຕ້ອງດຳເນີນການໂຄສະນາໃນໝູ່ມະຫາຊົນ,ເຜີຍແຜ່ໃຫ້ເຂົາເຈົ້າເຫັນຄວາມຈິງກ່ຽວກັບລັກສະນະຈັກກະພັດຂອງສົງຄາມ ແລະຊວນເຊື່ອເຂົາເຈົ້າໃຫ້ຮູ້ວ່າ,ສັນຕິພາບແບບປະຊາທິປະໄຕແທ້ໆນັ້ນຈະບໍ່ບັນລຸ ໄດ້ໂດຍປາສະຈາກການໂຄ່ນລົ້ມອຳນາດຂອງນາຍທຶນ,ບໍ່ຄວນຈະເຊື່ອໝັ້ນຕໍ່ລັດຖະບານນາຍທຶນຊຶ່ງຮັບຜິດຊອບຕໍ່ການດຳເນີນສົງຄາມ.

ເລນິນໄດ້ຍ້ຳໃນບົດປາໄສວ່າ,ນັກໂບນເຊວິກບໍ່ແມ່ນນັກລັດລ້ານສົງຄາມທຸກໆປະເພດ; ຖ້າຫາກວ່າອຳນາດຫາກຕົກຢູ່ໃນກຳມືຂອງກຳມະກອນແລະຊາວນາ; ພວກເຂົາຈະລຸກຂຶ້ນຕໍ່ສູ້ເພື່ອປ້ອງກັນອຳນາດນັ້ນ.

ເມື່ອໄດ້ກຳນົດທັດສະນະຂອງນັກໂບນເຊວິກຕໍ່ສົງຄາມແລ້ວ, ເລນິນໄດ້ກ້າວສູ່ການວິເຄາະສະພາບການທາງດ້ານການເມືອງປະຈຸບັນພາຍໃນປະເທດລັດເຊຍ. ລັກສະນະພິເສດອັນສຳຄັນຂອງມັນນັ້ນແມ່ນລະບົບສອງອຳນາດ ຄື: ລັດຖະບານຊົ່ວຄາວ ແມ່ນອົງການອຳນາດຂອງນາຍທຶນ ແລະເຈົ້າທີ່ດິນ,ພ້ອມດຽວກັນນັ້ນກໍໄດ້ສ້າງຕັ້ງອຳນາດອື່ນຂຶ້ນອີກ ຄືສະພາໂຊວຽດ ຊຶ່ງແມ່ນອົງ ການຂອງປະຊາຊົນ. ສະພາໂຊວຽດໄດ້ປົກຄຸມໄປທົ່ວປະເທດອັນກ້ວາງໃຫຍ່ ດ້ວຍຕາໜ່າງອັນໜັ້ນໜຽວ.

ນາຍທຶນແນໃສ່ຈະລົບລ້າງລະບົບສອງອຳນາດ,ແລ້ວກຳເອົາອຳນາດທັງໝົດແຕ່ຜູ້ດຽວ,ຍາດເອົາອຳນາດນັ້ນຈາກສະພາໂຊວຽດ ແລະຍຸບບັນດາສະພາໂຊວຽດ. ຈະກອບກູ້ເອົາການປະຕິວັດໄວ້ໄດ້ນັ້ນມີແຕ່ຕ້ອງຮັກສາສະພາ

ໂຊວຽດໄວ້, ມອບອຳນາດທັງໝົດໃຫ້ສະພາໂຊວຽດ. "ອຳນາດທັງໝົດຕ້ອງເປັນຂອງສະພາໂຊວຽດ!" ນີ້ແມ່ນຄຳຂວັນອັນສຳຄັນຂອງນັກໂບນເຊວິກ.

ແຕ່ວ່າຢູ່ໃນສະພາໂຊວຽດນັ້ນມີພວກ ແອແຊຣ ແລະແມນເຊວິກ ເປັນສ່ວນໃຫຍ່, ນັກໂບນເຊວິກໃນສະພາໂຊວຽດບໍ່ມີຫລາຍ., ຖ້າເປັນແນວນັ້ນ ກໍ່ໝາຍຄວາມວ່ານັກໂບນເຊວິກຕໍ່ສູ້ເພື່ອມອບອຳນາດທັງໝົດໃຫ້ສະພາໂຊວຽດຂອງພວກແອແຊຣ-ແມນເຊວິກ. ເລນິນໄດ້ອະທິບາຍຂໍ້ອັດແຍ່ງທີ່ປະກົດຢູ່ນີ້ວ່າ: ສະພາໂຊວຽດມີອຳນາດ, ນາຍທຶນຮູ້ ແລະເຫັນອັນນີ້ຢູ່ໃນທຸກບາດກ້າວແຫ່ງການເຄື່ອນໄຫວຂອງມັນ. ໃນທີ່ນີ້ຄວາມເວົ້າແມ່ນໝາຍເຖິງການມອບອຳນາດທັງໝົດແກ່ສະພາໂຊວຽດ, ແຕ່ວ່າອັນນີ້ຈະບໍ່ສາມາດບັນລຸໄດ້ຖ້າຫາກບໍ່ຕັດຂາດກັບພວກນາຍທຶນ. ຄຳຂວັນ "ອຳນາດທັງໝົດຕ້ອງເປັນຂອງສະພາໂຊວຽດ!" ກ່ອນອື່ນໝົດແມ່ນໝາຍເຖິງການຕັດແຍກຈາກພວກນາຍທຶນ, ຕັດແຍກ ແລະທັບມ້າງກົງຈັກອຳນາດແຫ່ງລັດຂອງນາຍທຶນ, ສ້າງຕັ້ງກົງຈັກລັດແບບໃໝ່ ບົນພື້ນຖານຂອງສະພາໂຊວຽດທີ່ກວມໄປໝົດທົ່ວປະເທດແລ້ວ.

ແນ່ນອນແລ້ວວ່າ, ການມອບອຳນາດທັງໝົດແກ່ສະພາໂຊວຽດນັ້ນໃນກະໂຕຂອງມັນກໍ່ຈະບໍ່ເຮັດໃຫ້ທາດແທ້ນາຍທຶນນ້ອຍຂອງພວກ ແອແຊຣ ແລະແມນເຊວິກປ່ຽນແປງໄດ້: ພວກເຂົາຍັງຈະຄອນແຄນ, ຫງ່ວມເຫງົານຳອັນເກົ່າອ່ຽງໄປຫາການລົງລອຍກັບພວກນາຍທຶນ. ແຕ່ວ່າໃນໄລຍະນໍ່ງນີ້ການຄອນແຄນຈະເຮັດໃຫ້ຕົນຮູ້ສຶກວ່າຕ້ອງເລືອກເອົານາຍທຶນ ຫລືວ່າປະຊາຊົນ.

ໃນນີ້ສຳຄັນເປັນພິເສດຕ້ອງໄດ້ໃຫ້ຂໍ້ສັງເກດວ່າ, ຄຳຂວັນ "ອຳນາດທັງໝົດຕ້ອງເປັນຂອງສະພາໂຊວຽດ!" ນີ້ບໍ່ໄດ້ໝາຍເຖິງການສ້າງຕັ້ງລັດ ຖະ

ບານຈາກພັກທີ່ມີຈຳນວນສ່ວນໃຫຍ່ໃນສະພາໂຊວຽດຫມົດ. ມັນບໍ່ຄືກັນກັບວິທີການຄຸ້ມຄອງແບບເກົ່າເລີຍທີ່ວ່າພັກທີ່ກຳອຳນາດຈະແຕ່ງຕັ້ງລັດຖະມົນຕີຊຶ່ງຈະກາຍເປັນຫົວຫນ້າກະຊວງເກົ່າ,ທະບວງເກົ່າ ແລະຈະລາຍງານໃຫ້ລັດຖະສະພາຫລືວ່າອົງການທີ່ປ່ຽນລັດຖະສະພາ. ພາຍໃຕ້ການຮັກສາກົງຈັກລັດຖະບານເກົ່າຊຶ່ງເຈົ້າທີ່ດິນ ແລະນາຍທຶນເປັນຜູ້ສ້າງຕັ້ງຂຶ້ນເພື່ອປ້ອງກັນອຳນາດ ຂອງພວກເຂົານັ້ນ, ມາດຕາການອັນທີ່ເຖິງຖອງກ່ວາຫມູ່ຂອງລັດຖະມົນຕີຈະຕົກຖືກແຮ້ວອາຍາສິດ ຫລືວ່າຈະຖືກດັດແປງຢ່າງມີຊຸບາຍດ້ວຍພວກຂ້າລາຊະການທີ່ມີບົດຣຽນ ແລະຈະເສຍລັກສະນະເຖິງຖອງຂອງຕົນໄປ. ກົງຈັກເກົ່າ, ໂດຍສະເພາະພາລະບົດບາດການລົງໂທດ, ກົດຂີ່, ບັນຊາຂອງມັນ-ຕຳຫລວດ, ສານ, ກອງທັບ-ຕ້ອງຖືກທັບມ້າງ ແລະປ່ຽນດ້ວຍສະພາໂຊວຽດ. ສະພາໂຊວຽດຂອງຈະນຳພາປະຊາຊົນທີ່ເຕົ້າໂຮມໂດຍສະພາໂຊວຽດ ແລະໂດຍຜ່ານສະພານີ້ຂອງປະຊາຊົນຈະໄດ້ຄຸ້ມຄອງລັດ.

ຈົນເຖິງເວລານີ້ນັກມາກຊິດຈຶ່ງເຫັນວ່າສາທາລະນະລັດລັດຖະສະພາແມ່ນຮູບການທາງດ້ານການເມືອງເພື່ອຂ້າມຜ່ານສູ່ສັງຄົມນິຍົມ. ແຕ່ວ່າ ໂດຍອີງໃສ່ບົດຣຽນຂອງກອມມູນປາຣີ ແລະການເຄື່ອນໄຫວຂອງສະພາໂຊວຽດໃນການປະຕິວັດລັດເຊຍເທື່ອທີ່ຫນຶ່ງ ແລະໂດຍສະເພາະພາຍຫລັງການປະຕິວັດເດືອນກຸມພາ, ວ.ອ. ເລນິນໄດ້ສະຫລຸບວ່າ, ອຳນາດໂຊວຽດແມ່ນຮູບການການຈັດຕັ້ງທີ່ດີເດັ່ນຂອງສັງຄົມທີ່ໄດ້ສ້າງຂຶ້ນບົນພື້ນຖານສັງຄົມນິຍົມ.

ການສະຫລຸບຂອງເລນິນແມ່ນຄຳເວົ້າໃຫມ່ໃນການຂະຫຍາຍລັດທິມາກ.

ໃນນະໂຍບາຍທາງດ້ານກະສິກຳຂອງພັກແມ່ນຍັງຍຶດຫມັ້ນໃນຄຳ ຣຽກ

ຮ້ອງອັນເກົ່າ ຄື ຕ້ອງຢຶດເອົາດິນຂອງເຈົ້າທີ່ດິນໂດຍບໍ່ມີການຊົດເຊີຍ ແລະກໍ່ໂອນເອົາດິນທັງຫມົດມາເປັນຂອງລັດ. ເລນິນໄດ້ສະເຫນີໃຫ້ຄຳນຶງເຖິງການພັນແຍກທາງຊົນຊັ້ນຢູ່ໃນຊົນນະບົດ ແລະໃຫ້ສຸມຄວາມເອົາໃຈໃສ່ຕໍ່ການສ້າງຕັ້ງສະພາໂຊວຽດຂອງຜູ້ແທນຈາກພວກໄພ່ນາ. ນໍລະດົກຕັ້ງແຕ່ ໑໐໐ ຫາ ໓໐໐ ເຮັກຕາໄດ້ສະເຫນີໃຫ້ສ້າງເສດຖະກິດແບບຢ່າງດ້ວຍເງິນສ່ວນລວມພາຍໃຕ້ການນຳພາຂອງສະພາຜູ້ແທນໄພ່ນາ. ອັນນີ້ແມ່ນການສືບຕໍ່ເສີມຂະຫຍາຍໂຄງການກະສິກຳຂອງເລນິນໃນເງື່ອນໄຂຕົວຈິງອັນໃຫມ່. ໃຫ້ດິນແກ່ຊາວນາຈະສາມາດເຮັດໄດ້ໂດຍປາສະຈາກການປະຕິວັດ, ແຕ່ວ່າຈະມອບດິນແກ່ຊາວນາທຸກ ແລະສະຫນອງອຸປະກອນເຄື່ອງມືໃຫ້ເຂົາ (ມີແຕ່ສອງມືເປົ່າຈະທຳມາຫາກິນຢູ່ດິນທີ່ໄດ້ຮັບແລ້ວນັ້ນບໍ່ໄດ້) ນັ້ນຈະສາມາດເຮັດໄດ້ກໍ່ມີແຕ່ດ້ວຍເສັ້ນທາງການປະຕິວັດສັງຄົມນິຍົມເທົ່ານັ້ນ.

ໃນຂົງເຂດອຸດສາຫະກຳ ເລນິນໄດ້ສະເຫນີໃຫ້ດຳເນີນການກວດກາໂດຍສະພາໂຊວຽດຕໍ່ການຜະລິດ ແລະການແຈກຢາຍຜະລິດຕະພັນ, ໃຫ້ມີການຮວບຮວມທຸກໆທະນາຄານເຂົ້າເປັນທະນາຄານແຫ່ງຊາດລວມອັນດຽວ. ທັງຫມົດມາດຕາການເຫລົ່ານີ້ພ້ອມກັບການໂອນເອົາທີ່ດິນມາເປັນຂອງລັດ ບໍ່ແມ່ນການສ້າງພື້ນຖານສັງຄົມນິຍົມໃນປະເທດຢ່າງວ່ອງໄວ, ແຕ່ວ່າເວົ້າລວມແລ້ວ, ຢູ່ໃນການຂະຫຍາຍຕົວຂອງຕົນນັ້ນມັນຫມາຍເຖິງການຂ້າມຜ່ານສູ່ສັງຄົມນິຍົມ.

ເລນິນໄດ້ສະເຫນີໃຫ້ຕັດຂາດຢ່າງສົມບູນຈາກສາກົນທີ ໒ ທີ່ໄດ້ເຫັນພ້ອມນຳຝ່າຍຈັກກະພັດ ແລະກ້າວສູ່ການສ້າງຕັ້ງສາກົນໃຫມ່ທີ່ຈະບໍ່ມີລັດທິສວຍໂອກາດ ແລະລັດທິສັງຄົມ-ຊາດໃຫຍ່. ເລນິນເຫັນວ່າມີຄວາມຈຳເປັນ ຕ້ອງ

ປ່ຽນກະໂຕຊື່ຂອງພັກ ຄືຕ້ອງໃສ່ຊື່ພັກກອມມູນິດແທນພັກສັງຄົມປະຊາທິປະໄຕ, ເພາະວ່າຜູ້ນຳຂອງພັກສັງຄົມປະຊາທິປະໄຕເກືອບໝົດທົ່ວໂລກໄດ້ທໍລະຍົດຕໍ່ສັງຄົມນິຍົມ. ຈຸດແນວນີ້ຈະໃຫ້ລັກສະນະແກ່ເປົ້າໝາຍແຫ່ງການຕໍ່ສູ້ຂອງພັກໄດ້ຖືກຕ້ອງກວ່າ ຄືການກໍ່ສ້າງສັງຄົມກອມມູນິດ.

ອັນນີ້ແຫລະແມ່ນທິດນຳໃໝ່ຂອງພັກໂບນເຊວິກ. ມັນຢັ້ງຢືນໃຫ້ເຫັນວ່າພັກໄດ້ວາງແນວທາງສູ່ສັງຄົມນິຍົມ. ມັນແມ່ນໂຄງການທີ່ແນໃສ່ເຮັດໃຫ້ການປະຕິວັດປະຊາທິປະໄຕ-ນາຍທຶນກາຍເປັນການປະຕິວັດສັງຄົມນິຍົມ.

ທັງໝົດພັກນາຍທຶນ ແລະພັກປະຕິຮູບຖືໂຄງການຂອງພັກໂບນເຊວິກນັ້ນຄືກັນກັບປາຍຫອກ. ໃນໜ້າໜັງສືພິມໄດ້ຂຽນວ່າ ເລນິນໄດ້ປັກຄັນທຸງສົງຄາມກາງເມືອງ,ວ່າເລນິນນັ້ນບໍ່ຄຳນຶງເຖິງສິດຜົນປະໂຫຍດຂອງໝົດທົ່ວທັງປະເທດ.

ຍ້ອນຄວາມຄຽດຊັງເລນິນ ແລະຊັງແນວຄິດການປະຕິວັດສັງຄົມນິຍົມຂອງເພິ່ນ,ນາຍທຶນໄດ້ໃສ່ຮ້າຍປ້າຍສີຢ່າງແປກປະຫລາດ,ໂດຍຕູ່ຫາວ່າເລນິນມີການພົວພັນກັບກອງບັນຊາການສູງສຸດຂອງກອງທັບເຢຍລະມັນ. ສະຖານທູດຂອງປະເທດມະຫາອຳນາດພັນທະມິດໄດ້ສະໜັບສະໜູນການໃສ່ຮ້າຍປ້າຍສີດັ່ງກ່າວ(ຖ້າຫາກວ່າບໍ່ໄດ້ຈັດຕັ້ງ). ໃນນີ້ແຫ່ງການລໍຖ້າການກັບມາຂອງເລ-ນິນ,ວັນທີ ໓ ເມສາ ສະຖານທູດອັງກິດໄດ້ແຈ້ງໃຫ້ກະຊວງການຕ່າງປະເທດຂອງລັດເຊຍວ່າ,ເລນິນແມ່ນ "ຄົນທີ່ອັນຕະລາຍທີ່ສຸດ" ແລະຈະມີຜູ້ສືບທອດຫລາຍໆຄົນ. ສະຖານທູດຝະລັ່ງກໍໄດ້ເຕືອນໃຫ້ຮູ້ກ່ອນກ່ຽວກັບການກັບມາຂອງເລນິນໂດຍຜ່ານເຢຍລະມັນ. ກະຊວງການຕ່າງປະເທດບໍ່ໄດ້ເມີນເສີຍຕໍ່ການ

ເດືອນເຫລົ່ານີ້: ຜູ້ຮອງຂອງ ມີລູກອບ ໄດ້ສັ່ງໃຫ້ແຈ້ງການກ່ຽວກັບການກັບ
ມາຂອງເລນິນ, ແຕ່ບໍ່ເປີດເຜີຍກ່ຽວກັບຫລັກຖານ, ໝາຍຄວາມວ່າ ບໍ່ໄດ້ບອກ
ວ່າຜູ້ໃດໄດ້ແນະນຳໃຫ້ເລີ່ມຕົ້ນການໃສ່ຮ້າຍປ້າຍສີແບບນີ້ຕໍ່ຜູ້ນຳພາທີ່ຍິ່ງໃຫຍ່
ຂອງພັກໂບນເຊວິກ.

ແຕ່ວ່າອັນນີ້ກໍ່ບໍ່ສາມາດຂູ່ເຂັນນັກໂບນເຊວິກ ແລະກໍ່ບໍ່ສາມາດເຮັດໃຫ້
ພວກເຂົາຄອນແຄນໄດ້ແຕ່ຢ່າງໃດ: ໂດຍໄດ້ປະກອບອາວຸດທີ່ຖືກຕ້ອງ ແລະ
ຈະແຈ້ງດ້ວຍໂຄງການເລນິນ, ພວກເຂົາໄດ້ດຳເນີນວຽກງານໃນໝູ່ມະຫາຊົນ
ຢ່າງກ້ວາງຂວາງກວ່າເກົ່າ. ສຽງຂອງໂບນເຊວິກໄດ້ດັງກ້ອງໄປທົ່ວທຸກບ່ອນ,
ຢູ່ໂຮງຈັກ, ໂຮງງານ, ໃນຄ້າຍທະຫານ, ໃນແຖວຊື້ເຂົ້າຈີ່, ຕາມຖະໜົນ. ຍໍ່
ຮອດສອງເດືອນຈຳນວນສະມາຊິກຂອງພັກໄດ້ເພີ່ມທະວີຂຶ້ນເກືອບສອງເທົ່າເມື່ອ
ທຽບໃສ່ຈຳນວນທີ່ມີໃນເວລາທີ່ພັກໄດ້ອອກຈາກການເຄື່ອນໄຫວປິດລັບ. ການ
ເພີ່ມທະວີຂຶ້ນຄືແນວນີ້ໄດ້ຢັ້ງຢືນໃຫ້ເຫັນຢ່າງຈະແຈ້ງວ່າ, ກຳມະກອນ ແລະຊາວ
ຜູ້ອອກແຮງງານທັງໝົດໄດ້ຊາບຊຶ້ງແນວຄິດຂອງເລນິນໄວຄືແນວໃດ.

24/VII ຫ້າມຈຳໜ່າຍ

## "ການຫັນແປັນເອີລົບໄປພ້ອມບາດ": ການຮ່ວມ ປະສົມກຳອຳນາດ

ການຮ່ວມປະສົມຂອງພັກການເມືອງໃນການຄຸ້ມຄອງປະເທດນັ້ນແມ່ນອັນ
ໃໝ່ສຳລັບປະເທດລັດເຊຍ. ກ່ອນໜ້ານັ້ນນາຍທຶນແມ່ນເບິກບານດ້ວຍການ ຄົງ

ຕົວຢູ່ໃຕ້ປີກຂອງອິນຊີສອງຫົວຂອງເຈົ້າຈັກກະພັດ: ລະບອບເຈົ້າຊາໄດ້ປົກປ້ອງພວກເຂົາຈາກການປະຕິວັດບຸກໜ້າຂອງມະຫາຊົນ ແລະດ້ວຍເງື່ອນມີທີ່ແຂງແຮງໄດ້ເປີດກ້ວາງຕະຫລາດສຳລັບພວກເຂົາໃນຕ່າງປະເທດ. ຄວາມຈິງແລ້ວ, ຕາມການເຕີບໃຫຍ່ທາງດ້ານເສດຖະກິດຂອງຕົນ, ນາຍທຶນໄດ້ໄຝ່ຝັນຢາກຍຶນເຖິງຂັ້ນກຳອຳນາດເພື່ອບໍ່ໃຫ້ໄດ້ແບ່ງລາຍໄດ້ຂອງຕົນໃຫ້ພວກກຳອຳນາກໃນລະບອບເຈົ້າຊາ.

ພັກຂອງນາຍທຶນນ້ອຍຍິ່ງຮູ້ໜ້ອຍກ່ຽວກັບສະພາບການທາງດ້ານ ການເມືອງຄືແນວນີ້, ເຊັ່ນການຮ່ວມປະສົມ: ພວກເຂົາແຮງບໍ່ໄດ້ຖືກປ່ອຍໃຫ້ຮູ້ແລະບໍ່ໄດ້"ຢູ່ແຖວໜ້າ" ຂອງອຳນາດເລີຍ.

ແຕ່ວ່າບາດກ້າວຂອງການຕໍ່ສູ້ຊົນຊັ້ນໄດ້ບັງຄັບໃຫ້ລັດຖະບານນາຍທຶນຕ້ອງໄດ້ສ້າງວິທີການໃໝ່ແຫ່ງການກຳອຳນາດ: ໃນທ້ອງເດືອນເມສາ ນາຍທຶນໄດ້ເຫັນແຈ້ງແລ້ວວ່າ, ເຂົາຜູ້ດຽວຈະບໍ່ສາມາດແກ້ໄຂສະພາບການໄດ້. ໂດຍມີນເມົານຳຜົນສຳເລັດທາງດ້ານການເມືອງຢ່າງບໍ່ຄາດຝັນນັ້ນ, ຜູ້ນຳພັກນາຍທຶນນ້ອຍພັດລືມສາວ່າຕົນໄດ້ທໍລະຍົດຕໍ່ນັກສັງຄົມນິຍົມ ແລະໄດ້ເຂົ້າປະກອບຢູ່ໃນຄະນະລັດຖະບານນາຍທຶນ, ທີ່ໄດ້ດຳເນີນນະໂຍບາຍຕ້ານການປະຕິວັດຢ່າງເປີດເຜີຍ. ມັນແມ່ນການຍອກແບບຊົ່ວຊາມທີ່ສຸດກັບປະຫວັດສາດ: ໃນການປະຕິວັດເທື່ອທີໜຶ່ງຂອງລັດເຊຍພວກນັກສັງຄົມນິຍົມນາຍທຶນນ້ອຍໄດ້ປະຕິເສດເຂົ້າປະກອບໃນຄະນະລັດຖະບານປະຕິວັດພາຍໃຕ້ຂໍ້ອ້າງວ່າບໍ່ດຳເນີນວຽກງານໃດໆກັບຕົວແທນນາຍທຶນ, ສ່ວນວ່າໃນການປະຕິວັດເທື່ອທີສອງພວກເຂົາຊ້ຳພັດເຂົ້າຢູ່ໃນຄະນະລັດຖະບານຕ້ານປະຕິວັດ. ພວກເຂົາບໍ່ອັບອາຍຈັກດີວ່າ, ນາຍທຶນທີ່ໄດ້

ໄຫວ້ວອນການຊ່ວຍເຫລືອນັ້ນເຖິງຢ່າງໃດກໍ່ຕ້ອງພະຍາຍາມຮັກສາທ່າໄດ້ປຽບຂອງຕົນໄວ້ຢູ່ ເຊັ່ນວ່າ: ໃນຄະນະລັດຖະບານປະສົມມີຕົວແທນ ໑໐ ຄົນຈາກພັກນາຍທຶນ ແລະ ໖ ຄົນຈາກພັກຂອງນັກສັງຄົມນິຍົມນາຍທຶນນ້ອຍ.

ໂດຍບໍ່ມີບົດຮຽນເປັນຂອງຕົນເອງ, ພັກນາຍທຶນ ແລະນາຍທຶນນ້ອຍຂອງລັດເຊຍຈະສາມາດອີງໃສ່ພຽງແຕ່ແບບຢ່າງອັນຮັ່ງມີຂອງຕາເວັນຕົກເທົ່ານັ້ນ. ຢູ່ຕາເວັນຕົກການປະກອບສ້າງລັດຖະບານຈາກຕົວແທນຂອງພັກຕ່າງໆໄດ້ກາຍເປັນພຶດຕິກຳທີ່ຫມັ້ນຄົງແລ້ວເລີ່ມຕັ້ງແຕ່ປີ ໑໘໔໘ ພຸ້ນໃນເມື່ອ ຫລຸຍບະລັງ ນັກສັງຄົມນິຍົມນາຍທຶນນ້ອຍເຂົ້າປະກອບໃນຄະນະລັດຖະບານນາຍທຶນຂອງປະເທດຝະລັ່ງ. ພວກນັກສັງຄົມນິຍົມຕາເວັນຕົກເອງກໍ່ພໍໃຈທີ່ຈະແບ່ງບົດຮຽນຂອງຕົນໃຫ້ລັດເຊຍ. ຄະນະຜູ້ແທນຈາກປະເທດຝະລັ່ງ, ອັງກິດ, ສະຫະລັດອາເມລິກາ ຊຶ່ງວ່າໃນນັ້ນສ່ວນໃຫຍ່ແມ່ນນັກສັງຄົມນິຍົມໄດ້ສົ່ງເຂົ້າມາປະເທດລັດເຊຍຢ່າງລຽນຕິດ. ພວກເຂົາໄດ້ຊວນເຊື່ອ, ໃຫ້ຄຳແນະນຳ, ຊັກຊວນເປັນສຽງດຽວໃຫ້ເພື່ອນລັດເຊຍຂອງຕົນປະຕິບັດຕາມແບບຢ່າງຂອງພວກເຂົາແລະຈັດຕັ້ງລັດຖະບານປະສົມ.

ດັ່ງທີ່ພຶດຕິກຳທາງດ້ານການເມືອງອັນຮັ່ງມີທີ່ສຸດຂອງທຶນນິຍົມໄດ້ເຜີຍແບໃຫ້ເຫັນແລ້ວວ່າ ຄວາມຄິດແຫ່ງການປະສົມນັ້ນ, ໂດຍພື້ນຖານແລ້ວແມ່ນ ເພື່ອຕອບສະຫນອງສອງຫນ້າທີ່. ຫນ້າທີ່ຫນຶ່ງ, ຕ້ອງສ້າງຜ້າສາກ "ສັງຄົມນິຍົມ" ໃຫ້ແກ່ຕົນ ແລະພາຍໃຕ້ການປົກປິດດ້ວຍຜ້າສາກນັ້ນຈະສືບຕໍ່ນະໂຍບາຍ ແຫ່ງການຮັກສາທຶນນິຍົມຂອງຕົນໄວ້; ຈັດຕັ້ງໃຫ້ເປັນແບບຝາກຳແພງຊຶ່ງຈະຊ່ວຍສະກັດກັ້ນການບຸກຫນ້າຂອງກະແສຟອງປະຕິວັດ, ຊຶ່ງຈະຊ່ວຍລົດຜ່ອນຄົນທະເລແຫ່ງ

ຄວາມຄຽດແຄ້ນຂອງປະຊາຊົນ. ຫນ້າທີ່ທີສອງ, ໂດຍໃຊ້ເງື້ອມມືຂອງຜູ້ອື່ນເພື່ອເຮັດໃຫ້ບັນລຸສິ່ງທີ່ນາຍທຶນບໍ່ສາມາດບັນລຸໄດ້. ລັດຖະບານທີ່ມີພັກດຽວສະໄຫມເກົ່າບໍ່ຮູ້ຈະປຸກລະດົມມະຫາຊົນສືບຕໍ່ເຮັດສົງຄາມໄດ້, ແຕ່ກົງກັນຂ້າມ ໄດ້ປະກາດກ່ຽວກັບບັນຫານັ້ນວ່າເກືອບຈະແມ່ນຄວາມພະຍາຍາມເທື່ອທຳອິດ ທີ່ຈະເຮັດໃຫ້ນາຍທຶນຂາດອຳນາດ. ບັດນີ້ນັກວິຊາການນາຍທຶນນ້ອຍຕ້ອງໄດ້ ອີ່ນອອຍໃຫ້ມະຫາຊົນສືບຕໍ່ສົງຄາມ. ລັດຖະບານທີ່ມີພັກດຽວສະໄຫມເກົ່າບໍ່ ສາມາດຈັກຊວນຊາວນາໃຫ້ໂຈະການແກ້ໄຂບັນຫາວ່າດ້ວຍທີ່ດິນ. ບັດນີ້ພວກລັດຖະມົນຕີສັງຄົມນິຍົມຕ້ອງພະຍາຍາມເຮັດໃຫ້ບັນລຸການຊຸ່ມອຽມຊາວນາ, ຕ້ອງໄດ້ໂຈະການແກ້ໄຂບັນຫາທີ່ດິນ, ສ່ວນວ່າໃນຂັ້ນຕໍ່ໄປແລ້ວຈະຖອນບັນຫານີ້ອອກຈາກລາຍການທັງຫມົດ.

ການຄິດໄລ່ຂອງນາຍທຶນ ແລະຜູ້ໃຫ້ຄຳເຕືອນຈາກຕ່າງປະເທດ ຂອງເຂົານັ້ນຢາກຄຶງວ່າຖືກຕ້ອງຢູ່. ນັກວິຊາການນາຍທຶນນ້ອຍ, ສຸດທີ່ຮູ້ບຸນຄຸນຍ້ອນພວກເຂົາໄດ້ຖືກເລື່ອນຕຳແຫນ່ງເປັນລັດຖະມົນຕີຊຶ່ງໄດ້ດຳເນີນແນວທາງເພື່ອປົກປັກຮັກສາລະບອບທຶນນິຍົມ.

ກ່ອນອື່ນຫມົດ, ອັນນີ້ແມ່ນກ່ຽວຂ້ອງເຖິງໂຄງສ້າງແຫ່ງລັດ. ນາຍທຶນພະຍາຍາມທີ່ຈະຮັກສາກົງຈັກຈາກລະບອບເກົ່າໄວ້ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້. ສະພາເຊນັດ (ອົງການທີ່ປຶກສາຂອງເຈົ້າຊາ) ກໍ່ຍັງຮັກສາໄວ້, ຊຶ່ງໃນສ່ວນປະກອບຂອງມັນນັ້ນລະບອບເຈົ້າຊາໄດ້ສະເຫນີເອົາແຕ່ຜູ້ທີ່ບໍລິສຸດສັດຊື່ ຕໍ່ຕົນເທົ່ານັ້ນ. ລັດຖະສະພາດູມາຂອງນາຍທຶນເຈົ້າທີ່ດິນທີ່ເລືອກຕັ້ງຂຶ້ນຕາມກົດຫມາຍເຈົ້າຊາ, ຊຶ່ງໄດ້ກຳຈັດສິດເປັນຕົວແທນຂອງປະຊາຊົນທີ່ສຸດນັ້ນກໍ່ຍັງ ຖືກ

ຮັກສາໄວ້. ຍິ່ງໄປກວ່ານັ້ນ, ລັດຖະສະພາດູມານີ້ຍັງໄດ້ປະຊຸມກັນເລື້ອຍຕາມຈຳນວນຂອງຜູ້ແທນທຸກໆສະໄໝ ແລະກໍໄດ້ຫຍຸ້ງກ່ຽວເອົາໃນສິດຜົນປະໂຫຍດຂອງນາຍທຶນ, ໃນການແກ້ໄຂບັນຫາແຫ່ງລັດ. ໃນການປະຊຸມເຫລົ່ານີ້ ພວກລາຊາໄດ້ຂຶ້ນກ່າວປາໄສແບບເປີດເຜີຍເລື້ອຍໆຊຶ່ງຮຽກຮ້ອງໃຫ້ວາງມາດ ຕາການອັນເດັດດ່ຽວເພື່ອສະກັດກັ້ນການປະຕິວັດ. ພວກລັດຖະມົນຕີ "ສັງຄົມ ນິຍົມ", ຜູ້ແທນເກົ່າກໍມັກຂຶ້ນກ່າວປາໄສຕັ້ງຫລາຍຄັ້ງພ້ອມກັບພວກລາຊາ ແລະຜູ້ແທນຂອງລັດຖະສະພາອື່ນໆ, ຊຶ່ງບໍ່ໄດ້ຫວງໃຫ້ລົບລ້າງ "ລັດຖະສະພາກະເທີນ" ຂອງເຈົ້າຊານີ້ຈັກດີ, ຍິ່ງໄປກວ່ານີ້ຍັງສະໜັບສະໜູນຄວາມເອົາໃຈກ່ຽວ ກັບນິຕິທຳແຫ່ງການຄົງຕົວຂອງສຳນັກງານດັ່ງກ່າວນີ້. ລາຊາທິປະໄຕໄດ້ຖືກໂຄ່ນລົ້ມ, ແຕ່ວ່າລັດຖະບານປະສົມກໍຍັງບໍ່ທັນໄດ້ປະກາດກ່ຽວກັບການສ້າງຕັ້ງສາທາລະນະລັດ. ບັນຫາກ່ຽວກັບຮູບການປົກຄອງຈະໄດ້ຖືກໂຈະໄວ້ຈົນຮອດກອງປະຊຸມສ້າງຕັ້ງ, ແຕ່ວ່າໄລຍະເວລາຂອງການຮຽກປະຊຸມນັ້ນກໍຍັງບໍ່ທັນໄດ້ປະກາດເທື່ອ. ໃນກອງທັບກໍຍັງແມ່ນນາຍພົນເກົ່າຂອງເຈົ້າຊາ. ກົດໝາຍຂອງເຈົ້າຊາກໍຍັງແຕະຕ້ອງບໍ່ໄດ້ຢູ່ຄືເກົ່າ. ສາມາດເວົ້າໄດ້ວ່າ, ປະເທດລັດເຊຍ ສະໄໝນັ້ນກໍຍັງແມ່ນປະເທດລັດເຊຍລາຊາທິປະໄຕ...ທີ່ປາສະຈາກລາຊາ.

ຢູ່ໃນລັດຖະບານປະສົມໄດ້ມີການແບ່ງງານພິເສດໃນການແກ້ໄຂບັນຫາກ່ຽວກັບສົງຄາມກໍຄືກັນກັບໃນການແກ້ໄຂບັນຫາອື່ນໆແຫ່ງຍຸກສະໄໝ ເຊັ່ນ:ລັດຖະມົນຕີ–ນັກສັງຄົມນິຍົມເປັນຜູ້ເວົ້າ, ສ່ວນຕົວແທນນາຍທຶນນັ້ນເປັນຜູ້ກະທຳ. ຄຳເວົ້າ, ບົດປາໄສທັງໝົດ, ໜັງສືພິມຂອງພວກນັກສັງຄົມນິຍົມນາຍທຶນນ້ອຍໄດ້ຖືກເຕັມໄປດ້ວຍຄຳຮຽກຮ້ອງ, ຂໍ້ອ້າງ, ຄຳຢັ້ງຢືນວ່າລັກສະນະຂອງສົງຄາມນັ້ນ ໄດ້

ປ່ຽນແປງ, ວ່າປະຈຸບັນນີ້ສົງຄາມພວມດຳເນີນໄປບໍ່ແມ່ນເພື່ອສິດຜົນປະໂຫຍດຂອງເຈົ້າຊາ, ແຕ່ຫາກແມ່ນເພື່ອກອບກູ້ເອົາການປະຕິວັດ. ພວກນັກສັງຄົມນິຍົມ-ນາຍທຶນຍັງໄດ້ເຫັນດີເຫັນພ້ອມກັບຄຳຂວັນຂອງນັກໂບນເຊວິກ ເຊັ່ນ ສັນຕິພາບໂດຍປາສະຈາກການຄອບຄອງ ແລະການໃຊ້ຄ່າເສຍຫາຍທາງດ້ານການທະຫານ, ຊຶ່ງໄດ້ກາຍເປັນຄຳຮຽກຮ້ອງຂອງປະຊາຊົນ, ແຕ່ວ່າພວກເຂົາຍັງໄດ້ພະຍາຍາມປັບຄຳຂວັນນີ້ເຂົ້າໃສ່ສິດຜົນປະໂຫຍດຂອງນາຍທຶນ ເຊັ່ນ: ພວກເຂົາເຂົ້າໃຈວ່າການຄອບຄອງນັ້ນແມ່ນການປົດປ່ອຍປະຊາຊາດທີ່ຖືກ ຍຶດຄອງໃນບາດກ້າວຂອງສົງຄາມໃນເວລານັ້ນ, ແຕ່ຫາກບໍ່ແມ່ນການເອົາເປັນຫົວເມືອງຂຶ້ນຂອງຈັກກະພັດຈັກດີ. ຢູ່ໃນແນວຣົບໄດ້ມີການດັດແປງລະບົບການຈັດຕັ້ງການທະຫານຢ່າງຟ້າວຟັ່ງຕັ້ງແຕ່ຂອດລຸ່ມສຸດຈົນເຖິງກອງພົນ ແລະແນວຣົບ. ໃນນັ້ນສ່ວນໃຫຍ່ແມ່ນພວກນັກສັງຄົມນິຍົມນາຍທຶນນ້ອຍທີ່ໄດ້ດຳເນີນແນວ ທາງການເມືອງອັນດຽວກັນຄື ຊວນເຊື່ອທະຫານໃຫ້ເຫັນຄວາມຈຳເປັນໃນການສືບຕໍ່ສົງຄາມ.

ຢູ່ໃນບັນຫາກ່ຽວກັບການກຳນົດວັນງານ ๘ ຊົ່ວໂມງນັ້ນພວກນັກສັງຄົມນິຍົມ-ນາຍທຶນນ້ອຍແມ່ນຍັງຢູ່ໃນທັດສະນະຂອງນາຍທຶນ ຊຶ່ງຮຽກຮ້ອງໃຫ້ຊາວຜູ້ອອກແຮງງານບໍ່ໃຫ້ຕໍ່ສູ້ເພື່ອການລົດຜ່ອນວັນງານລົງ.

ລັດຖະບານປະສົມໄດ້ສະໜັບສະໜູນຄຳຮຽກຮ້ອງຂອງເຈົ້າທີ່ດິນແລະນາຍທຶນໃນການໂຈະການແກ້ໄຂບັນຫາກະສິກຳຈົນຮອດກອງປະຊຸມສ້າງຕັ້ງ. ຊາວນາບັບນັ້ນບໍ່ເຊື່ອປະໂຫຍກນີ້ໜ້ອຍລົງໂດຍໄດ້ກ້າວສູ່ການແກ້ໄຂບັນຫາດ້ວຍຕົນເອງ. ເພື່ອຕອບໂຕ້, ລັດຖະບານໄດ້ເພີ່ມທະວີການບີບບັງຄັບຊຶ່ງລັດຖະມົນ

ຕິ-ສັງຄົມນິຍົມຕ້ອງໄດ້ຮັບຜິດຊອບຢ່າງເຕັມສ່ວນຕໍ່ສິ່ງເຫລົ່ານີ້ ຄື: ພວກເຂົາ ໄດ້ປິດບັງພຶດຕິກຳການປາບປາມດ້ວຍຄັນທຸງ "ສັງຄົມນິຍົມ".

ໃນບັນຫາຊົນຊາດ ລັດຖະບານປະສົມບໍ່ພຽງແຕ່ໄດ້ຕໍ່ສູ້ຕ້ານຄວາມເປັນເຈົ້າຕົນເອງຂອງຊົນຊາດເທົ່ານັ້ນ, ແຕ່ຍັງໄດ້ຕໍ່ສູ້ຕ້ານຢ່າງແຂງແຮງກັບ ການເປີດກ້ວາງສິດຂອງເຂົາເຈົ້າໃນຂົງເຂດການກໍ່ສ້າງຊາດ ເຊັ່ນ: ການເລືອກຜູ້ນຳພາຂອງຕົນ, ສອນພາສາຊາດຂອງຕົນຢູ່ໃນໂຮງຮຽນ ແລະອື່ນໆ. ຕາມທາດແທ້ແລ້ວການປະສົມຍັງຮັກສາ "ຄຸກຂອງປະຊາຊົນ" ຂອງເຈົ້າຊາໄວ້ຢູ່, ມີແຕ່ໄດ້ທາສີປົກມັນຕື່ມເລັກໆນ້ອຍໆຊື່ໆ.

ການເຄື່ອນໄຫວທັງໝົດເຫລົ່ານີ້, ຖືກແທ້ແມ່ນການບໍ່ໄດ້ເຄື່ອນໄຫວຫຍັງໝົດ ແມ່ນການເພີຍແຜ່ຕົນເອງຂອງທັງໝົດລັດຖະບານ ແລະລັດຖະມົນຕີ-ນັກສັງຄົມນິຍົມຂອງມັນ. ດ້ວຍສັນຊາດຍານທາງຊົນຊາດຂອງຕົນ ປະຊາຊົນໄດ້ຮູ້ສຶກວ່າ, ສິດຜົນປະໂຫຍດຂອງພວກເຂົາໄດ້ຖືກທໍລະຍົດດ້ວຍຄວາມຫລົງລືມ; ຮູ້ວ່າຄູສອນຊົ່ວຄາວຂອງພວກເຂົາ ຄື: ຜູ້ນຳພາຂອງພວກ ແອແຊຣແລະແມນເຊວິກທັງໝົດນີ້ໄດ້ຫລີກຫ່າງຈາກຊາວຜູ້ອອກແຮງງານໄປເລື້ອຍໆ. ສັນຊາດຍານແບບຕາມມີຕາມເກີດຂອງມະຫາຊົນໄດ້ສະແດງອອກຢູ່ໃນການກະທຳທີ່ຕັ້ນຕົວ, ພວກເຂົາໄດ້ເລີ່ມຖອນຜູ້ແທນທີ່ບໍ່ສາມາດຕອບສະໜອງຄວາມມຸ່ງຫວັງຂອງຕົນອອກຈາກສະພາໂຊວຽດ ແລະໄດ້ສົ່ງນັກໂບນເຊວິກອື່ນແທນພວກເຂົາ. ຂະບວນວິວັດຂອງການເລືອກຕັ້ງຜູ້ແທນຄືນໃໝ່ໄດ້ດຳເນີນໄປຢ່າງວ່ອງໄວເປັນພິເສດໃນຕົວເມືອງ ເປໂຕຣກຣາດ.

ນັກໂບນເຊວິກຍາມໃດກໍ່ອີງໃສ່ບ່ອນວ່າ, ໜ້າທີ່ພື້ນຖານຂອງພັກ ແມ່ນ

ການປົກປັກຮັກສາສິດຜົນປະໂຫຍດຂອງຊາວກຳມາຊີບ, ຊາວຜູ້ອອກແຮງງານ ແລະຜູ້ທີ່ຖືກຂູດຣີດທັງຫມົດ. ພາຍຫລັງການໂຄ່ນລົ້ມລະບອບເຈົ້າຊາ, ໃນຕົວຈິງ ແລ້ວອຳນາດກໍ່ຍັງຕົກຢູ່ໃນກຳມືຂອງນາຍທຶນ ແລະເຈົ້າທີ່ດິນ. ບາດລ້ອນອັນພົ້ນ ຖານຂອງກຳລັງປະຕິວັດປະຈຸບັນຈະໄດ້ໂມ່ງໃສ່ເພື່ອຕ້ານກັບພວກນີ້ເອງ.

## ວິກິດການຄັ້ງທີສອງຂອງອຳນາດ: ກຳມະກອນ ແລະກອງທະຫານຂອງນະຄອນຫລວງສະຫນັບ ສະຫນູນພັກໂບນເຊວິກ

ນາຍທຶນມີຄວາມຫວັງຈະເລີ່ມຕົ້ນການບຸກໂຈມຕີດ້ວຍກອງທັບລັດເຊຍຢູ່ ແນວຫນ້າ. ມະຫາອຳນາດພັນທະມິດທີ່ສະຫນອງເງິນ ແລະອາວຸດແກ່ປະເທດ ລັດເຊຍໄດ້ທວງຢ່າງເອົາຈິງເອົາຈັງໃຫ້ບຸກໂຈມຕີ. ການບຸກໂຈມຕີນີ້ຈະຊ່ວຍ ໃຫ້ນາຍທຶນມີທາງອອກຈາກສະພາບທີ່ອັນຕະລາຍແມ່ນແຕ່ໃນກໍລະນີໄດ້ຮັບຜົນ ສຳເລັດຫລືວ່າບໍ່ໄດ້ຮັບຜົນສຳເລັດ. ຜົນສຳເລັດຂອງການບຸກໂຈມຕີຈະນຳໄປ ສູ່ການປັບປຸງອຳນາດ, ສູ່ການຟື້ນຟູອິດທິພົນໃນກອງທັບ; ໃນກໍລະນີທີ່ບໍ່ໄດ້ຮັບຜົນ ຈາກການບຸກໂຈມຕີນັ້ນຈະສາມາດໂຍນຄວາມຜິດທັງຫມົດໃຫ້ພວກທີ່ຕ້ານສົງຄາມ ໃຫ້ນັກໂບນເຊວິກ. ພວກເຂົາໄດ້ຄາດຄະເນຈະຂ້າການປະຕິວັດໃນທັງສອງກໍ ລະນີຂອງສົງຄາມ. ທັງຫມົດຂ່າວຂອງນາຍທຶນ ແລະນາຍທຶນນ້ອຍໄດ້ຮຽກ ຮ້ອງເປັນສຽງດຽວໃຫ້ຟື້ນຟູການເຄື່ອນໄຫວສູ້ຮົບ. ພວກລັດຖະມົນຕີ-ນັກສັງຄົມ

ນິຍົມ ແລະພັກຂອງພວກເຂົາດັ່ງທີ່ປະຊາຊົນເອີ້ນເປັນ "ຫົວໂປ່ເກັຍກ່ອມ ໄດ້ເວົ້າ, ໄດ້ຮຽກຮ້ອງ, ໄດ້ຍື່ນຂູ່... ໃນເວລານັ້ນກອງບັນຊາການກອງທັບໄດ້ປົດອາວຸດກອງພົນທີ່ເຫັນວ່າບໍ່ໝັ້ນຄົງ, ໄດ້ຈັບ ແລະສົ່ງນັກຮົບຂວາຍ-ໂບນເຊວິກຫລືວ່າພວກທີ່ເຂົາເຫັນວ່າເຫັນພ້ອມນຳການໂຄສະນາຕ້ານການສືບຕໍ່ເຮັດ ສົງຄາມນັ້ນອ໊ນສານ, ໄດ້ຄົ້ນຄ້ວາຄືນແຜນການແຫ່ງການກະກຽມຍຸດທະວິທີການເຮັດສົງຄາມ.

ພວກນາຍທຶນເຂົ້າໃຈແລ້ວວ່າ, ຈະບັງຄັບດ້ວຍກຳລັງອັນດຽວນັ້ນໃຫ້ທະຫານສືບຕໍ່ສົງຄາມເປັນໄປບໍ່ໄດ້. ກີແຣນສະກີ ທີ່ໄດ້ຖືກແຕ່ງຕັ້ງເປັນລັດຖະມົນຕີການທະຫານໄດ້ກະກຽມຄຳສັ່ງກ່ຽວກັບການບຸກໂຈມຕີໄວ້ລ່ວງໜ້າແລ້ວ, ແຕ່ກໍບໍ່ໄດ້ແຈ້ງວ່າຈະເລີ່ມຕົ້ນການບຸກໂຈມຕີນັ້ນເວລາໃດ. ກີແຣນສະກີ ຕ້ອງການໃຫ້ມີການຮັບຮອງເອົາດ້ວຍມະຕິຂອງກອງປະຊຸມໃຫຍ່ຂອງສະພາໂຊວຽດທົ່ວລັດເຊຍຄັ້ງທີ ໑ ຊຶ່ງຈະໄດ້ໄຂຂຶ້ນໃນວັນທີ ໓ ມີຖຸນາ.

ໃນກອງປະຊຸມໃຫຍ່ຄັ້ງນີ້ມີຜູ້ແທນເຂົ້າຮ່ວມຫລາຍກວ່າພັນຄົນ, ໃນນັ້ນມີຜູ້ແທນໂບນເຊວິກຢູ່ ໑໐໕ ຄົນ. ມີສະພາໂຊວຽດຂອງຜູ້ແທນກຳມະກອນ, ທະຫານ ແລະຊາວນາປະມານ ໔໐໐ ແຫ່ງໄດ້ສົ່ງຜູ້ແທນຂອງຕົນເຂົ້າຮ່ວມ ໃນກອງປະຊຸມໃຫຍ່. ມີພຽງແຕ່ມະຕິຕົກລົງຂອງກອງປະຊຸມໃຫຍ່ອັນດຽວກໍພຽງພໍແລ້ວສຳລັບການເຮັດໃຫ້ອຳນາດຕົກຢູ່ໃນກຳມືຂອງສະພາໂຊວຽດ. ນັກ ໂບນເຊວິກໄດ້ສະເໜີເຮັດແນວນີ້ແຫລະ. ແຕ່ວ່າພວກຫົວໜ້າຂອງບັນດາພັກ ທີ່ເຫັນດີເຫັນພ້ອມນຳນາຍທຶນໄດ້ຄັດຄ້ານຢ່າງເດັດດ່ຽວ ແລະເອົາຈິງເອົາຈັງຕໍ່ຄວາມອາດສາມາດດັ່ງກ່າວໂດຍອ້າງອີງໃສ່ວ່າຄຸ້ມຄອງປະເທດໂດຍປາສະຈາກ

ນາຍທຶນນັ້ນເປັນໄປບໍ່ໄດ້. ໜຶ່ງໃນຈຳນວນລັດຖະມົນຕີ-ນັກສັງຄົມນິຍົມຍັງຖະແຫລງວ່າ, ໃນປະເທດນີ້ບໍ່ມີພັກໃດເລີຍຊຶ່ງກຽມພ້ອມແລ້ວທີ່ຈະກຳເອົາການຄຸ້ມຄອງລັດໃຫ້ແກ່ຕົນເອງພຽງແຕ່ຜູ້ດຽວ.

ວ.ອ.ເລນິນຊຶ່ງເປັນຜູ້ແທນຂອງກອງປະຊຸມໃຫຍ່ໄດ້ຮ້ອງຕອບໂຄສົກຜູ້ນັ້ນຈາກບ່ອນວ່າ: "ມີ! ພັກຄືແນວນັ້ນ". ເມື່ອໄດ້ຮັບອະນຸຍາດໃຫ້ປະກອບຄຳເຫັນ, ເລນິນໄດ້ເວົ້າວ່າ, ນັກໂບນເຊວິກກຽມພ້ອມແລ້ວທີ່ຈະກຳເອົາອຳນາດຖ້າຫາກວ່າພວກເຂົາໄດ້ຮັບຄວາມເຊື່ອໝັ້ນ. ເພິ່ນໄດ້ສະເໜີໂຄງການຂອງພັກຊຶ່ງນັກໂບນເຊວິກໄດ້ໃຊ້ເພື່ອໂຄສະນາໃນໝູ່ມະຫາຊົນ. ເປັນເທື່ອທີສອງທີ່ເລນິນໄດ້ຂຶ້ນກ່າວຄຳປາໄສໃນກອງປະຊຸມໃຫຍ່ກ່ຽວກັບບັນຫາວ່າດ້ວຍ ສົງຄາມ, ໂດຍໄດ້ເຜີຍແຜ່ເຈດຈຳນົງຂອງນາຍທຶນ ແລະໄດ້ກ່າວຕອບຄັດຄ້ານຢ່າງເດັດດ່ຽວຕໍ່ການກະກຽມບຸກໂຈມຕີ.

ພວກຫົວໜ້າຂອງພັກທີ່ເຫັນດີເຫັນພ້ອມນຳນາຍທຶນໄດ້ຂຶ້ນກ່າວຄັດຄ້ານເລນິນຢ່າງຕໍ່ເນື່ອງກັນ. ໂດຍບໍ່ເອົາຫົວຊາວ່າຄວາມຄັດຄ້ານທີ່ມີຢ່າງຫລວງຫລາຍນັ້ນຈະຫັນປ່ຽນມາເປັນສິ່ງທີ່ຕ້ານຕົນເອງດ້ວຍການອະທິບາຍຂອງຕົນນັ້ນເຊັ່ນວ່າ: ຜູ້ແທນທຳມະດາຢາກບໍ່ຢາກກໍ່ຕ້ອງໄດ້ຄິດນຳຄວາມຄິດເຫັນຂອງເລນິນທີ່ໄດ້ເຮັດໃຫ້ພວກຫົວໜ້າພັກຊຶ່ງເຫັນພ້ອມນຳນາຍທຶນນັ້ນຕ້ອງໄດ້ກ່າວ ຄັດຄ້ານຢ່າງດົນນານ ແລະເອົາຈິງເອົາຈັງ. ມີພວກ ແອແຊຣ ແລະແມນເຊວິກຈຳນວນບໍ່ໜ້ອຍທີ່ໄດ້ຖືກຊວນເຊື່ອໂດຍເລນິນນັ້ນໄດ້ຫັນມາເຂົ້າຝ່າຍໂບນເຊວິກພາຍຫລັງກອງປະຊຸມໃຫຍ່.

ແຕ່ເຖິງຢ່າງໃດກໍ່ຕາມ ພວກທີ່ເຫັນດີເຫັນພ້ອມນຳນາຍທຶນກໍ່ສາມາດ

ສ້າງມະຕິຊຶ່ງເຫັນດີນຳການຮ່ວມປະສົມກັບນາຍທຶນ ແລະຮັບຮູ້ວ່າ ແນວທາງການເມືອງຂອງລັດຖະບານປະສົມນັ້ນຖືກຕ້ອງ.

ມີຄະນະຜູ້ແທນຂອງກຳມະກອນ ແລະທະຫານຂອງນະຄອນຫລວງຫລາຍໆຄະນະໄດ້ເຂົ້າຢ້ຽມຢາມກອງປະຊຸມໃຫຍ່. ເພື່ອສະແດງຄວາມຂຳນັບຜູ້ແທນ, ພວກເຂົາໄດ້ສະແດງຄວາມເຊື່ອໝັ້ນຢ່າງເດັ່ງຮ້ອນ ແລະເດັດດ່ຽວວ່າ ກອງປະຊຸມໃຫຍ່ຈະຕົກລົງມອບອຳນາດໃຫ້ແກ່ສະພາໂຊວຽດ. ຄວາມ ບໍ່ກົງກັນລະຫວ່າງອາລົມຄະຕິ ແລະມະຕິຂອງກອງປະຊຸມໃຫຍ່ໄດ້ສະແດງອອກຢ່າງປະຈັກຕາ. ຄວາມແຄ້ນເຄືອງແບບຕາມມີຕາມເກີດໄດ້ເພີ່ມທະວີຂຶ້ນ. ໄດ້ສົ່ງຄວາມຮຽກຮ້ອງໃຫ້ເດີນຂະບວນສະແດງຄວາມຄັດຄ້ານ. ແຕ່ວ່າອັນນີ້ ຊ້ຳແຮ່ງກົງກັບຈິດໃຈຂອງນັກເຄື່ອນໄຫວນາຍທຶນ ເພາະວ່າພວກເຂົາຫວັງຈະສວຍໃຊ້ການຕໍ່ສູ້ແບບຕາມມີຕາມເກີດ, ເພື່ອປາບປາມຂະບວນການປະຕິວັດ. ພວກນັກໂບນເຊວິກໄດ້ຕົກລົງຫັນປ່ຽນຄວາມແຄ້ນເຄືອງຂອງປະຊາຊົນທີ່ເພີ່ມຂຶ້ນແບບຕາມມີຕາມເກີດນີ້ໃຫ້ກາຍເປັນການເດີນຂະບວນທີ່ມີການຈັດຕັ້ງແບບສັນຕິ ແລະສະແດງໃຫ້ເຫັນວ່າ, ມະຕິຂອງກອງປະຊຸມໃຫຍ່ບໍ່ກົງກັນກັບອາລົມຄະຕິ ແລະຄວາມມຸ່ງຫວັງຂອງຊາວຜູ້ອອກແຮງງານຂອງນະຄອນຫລວງ.

ການເດີນຂະບວນນີ້ໄດ້ຄາດໃສ່ວັນທີ ໑໐ ມິຖຸນາ. ໜັງສືພິມກໍໄດ້ຂຽນກ່ຽວກັບການເດີນຂະບວນນີ້. ຜູ້ແທນກອງປະຊຸມໃຫຍ່ໄດ້ຮູ້ກ່ຽວກັບການເດີນຂະບວນ. ຢູ່ໃນໂຮງຈັກ, ໂຮງງານ, ໃນກອງທະຫານໄດ້ມີການກະກຽມປ້າຍ ຄຳຂວັນ ແລະຄັນທຸງ.

ແຕ່ວ່າວັນທີ ໙ ມິຖຸນາ ມີພຽງແຕ່ເທົ່າໃດຊົ່ວໂມງກ່ອນຈະຮອດເວລາ

ເລີ່ມຕົ້ນການເດີນຂະບວນ, ພວກຫົວໜ້າຂອງພັກທີ່ເຫັນພ້ອມນຳນາຍທຶນ ໄດ້ຫວງໃຫ້ລົບລ້າງການເດີນຂະບວນ. ພວກເຂົາໄດ້ພະຍາຍາມຊີ້ແຈງວ່າ, ນັກໂບນເຊວິກໄດ້ຫັກຫລັງກອງປະຊຸມໃຫຍ່ ແລະກະກຽມ "ການລົບລິດກະບົດ" ເພື່ອຢຶດອຳນາດ. ໃນຕົວຈິງແລ້ວບໍ່ແມ່ນແຕ່ອົງການຈັດຕັ້ງດຽວຂອງນັກໂບນເຊວິກ, ບໍ່ມີໝວດນັກໂບນເຊວິກແມ່ນແຕ່ໝວດດຽວທີ່ຈະໄດ້ສະເໜີຢຶດອຳນາດ. ການລົບລິດກະບົດນີ້ບໍ່ແມ່ນນັກໂບນເຊວິກເປັນຜູ້ກະກຽມ, ແຕ່ຫາກແມ່ນພວກນາຍທຶນ, ພວກຫົວໜ້າພັກທີ່ເຫັນດີເຫັນພ້ອມນຳນາຍທຶນທີ່ໄດ້ຮຽກຮ້ອງໃຫ້ປົດອາວຸດນັກໂບນເຊວິກຢ່າງເປີດເຜີຍ, ໃຫ້ລົບລ້າງກອງທະຫານແດງທີ່ໄດ້ສ້າງຂຶ້ນຢູ່ຕາມໂຮງຈັກໂຮງງານເພື່ອປ້ອງກັນການປະຕິວັດ. ຄະນະກຳມະການທີ່ມາຈາກຕົວແທນຂອງພັກນາຍທຶນນ້ອຍທີ່ໄດ້ຖືກສ້າງຂຶ້ນພິເສດດ້ວຍ ກອງປະຊຸມໃຫຍ່ໂດຍບໍ່ມີການເຂົ້າຮ່ວມຂອງນັກໂບນເຊວິກໄດ້ຕົກລົງເກືອດຫ້າມການເດີນຂະບວນ.

ນັກໂບນເຊວິກໄດ້ຕົກລົງປະຕິບັດຕາມມະຕິຕົກລົງຂອງກອງປະຊຸມໃຫຍ່ຂອງສະພາໂຊວຽດ. ໝົດຄືນຂອງວັນທີ ๙ ມິຖຸນາ ແລະຈົນຮອດເຊົ້າຂອງມື້ໃໝ່ສະມາຊິກສູນກາງ, ສະມາຊິກຂອງອົງການຈັດຕັ້ງໂບນເຊວິກໄດ້ເລາະໄປຕາມໂຮງຈັກ, ໂຮງງານ, ກອງທະຫານໂດຍໄດ້ຊວນເຊື່ອໃຫ້ກຳມະກອນ ແລະທະຫານອົດກັ້ນບໍ່ໃຫ້ເດີນຂະບວນ. ວັນທີ ໑໐ ມິຖຸນາ ບໍ່ມີວິສາຫະກິດໃດ, ບໍ່ມີພາກສ່ວນກອງທະຫານໃດຈະອອກສູ່ຖະໜົນເດີນຂະບວນ. ອັນນີ້ແມ່ນສິ່ງ ຢັ້ງຢືນທີ່ຈະແຈ້ງ, ເດັ່ນຊັດທີ່ສຸດເຖິງວ່າ, ນັກໂບນເຊວິກຂອງນະຄອນຫລວງມີອິດທິພົນຄືແນວໃດ. ມັນຍັງແມ່ນການສະແດງອອກໃຫ້ເຫັນເຖິງລັກສະນະມີການຈັດ

ຕັ້ງຂອງພັກໂບນເຊວິກ.

ໂດຍບໍ່ເຊື່ອໝັ້ນຕໍ່ພັກໂບນເຊວິກ, ພວກຄວບຄຸມກອງປະຊຸມໃຫຍ່ ໄດ້ສ້າງຕັ້ງໜ່ວຍພິເສດເປັນສິບໆໜ່ວຍ, ໂດຍມອບໝາຍໃຫ້ໜ່ວຍເຫລົ່ານີ້ເລາະຕາມກອງທະຫານ ແລະວິສາຫະກິດຕ່າງໆຂອງນະຄອນຫລວງເພື່ອກວດກາວ່າມະຕິກ່ຽວກັບການເກືອດຫ້າມການເດີນຂະບວນນັ້ນໄດ້ຖືກປະຕິບັດຫລືບໍ່. ຜູ້ແທນທີ່ມີຫລາຍກວ່າ ໔໐໐ ຄົນ, ໃນແຕ່ລະໜ່ວຍມີຜູ້ແທນເຂົ້າຮ່ວມເຖິງ ໑໐ ຫລືວ່າຫລາຍກວ່ານັ້ນ – ໄດ້ໄປເລາະຕາມວິສາຫະກິດ ແລະກອງທະຫານ ແລະໄດ້ຕື່ນເມື່ອເຫັນວ່າ, ພັກໂບນເຊວິກໄດ້ມານີ້ແລ້ວ ແລະໄດ້ປະຕິບັດຕາມມະຕິຂອງກອງປະຊຸມໃຫຍ່. ແຕ່ວ່າ "ພວກນັກກອດກາ" ຍັງເຫັນແຈ້ງບໍ່ພຽງແຕ່ຫັດສະນະຄວາມຊື່ສັດຂອງພັກໂບນເຊວິກຕໍ່ມະຕິຕົກລົງຂອງກອງປະຊຸມໃຫຍ່ເທົ່ານັ້ນ, ພວກເຂົາຍັງໄດ້ທຳຄວາມຮູ້ຈັກກັບອາລົມຄະຕິທີ່ແທ້ຈິງຂອງມະຫາຊົນອີກ ເຊັ່ນວ່າ: ຢູ່ທຸກໆບ່ອນໄດ້ມີການເວົ້າເຖິງຄວາມບໍ່ເຫັນດີກັບມະຕິແບບເຫັນດີນຳນາຍທຶນຂອງກອງປະຊຸມໃຫຍ່, ໄດ້ທວງໃຫ້ມອບອຳນາດແກ່ສະພາໂຊວຽດ. ໂດຍຢ້ານວ່າຈະເສຍອິດທິພົນໃນໝູ່ມະຫາຊົນ, ຄະນະປະທານຂອງກອງປະຊຸມໃຫຍ່ໄດ້ຕົກລົງຈັດຕັ້ງການເດີນຂະບວນ, ແຕ່ວ່າໃຫ້ຢູ່ພາຍໃຕ້ ການນຳພາຂອງຕົນ.

ວັນທີ ໑໘ ມິຖຸນາ ໄດ້ມີການເດີນຂະບວນ. ມີຄົນເຂົ້າຮ່ວມປະມານ ໕໐໐ ພັນຄົນ. ສ່ວນໃຫຍ່ຂອງຜູ້ທີ່ໄປເດີນຂະບວນນັ້ນແມ່ນເດີນພາຍໃຕ້ຄຳຂວັນຂອງໂບນເຊວິກ "ອຳນາດທັງໝົດຕ້ອງເປັນຂອງສະພາໂຊວຽດ!". ຜູ້ແທນຈຳນວນໜຶ່ງຂອງກອງປະຊຸມໃຫຍ່ ແລະພວກທີ່ເຫັນພ້ອມກັບນາຍທຶນ ໄດ້

ສົມທົບກັນເຂົ້າເປັນໝວດທີ່ບໍ່ໃຫຍ່ເດີນຂະບວນພາຍໃຕ້ປ້າຍຄຳຂວັນ " ຈົ່ງເຊື້ອໝັ້ນຕໍ່ລັດຖະບານ!". ແມ່ນແຕ່ກະບອກສຽງທີ່ເປັນທາງການທີ່ຢູ່ໃນກຳມືຂອງພວກທີ່ເຫັນພ້ອມນຳນາຍທຶນ,"ອິສວອຍສະເຕຍ ຂອງສະພາໂຊວຽດເມືອງ ເປໂຕຣກຣາດ" ກໍ່ໄດ້ຮັບຮູ້ວ່າ ການເດີນຂະບວນໄດ້ດຳເນີນໄປພາຍໃຕ້ຄຳຂວັນຂອງໂບນເຊວິກ.

ການເດີນຂະບວນຍັງໄດ້ດຳເນີນໄປທີ່ເມືອງ ມົດສະກູ,ມິນສະເກິ,ກີແອຟ,ຣີກາ,ກຣາສນາຢາກສະເກິ ແລະໃນຕົວເມືອງອື່ນໆ. ຈຳນວນຄົນ ທີ່ເດີນຂະບວນໃນຕົວເມືອງເຫລົ່ານັ້ນມີໜ້ອຍກວ່າຢູ່ນະຄອນຫລວງ ແຕ່ວ່າມັນ ກໍ່ໄດ້ດຳເນີນໄປພາຍໃຕ້ຄຳຂວັນໂບນເຊວິກ.

ການເດີນຂະບວນໃນເດືອນມິຖຸນາໄດ້ເຮັດໃຫ້ອຳນາດເກີດວິກິດການເປັນຄັ້ງທີສອງ. ມະຫາຊົນອັນກວ້າງຂວາງໄດ້ເຫັນແຈ້ງແລ້ວໃນຕົວຈິງວ່າລັດຖະບານປະສົມບໍ່ສາມາດຈະຄຸ້ມຄອງປະເທດຊາດໄດ້. ບໍ່ມີບັນຫາສຳຄັນທີ່ເປັນຕາຍແມ່ນແຕ່ບັນຫາດຽວ ເຊັ່ນ ບັນຫາສົງຄາມ,ບັນຫາທີ່ດິນ,ບັນຫາສະກັດກັ້ນການກອບໂກຍປຸ້ນສະດົມຈັບສົມບັດຂອງປະເທດລັດເຊຍໂດຍພວກນາຍທຶນ,ການລົບລ້າງໄພອຶດຢູ່ຂອງຄວາມອຶດຫິວໃດໆທີ່ຈະໄດ້ຖືກແກ້ໄຂ.

ຄວາມພະຍາຍາມຂອງພວກທີ່ເຫັນພ້ອມນຳນາຍທຶນທີ່ຈະດຳເນີນເສັ້ນທາງ "ທີສາມ" ພິເສດຂອງຕົນ – ແນວທາງທີ່ບໍ່ແມ່ນນາຍທຶນ ແລະບໍ່ ແມ່ນກຳມາຊີບນັ້ນກໍ່ໄດ້ຖືກເພີຍແພ. ຢູ່ໃນການຕໍ່ສູ້ທາງຊົນຊັ້ນທີ່ຂ້ຽວຂາດນີ້ຈະບໍ່ສາມາດມີເສັ້ນທາງທີສາມໄດ້: ພວກ ແອແຊຣ ແລະແມນເຊວິກບໍ່ຕ້ອງການ ຈະຮັບຮູ້ ແລະສະໜັບສະໜູນຊາວກຳມາຊີບ ແລະພັກຂອງເຂົາຈົ່ງໄດ້ຄ່ອຍໆ

ຄານໄປຫາຝ່າຍນາຍທຶນ. ອິທິພົນຂອງພວກເຂົາຕໍ່ມະຫາຊົນໄດ້ມາເຖິງບ່ອນອາວະສານແລ້ວ.

ເຫດການເດືອນມິຖຸນາໄດ້ຢັ້ງຢືນໃຫ້ເຫັນຢ່າງເດັ່ນຊັດທີ່ສຸດເຖິງຄວາມຖືກຕ້ອງຂອງແນວທາງນະໂຍບາຍຂອງໂບນເຊວິກ. ຊາວຜູ້ອອກແຮງງານຂອງນະຄອນຫລວງໄດ້ສາມັກຄີກັນອ້ອມຂ້າງພັກໂບນເຊວິກຊຶ່ງສະແດງໃຫ້ເຫັນເຖິງໄຊຊະນະທີ່ຫລີກລຽງບໍ່ໄດ້ແຫ່ງການນຳພາຂອງພວກເຂົາໃນທົ່ວປະເທດ.

## ວິກິດການທາງດ້ານການເມືອງຄັ້ງທີສາມ: ການຢຶດເອົາອຳນາດທັງຫມົດໂດຍນາຍທຶນ

ການເລືອກເອົາວັນທີ ໑໘ ມິຖຸນາ ເປັນວັນສຳລັບການເດີນຂະບວນນັ້ນບໍ່ແມ່ນເລື່ອງບັງເອີນ. ໃນມັ້ນໄດ້ວາງຄາດຫມາຍການບຸກໂຈມຕີທີ່ແນວຫນ້າ: ພວກເຂົາໄດ້ພະຍາຍາມສວຍໃຊ້ການເດີນຂະບວນຕາງຫນ້າໃຫ້ກອງປະຊຸມໃຫຍ່ ແລະບັນດາມະຕິຂອງກອງປະຊຸມໃຫຍ່ເພື່ອປົກປ້ອງເຈດຈຳນົງອັນປ່າເຖື່ອນ...ເພື່ອປາບປາມການປະຕິວັດດ້ວຍສົງຄາມ.

ພວກທີ່ຮ່ວມປະສົມກຳອຳນາດໄດ້ຂຽນ ແລະໄດ້ເວົ້າກ່ຽວກັບການ ບຸກໂຈມຕີເທື່ອນີ້ຫລາຍທີ່ສຸດ. ທະຫານໄດ້ເກີດຄວາມເບື່ອຫນ່າຍຍ້ອນການລວມມິດຕິງ ແລະການອົ່ນອອຍທີ່ບໍ່ມີຍາມຈົບສຸດ. ສ່ວນວ່າການກະກຽມທາງດ້ານເຕັກນິກ–ການທະຫານເພື່ອບຸກໂຈມຕີນັ້ນໄດ້ດຳເນີນໄປແບບຂາດໆເຂີນໆ.

ຕາມຄວາມຈິງແລ້ວກອງບັນຊາການຂອງກອງທັບນັ້ນໄດ້ຖືກຈຳກັດດ້ວຍແຜນການອັນເກົ່າຂອງການບຸກໂຈມຕີ, ທີ່ວ່ານັກສືບໄດ້ແຈ້ງໃຫ້ຝ່າຍກົງກັນຂ້າມຮູ້ແຕ່ດົນແລ້ວ, ແລະຝ່າຍກົງກັນຂ້າມກໍໄດ້ກະກຽມການປ້ອງກັນຢ່າງທັນການ. ກອງທັບຂອງແນວຣົບດ້ານຕາເວັນຕົກສ່ຽງໃຕ້ໄດ້ເລີ່ມຕົ້ນການບຸກໂຈມຕີກ່ອນ. ວັນທີ ໑໗ ມີຖຸນາ ທະຫານ ໓໐໐ ພັນຄົນໄດ້ບຸກທະລຸແນວໜ້າຂອງຝ່າຍກົງກັນຂ້າມໃນຊົ່ວໄລຍະໄກເຖິງ ໔໐ ກິໂລແມັດ. ແຕ່ວ່າຝ່າຍກົງກັນຂ້າມທີ່ໄດ້ ປະກອບອາວຸດດີກວ່າ ແລະໄດ້ກຽມພ້ອມຢ່າງທັນການນັ້ນໄດ້ເລີ່ມບຸກໂຈມຕີຕ້ານຄືນ ແລະໄດ້ເຮັດໃຫ້ກອງທັບລັດເຊຍເສຍໄຊ.

ສຳຄັນຕ້ອງຍ້ຳຕື່ມວ່າ, ກອງບັນຊາການໄດ້ສົ່ງກອງພົນທີ່ວ່າໃນນັ້ນ ອິທິພົນຂອງໂບນເຊວິກສູງທີ່ສຸດເຂົ້າສູ້ຣົບ. ອັນນີ້ໄດ້ຢັ້ງຢືນໃຫ້ເຫັນອີກເທື່ອ ໜຶ່ງວ່າ, ການບຸກໂຈມຕີນີ້ມີເປົ້າໝາຍເພື່ອປາບປາມການປະຕິວັດ, ກ່ອນອື່ນ ໝົດແມ່ນປາບປາມກຳລັງທີ່ນຳໜ້າຂອງມັນຄືພັກໂບນເຊວິກ. ກະບອກສຽງທີ່ສຳຄັນຂອງພວກ ກາເດ ໜັງສືພິມ "ວາທີ" (ເຣດເຊີ) ໄດ້ຂຽນຢ່າງມິນທິນແລະເປີດເຜີຍທີ່ສຸດວ່າ: "ບໍ່ຕ້ອງສົງໄສເລີຍວ່າ, ການບຸກໂຈມຕີຈະຕ້ອງແມ່ນການໂມ່ງບາດຄ້ອນອັນໜັກໜ່ວງໃສ່ສັດຕູພາຍໃນ–ໃສ່ພັກໂບນເຊວິກບໍ່ໜ້ອຍກວ່າສັດຕູພາຍນອກ".

ພາຍຫລັງທີ່ທາກໍໄດ້ຮູ້ຂ່າວກ່ຽວກັບການປະລາໄຊຂອງການບຸກໂຈມ ຕີໃນແນວໜ້າ, ນາຍທຶນໄດ້ກ້າວເຂົ້າປະຕິບັດແຜນການອັນທີ່ສອງຂອງຕົນໃນ ກໍລະນີທີ່ບໍ່ໄດ້ຮັບຜົນທາງດ້ານການທະຫານ. ເໝືອນດັ່ງການຄົບຄິດ ພວກ ກາເດ ໄດ້ຖະແຫລງກ່ຽວກັບການລາອອກຂອງຕົນຈາກຄະນະລັດຖະບານ. ແຜນ

ການມີຢູ່ບ່ອນວ່າ, ຕ້ອງປະໃຫ້ລັດຖະມົນຕີ–ນັກສັງຄົມນິຍົມກຳອຳນາດແຕ່ຜູ້ດຽວ. ເມື່ອຮູ້ວ່າ, ພວກທີ່ເຫັນພ້ອມນຳນາຍຫິນຢ້ານທີ່ຈະໄດ້ຮັບຜິດຊອບການຄຸ້ມ ຄອງລັດແຮງກວ່າຢ້ານແປວໄຟ ແລະບໍ່ຕ້ອງການຈະຢູ່ກຳອຳນາດແຕ່ຜູ້ດຽວ, ນາຍຫິນໄດ້ຄາດກະຈະໃຫ້ຕົວແທນຂອງຕົນກັບຄືນເຂົ້າໃນຄະນະລັດຖະບານຂອງຕົນ, ໃນເມື່ອຕໍ່ສູ້ຫາກບັນລຸເຖິງການຮັບເອົາເງື່ອນໄຂຂອງຕົນ ຄື: ການສ້າງ ຕັ້ງອຳນາດຢ່າງສົມບູນ, ປ່ອຍໃຫ້ສະພາໂຊວຽດຄົງຕົວຢູ່ໂດຍບໍ່ມີອິດທິພົນຕໍ່ວຽກງານຂອງລັດ ແລະສຳຄັນກວ່າໝູ່ແມ່ນການປາບປາມລັດທິໂປນເຊວິກ.

ເມື່ອເຖິງເດືອນກໍລະກົດ ສະພາບການໃນປະເທດໄດ້ປ່ຽນແປງ ຢ່າງເລິກເຊິ່ງ. ໃນໄລຍະແຫ່ງການເຄື່ອນໄຫວຂອງລັດຖະບານປະສົມນັ້ນເສດຖະກິດແຮ່ງໄດ້ຖືກທຳລາຍເພີ່ມຂຶ້ນຫລາຍກວ່າເກົ່າ. ເຄື່ອງບໍລິໂພກບໍ່ພຽງພໍ.ລາຄາສິນຄ້າສະບຽງອາຫານ ແລະສິນຄ້າໃຊ້ສອຍກໍ່ເພີ່ມຂຶ້ນ. ເງິນເດືອນກໍ່ບໍ່ສາມາດແລ່ນນຳການເພີ່ມຂຶ້ນຂອງລາຄາໄດ້. ຄວາມອຶດຫິວໄດ້ແຜ່ລາມໄປ ຢ່າງກວ້າງຂວາງ. ລາຄາເງິນຕົກຕ່ຳລົງຢ່າງລຽນຕິດ. ໂຮງພິມບໍ່ສາມາດຈະພິມເງິນເຈ້ຍໄດ້ຕາມຄວາມຕ້ອງການ: ໄດ້ເລີ່ມຕົ້ນພິມເງິນເປັນແຜ່ນໃຫຍ່ໆ ຊຶ່ງຈຳເປັນຕ້ອງໄດ້ຕັດເປັນຕ່ອນ – ໒໐ ແລະ ໔໐ ຣູບ. ປະຊາຊົນເອີ້ນເງິນໃໝ່ນີ້ດ້ວຍຄວາມປະໝາດວ່າເງິນ "ກີແຣນ" ຕາມຊື່ຂອງ ກີແຣນສະກີທີ່ໄດ້ກາຍເປັນນາຍົກລັດຖະມົນຕີ. ແຕ່ອັນສຳຄັນແມ່ນຢູ່ບ່ອນວ່າ, ພວກເຂົາຈະເລີ່ມຕົ້ນສົງຄາມທີ່ພວກເຂົາໄດ້ໃຫ້ຄຳໝັ້ນສັນຍາວ່າ ຈະຢຸດຕິມັນຄືນອີກຊຶ່ງຈະເຮັດໃຫ້ມີການສູນເສຍຄັ້ງໃໝ່ ແລະຈະເຮັດໃຫ້ປະຊາຊົນທຸກຍາກລຳບາກ ຂຶ້ນຕື່ມຢ່າງຄາດບໍ່ເຖິງ.

ໄພພິບັດແຫ່ງຄວາມຫຍຸ້ງຍາກໄດ້ເພີ່ມຂຶ້ນ,ລະດັບຊີວິດການເປັນຢູ່ໄດ້ຊຸດໂຊມລົງ–ທັງໝົດນີ້ຊ່ວຍເຮັດໃຫ້ປະຊາຊົນມີຄວາມຕື່ນຕົວທາງດ້ານ ການເມືອງ,ຄວາມຕື່ນຕົວນີ້ໄດ້ສູກງອມຂຶ້ນຢູ່ໃນການປະຕິວັດບໍ່ແມ່ນໃນແຕ່ລະມື້ ແຕ່ຫາກໃນແຕ່ລະຊົ່ວໂມງ. ຂ່າວກ່ຽວກັບການລາອອກຂອງພວກກາເດຈາກ ຄະນະລັດຖະບານໄດ້ແຜ່ລາມໄປໃນນະຄອນຫລວງຢ່າງວ່ອງໄວ. ຜູ້ທີ່ເຂົ້າຮ່ວມໃນມິດຕິງທີ່ເກີດຂຶ້ນແບບຕາມມີຕາມເກີດຢູ່ໃນໂຮງຈັກ ແລະກອງພັນທະ ຫານໄດ້ເວົ້າວ່າ "ພວກກາເດເຮັດໃຫ້ນ້ຳຂຸ່ນອີກແລ້ວ".

ໃນກາງຄືນວັນທີ ໘ ກໍລະກົດ ໃນກອງພັນປືນກົນເບົາທີໜຶ່ງໄດ້ ຮວມປະຊຸມມິດຕິງໂດຍມີການປະກອບສ່ວນຂອງທະຫານ ແລະກຳມະກອນທີ່ກັບຈາກແນວໜ້າ. ການປະຊຸມໄດ້ມີລັກສະນະຟົດເດືອດ. ທະຫານໄດ້ຮຽກຮ້ອງ ໃຫ້ໂຄ່ນລົ້ມລັດຖະບານ ແລະມອບອຳນາດທັງໝົດຢ່າງສົມບູນໃຫ້ແກ່ສະພາໂຊ–ວຽດ. ໝົດທຸກຄົນທີ່ມາລວມໄດ້ສະໜັບສະໜູນຜູ້ປະກອບຄຳເຫັນດ້ວຍສຽງຕົບມືຢ່າງດົນນານ ແລະດ້ວຍສຽງຮ້ອງ "ຄັດຄ້ານພວກລັດຖະມົນຕີ–ນາຍທຶນ!". ນັກໂບນເຊວິກໄດ້ຊຸ່ມອຽນທະຫານດ້ວຍຄວາມຫຍຸ້ງຍາກ. ໄດ້ຮັບຮອງເອົາມະຕິຂອງນັກໂບນເຊວິກຊຶ່ງປະກອບດ້ວຍຄຳປະທ້ວງຕໍ່ແນວທາງນະໂຍບາຍຂອງລັດຖະບານຊົ່ວຄາວ. ແຕ່ວ່າ,ມະຕິນັ້ນກໍບໍ່ສາມາດຈະຕອບສະໜອງຕໍ່ຈິດໃຈຂອງທະຫານທີ່ມີຄວາມກະວົນກະວາຍຢູ່ນັ້ນໄດ້. ໝົດທັງຄືນຢູ່ໃນຄ້າຍທະຫານໄດ້ມີການປະຊຸມ,ໄດ້ມີການສືບຕໍ່ຖົກຖຽງຢ່າງເຄັ່ງຮ້ອນ. ພວກທີ່ປະກອບຄຳເຫັນໄດ້ຮຽກຮ້ອງໃຫ້ໂຄ່ນລົ້ມລັດຖະບານ.

ວັນທີ ໙ ກໍລະກົດ–ທັງໝົດກອງພັນໄດ້ເຕົ້າໂຮມກັນອີກຢູ່ໃນການຮວມ

ຊຸມນຸມນິດຕິງ. ໄດ້ຕົກລົງໃຫ້ຮຽກຮ້ອງໝົດທັງກອງພົນ ແລະກຳມະກອນຂອງນະຄອນຫລວງຕໍ່ສູ້ຕ້ານກັບລດຖະບານ. ໄດ້ຈັດຕັ້ງຢ່າງວ່ອງໄວຄະນະຜູ້ ແທນຫລາຍຄະນະ ແລະໄດ້ສົ່ງພວກເຂົາໄປກອງພົນ ແລະໂຮງງານຕ່າງໆ. ໄດ້ສົ່ງຄະນະຜູ້ແທນຄະນະໜຶ່ງໄປ ກຣົນສະຕາດ.

ນັກໂບນເຊວິກໄດ້ຄັດຄ້ານການຕໍ່ສູ້ນີ້. ຫາກປາສະຈາກການສະໜັບສະໜູນຂອງທົ່ວປະເທດ ແລະກອງທັບ ຈະລຸກຮືອັນນັ້ນອາດຈະແມ່ນການສ່ຽງໄພ. ກອງປະຊຸມໃຫຍ່ຂອງສະພາໂຊວຽດທົ່ວລັດເຊຍທີ່ຫາກໍ່ຊຸມສຸດລົງຫວ່າງບໍ່ດົນນີ້ໄດ້ສະແດງໃຫ້ເຫັນແລ້ວວ່າ, ສ່ວນໃຫຍ່ຂອງຊາວຜູ້ອອກແຮງງານ ແລະກອງທັບບໍ່ເຊື່ອໝັ້ນຕໍ່ພວກເຫັນດີນຳນາຍທຶນ. ຄະນະບໍລິຫານງານສູນກາງພັກໂບນເຊວິກໄດ້ລົງມະຕິໃຫ້ຢັບຢັ້ງມະຫາຊົນບໍ່ໃຫ້ລຸກຮືອັນ. ຕົວແທນຂອງ ໂບນເຊວິກໄດ້ທ່ຽວເລາະໄປຕາມກອງພົນ ແລະໂຮງງານຕ່າງໆ. ພວກເຂົາ ຟັງນັກໂບນເຊວິກ ແຕ່ຫາກບໍ່ເຫັນດີນຳ. ກຳມະກອນພາກັນເວົ້າວ່າ: " ພວກເຮົາເຊື່ອໝັ້ນພວກສະຫາຍ, ແຕ່ວ່າບໍ່ສາມາດຈະອົດກັ້ນການລໍຖ້າໄດ້: ຊີວິດທຸກຍາກທີ່ສຸດຈົນເຖິງອົດບໍ່ໄດ້...".

ນັກໂບນເຊວິກໄດ້ເຫັນແຈ້ງແລ້ວວ່າ, ຈະບໍ່ມີຄວາມສາມາດຢັບຢັ້ງການລຸກຮືອັນຂອງມະຫາຊົນໄດ້ ແລະໄດ້ຕົກລົງນຳພາການລຸກຮືອັນນັ້ນ, ໂດຍໄດ້ຫັນປ່ຽນມັນມາເປັນການເດີນຂະບວນຢ່າງມີການຈັດຕັ້ງແບບສັນຕິພາຍໃຕ້ຄຳຂວັນ "ອຳນາດທັງໝົດຕ້ອງເປັນຂອງສະພາໂຊວຽດ!".

ວ.ອ. ເລນິນບໍ່ໄດ້ຢູ່ໃນນະຄອນຫລວງ–ເພິ່ນບໍ່ສະບາຍ, ແຕ່ເມື່ອຮູ້ ກ່ຽວກັບເຫດການ, ເພິ່ນໄດ້ເດີນທາງມາ ເປໂຕຣກຣາດ. ເພິ່ນເຫັນດີນຳມະຕິຂອງ

ຄະນະບໍລິຫານງານສູນກາງຂອງພັກໂບນເຊວິກ.

ໃນຕອນເຊົ້າວັນທີ ៤ ກໍລະກົດ ໄດ້ເລີ່ມຕົ້ນການແຫ່ຂະບວນ,ຊຶ່ງ ໃນນັ້ນມີຜູ້ເຂົ້າຮ່ວມຫລາຍກ່ວາ ៥໐໐ ພັນຄົນ. ຜູ້ທີ່ເຂົ້າຮ່ວມການແຫ່ຂະບວນໄດ້ແຕ່ງຕັ້ງຜູ້ແທນ ໖໐ ຄົນເຂົ້າໄປຫາຄະນະກຳມະການບໍລິຫານງານສູນກາງຂອງສະພາໂຊວຽດເພື່ອຮຽກຮ້ອງໃຫ້ມອບອຳນາດທັງຫມົດແກ່ສະພາໂຊວຽດ. ແຕ່ວ່າພວກແອແຊຣ ແລະແມນເຊວິກໄດ້ຕົກລົງກັບລັດຖະບານກ່ຽວກັບການທັບມ້າງການເດີນຂະບວນ. ໄດ້ອອກຄຳສັ່ງໃຫ້ຮຽກກອງທະຫານທີ່ຈົງຮັກພັກດີ ຕໍ່ລັດຖະບານຊົ່ວຄາວກັບຈາກແນວຫນ້າ. ຢູ່ໃນບາງເຂດຂອງຕົວເມືອງນັກຮຽນນາຍທະຫານ ແລະພວກທະຫານມ້າໄດ້ຍິງພວກເດີນຂະບວນ.

ກອງທະຫານທີ່ມາຮອດພ້ອມກັບທະຫານມ້າ ແລະນັກຮຽນນາຍທະຫານໄດ້ເລີ່ມຕົ້ນດຳເນີນການຫມິບຣັດ. ນະຄອນຫລວງໄດ້ປະກາດໃຫ້ຢູ່ໃນພາວະສຸກເສີນ. ໄດ້ເລີ່ມຕົ້ນການຈັບກຸມຜູ້ນຳໂບນເຊວິກ. ພວກນັກກວາດລ້າງ ໄດ້ທັບມ້າງອາຄານຂອງໂຮງພິມ,ຊຶ່ງຢູ່ທີ່ນັ້ນໄດ້ພິມເຜີຍແຜ່ຫນັງສືພິມ "ປຣາວະ-ດາ" ຂອງໂບນເຊວິກ. ໄດ້ທັບມ້າງເຮືອນຊຶ່ງແມ່ນບ່ອນເຮັດວຽກຂອງຄະນະບໍລິຫານງານສູນກາງພັກໂບນເຊວິກ. ລັດຖະບານໄດ້ອອກຄຳສັ່ງໃຫ້ຍຸບ ກອງພັນທີ່ໄດ້ປະກອບສ່ວນໃນການເດີນຂະບວນໃນວັນທີ ៣-៤ ກໍລະກົດ.

ການຫມິບຣັດນັ້ນລຸ້ມໄປທັງໃນກອງທັບ. ຢູ່ແນວຫນ້າໄດ້ປະຕິບັດການຕັດສິນປະຫານຊີວິດ. ໄດ້ຍຸບເລີກກອງພັນ ແລະກອງພົນທີ່ກອງບັນຊາການ ເຫັນວ່າໃນນັ້ນມີອິດທິພົນຂອງໂບນເຊວິກ. ຢູ່ເມືອງ ເປໂຕຣກຣາດ ພວກກຳ ອຳນາດໄດ້ອອກຄຳສັ່ງໃຫ້ຈັບ ວ.ອ.ເລນິນ. ເພື່ອເປັນການແກ້ຕໍ່ຄຳຕົກລົງຂອງ

ຕິນ ພວກເຂົາໄດ້ພິມເຜີຍແຜ່ເລື່ອງທີ່ເສກສັນປັ້ນແຕ່ງວ່າ ຜູ້ນຳພາທີ່ຍິ່ງໃຫຍ່ຂອງນັກໂບນເຊວິກນີ້ພົວພັນກັບກອງບັນຊາການສູງສຸດຂອງເຢຍລະມັນ ແລະເຄື່ອນໄຫວຕາມການຊີ້ນຳຂອງເຂົາ. ເລນິນຈຳເປັນຕ້ອງເຄື່ອນໄຫວປິດລັບອີກ.

ພວກນາຍທຶນຕີລາຄາຖືກແລ້ວຕໍ່ແນວທາງນະໂຍບາຍຂອງພວກທີ່ ເຫັນພ້ອມນຳນາຍທຶນ ວ່າ: ຜູ້ນຳຂອງພວກ ແອແຊຣ ແລະແມນເຊວິກຕ້ອງຮັບຮອງເອົາເງື່ອນໄຂຂອງເຂົາ,ສະໜັບສະໜູນລັດຖະບານ ແລະຕ້ອງເຂົ້າຫາຝ່າຍຕ້ານປະຕິວັດ. ພວກແອແຊຣ ແລະແມນເຊວິກໄດ້ປະຕິບັດທັງຄຳຮຽກຮ້ອງຂອງນາຍທຶນກ່ຽວກັບການກຳຈັດສະພາໂຊວຽດຈາກອຳນາດ–ພວກເຂົາຍັງບໍ່ທັນໄດ້ຂັບໄລ່ສະພາໂຊວຽດດັ່ງທີ່ພວກກາເດສະເໜີ,ແຕ່ກໍໄດ້ຫັນປ່ຽນສະພາໂຊວຽດນັ້ນເປັນສິ່ງເພີ່ມເຕີມໃຫ້ລັດຖະບານຕ້ານປະຕິວັດ. ລັດຖະ ບານໃໝ່ກໍຍັງເອີ້ນເປັນລັດຖະບານປະສົມຢູ່ຄືເກົ່າ–ໃນຈຳນວນຄະນະ ໑໕ ຄົນນັ້ນ ໗ ຄົນແມ່ນພວກ ແອແຊຣ ແລະແມນເຊວິກ,ແຕ່ວ່າອັນນີ້ມັນແມ່ນລັດຖະ ບານອັນໜຶ່ງອັນດຽວທີ່ຕ້ານປະຕິວັດ ເພາະວ່າ: ໃນການຮ່ວມປະສົມເທື່ອແລ້ວນາຍທຶນໄດ້ຄຸ້ມຄອງດ້ວຍການຊ່ວຍເຫຼືອຂອງພັກນາຍທຶນນ້ອຍ,ປະຈຸບັນນີ້ ມັນຄຸ້ມຄອງນຳກັນກັບບັນດາຫົວໜ້າຂອງພວກແອແຊຣ ແລະແມນເຊວິກ.ອຳນາດທັງໝົດໄດ້ຕົກຢູ່ໃນກຳມືຂອງນາຍທຶນ. ລະບົບສອງອຳນາດໄດ້ສິ້ນສຸດໄປແລ້ວ.

24/VII
ຫ້າມຈຳໜ່າຍ

# 3. ການບຸກຖະຫລົ່ມລັດຖະບານທີ່ຕ້ານການປະຕິວັດ

# ນາຍທຶນກໍ່ສົງຄາມກາງເມືອງ

ເມື່ອຍຶດໄດ້ອຳນາດ, ນາຍທຶນໄດ້ວາງຫນ້າທີ່ລົບລ້າງຫມາກຜົນຂອງ ການປະຕິວັດ. ພວກນາຍທຶນບໍ່ພຽງແຕ່ໄດ້ປະຕິເສດຕໍ່ການວາງວັນງານ ໘ ຊົ່ວໂມງເທົ່ານັ້ນ, ແຕ່ຍັງໄດ້ເລີ່ມຕົ້ນຫລຸດເງິນເດືອນຊຶ່ງວ່າເຖິງຖ້າບໍ່ຫລຸດກໍ່ຍັງ ບໍ່ພຽງພໍສຳລັບການດຳລົງຊີວິດຢູ່ແລ້ວນັ້ນລົງອີກ. ພວກເຂົາໄດ້ປິດໂຮງ ຈັກ ໂຮງງານຕ່າງໆແລ້ວໄລ່ກຳມະກອນອອກຈາກວຽກທັງຫມົດ. ຈຳນວນຂອງຜູ້ທີ ວ່າງງານໄດ້ເພີ່ມຂຶ້ນຢ່າງວ່ອງໄວ. ສະພາບຂອງຊາວກຳມາຊີບໄດ້ຊຸດໂຊມ ລົງຢ່າງຮ້າຍແຮງ.

ຢູ່ໃນຊົນນະບົດພວກເຈົ້າທີ່ດິນກໍໄດ້ເພີ່ມຄວາມກ້າຫານຂຶ້ນ: ດ້ວຍການ ຊ່ວຍເຫລືອຂອງກອງທະຫານ ພວກເຂົາໄດ້ຍຶດເອົາທີ່ດິນຈາກຊາວນາ, ດິນ ນີ້ ແຕ່ກ່ອນແມ່ນດິນວ່າງເປົ່າຊຶ່ງໄດ້ຖືກຊາວນາປັກດຳແລ້ວໃນປະຈຸບັນ; ພວກເຂົາ ໄດ້ຂຶ້ນຄ່າເຊົ່າດິນ. ໄດ້ຈັບກຸມສະມາຊິກຫລາຍໆຄົນທີ່ຢູ່ໃນຄະນະກຳມະການທີ່ ດິນ.

ກໍລະນີຜິດພາດທາງຊົນຊາດກໍ່ເກີດຂຶ້ນຢ່າງຕໍ່ເນື່ອງລຽນກັນ: ບົດຫນຶ່ງ ການຜິດຖຽງກັບຊາວອູກຣາອີນໄດ້ລະເບີດຂຶ້ນ, ຍ້ອນວ່າຊາວອູກຣາອີນໄດ້ ຖືກ ເກືອດຫ້າມບໍ່ໃຫ້ສ້າງອົງການຄຸ້ມຄອງແຫ່ງຊາດ, ບົດຫນຶ່ງຊ້ຳພັດປິດລັດຖະ ສະ ພາແຟັງລັງ...

ດັ່ງທີ່ບົດຮຽນທາງປະຫວັດສາດໄດ້ສອນໃຫ້ຮູ້ວ່າ ນາຍທຶນຍາມໃດກໍ່ຄຸ້ມຄອງດ້ວຍ "ງ້ອນ ແລະນ້ຳຕານ": ເມື່ອໄດ້ລະເມີດຕໍ່ສິດທິຂອງປະຊາຊົນຢ່າງຮ້າຍແຮງແລ້ວມັນຈະປິດບັງເປົ້າຫມາຍທີ່ແທ້ຈິງຂອງມັນດ້ວຍການໂຍະຍານສ່ວນໃດສ່ວນຫນຶ່ງ. ລັດຖະບານໄດ້ໃຫ້ຄຳຫມັ້ນສັນຍາຈະຮຽກກອງປະຊຸມສ້າງຕັ້ງ ແລະຍິ່ງໄປກ່ວານັ້ນຍັງໄດ້ກຳນົດວັນເວລາອີກ ຄືວັນທີ ໑໗ ກັນຍາ; ລັດຖະບານໄດ້ຮັບຮອງເອົາກົດຫມາຍວ່າດ້ວຍການຫ້າມຊື້-ຂາຍດິນ; ໂດຍ ໄດ້ຄຳນຶງເຖິງຄວາມຮຽກຮ້ອງໃຫ້ມີການກວດກາຂອງກຳມະກອນຕໍ່ອຸດສາຫະກຳ; ລັດຖະບານຈຶ່ງໄດ້ຈັດຕັ້ງສະພາພິເສດທາງດ້ານເສດຖະກິດ ແລະຄະນະກຳມະການຫລວງທາງດ້ານເສດຖະກິດສຳລັບດັດສົມການຜະລິດ. ແຕ່ວ່າທັງ ຫມົດການໂຍະຍານເຫລົ່ານັ້ນມັນແມ່ນພຽງແຕ່ຮ່າງຢູ່ໃນເຈ້ຍຊື່ໆ,ສະພາບທີ່ ຫນັກຫນ່ວງຂອງມະຫາຊົນແມ່ນບໍ່ໄດ້ຖືກປັບປຸງໃຫ້ດີຂຶ້ນແມ່ນແຕ່ຫນ້ອຍດຽວ.

ເພື່ອບຸກຕ້ານຊາວຜູ້ອອກແຮງງານ,ນາຍທຶນຊ້ຳພັດບໍ່ຄຳນຶງເຖິງກຳລັງແຮງແຫ່ງການຕ້ານຄືນຂອງມະຫາຊົນ,ບໍ່ຄຳນຶງເຖິງຄວາມຕື່ນຕົວທາງດ້ານການເມືອງ ແລະສະຕິການຈັດຕັ້ງທີ່ເພີ່ມຂຶ້ນເລື້ອຍໆ. ນາຍທຶນຍັງຜິດພາດໃນການຕີລາຄານັກໂບນເຊວິກ – ພວກເຂົາຄິດວ່າພັກໄດ້ຖືກແຕກທະລາຍ, ໄດ້ປະກາດໃຫ້ຢູ່ນອກກົດຫມາຍ, ໄດ້ເສຍອິດທິພົນ, ໄດ້ຖືກຕັດແຍກອອກຈາກມະຫາຊົນແລ້ວ.

ນັກໂບນເຊວິກບໍ່ເຄີຍຮູ້ການຫລຸດຈຳນວນສະມາຊິກໃນຖັນແຖວພັກຂອງຕົນຊຶ່ງວ່າການຫລຸດລົງນັ້ນມັກສັງເກດເຫັນເລື້ອຍໆຢູ່ໃນພັກຂອງພວກແອແຊຣ ແລະແມນເຊວິກ ຫລືວ່າໃນພັກການເມືອງອື່ນໆໃນເວລາປະລາໄຊ ແລະບໍ່ປະ

ສືບພົນສຳເລັດ. ກົງກັນຂ້າມແມ່ນແຕ່ໃນໄລຍະແຫ່ງການຕິດຕາມກວາດລ້າງກໍຍັງ ມີຜູ້ທີ່ຫ້າວຫັນໃນທ່າມກາງກຳມະກອນໃຫມ່ຫລາຍໆຄົນທີ່ເຊື່ອຫມັ້ນຕໍ່ຄວາມຖືກຕ້ອງຂອງນະໂຍບາຍ ແລະຄວາມສຸດຈະລິດຕໍ່ຊາວກຳມາຊີບຂອງພັກນັ້ນໄດ້ສະຫມັກເຂົ້າພັກຢ່າງຫລວງຫລາຍ. ໃນນີ້ມັນສະແດງໃຫ້ເຫັນລັກສະນະຂອງພັກແບບໃຫມ່, ທີ່ມີການເລືອກເຟັ້ນທາງຊົນຊັ້ນຢ່າງລະອຽດໃນເວລາຮັບເອົາເຂົ້າພັກ, ສ່ອງແສງໃຫ້ເຫັນລັກສະນະມີການຈັດຕັ້ງ ແລະລະບຽບວິໄນຢ່າງສູງສົ່ງ. ໃນເມື່ອເວລາຢູ່ຄຸກ, ນັກໂບນເຊວິກບໍ່ພຽງແຕ່ໄດ້ຮັກສາຄວາມເຊື່ອຫມັ້ນຕໍ່ໄຊຊະນະແຫ່ງພາລະກິດຂອງຊາວກຳມາຊີບເທົ່ານັ້ນ ແຕ່ຍັງໄດ້ຮັກສາລັກສະນະມີການຈັດຕັ້ງສູງຂອງຕົນອີກ. ຕົວຢ່າງວ່າ, ຢູ່ໃນຄຸກຂອງເມືອງມິນສະເກີ ໄດ້ກັກຂັງນັກໂບນເຊວິກປະມານສອງພັນຄົນ. ເມື່ອເວລາໄດ້ເລີ່ມມີການລຸກຮື້ຂຶ້ນໃນເດືອນຕຸລາ, ນັກໂບນເຊວິກໄດ້ອອກຈາກຄຸກຢ່າງມີການ ຈັດຕັ້ງ ແລະໄດ້ປະກອບສ່ວນເຂົ້າໃນການສູ້ຮົບເພື່ອການປະຕິວັດ. ໃນຄຸກ ຂອງເມືອງ ດະວິນສະເກີ ໄດ້ກັກຂັງສະມາຊິກຂອງຄະນະກຳມະການທະຫານເປັນຮ້ອຍໆຄົນຊຶ່ງໄດ້ຖືກຈັບພາຍຫລັງເຫດການຂອງເດືອນກໍລະກົດ. ຕໍ່ມາໄດ້ ຖືກຍ້າຍມາກັກຂັງໄວ້ທີ່ຄຸກ ບູຕີຣສະກາຢາ ຢູ່ເມືອງ ມົດສະກູ, ພວກເຂົາໄດ້ ປະກອບເປັນພາກສ່ວນສູ້ຮົບທີ່ຫ້າວຫັນກ່ວາຫມູ່ໃນເວລາແຫ່ງການລຸກຮື້ຂຶ້ນໃນເດືອນຕຸລາພາຍໃຕ້ຊື່ "ຊາວດະວິນສະເກີ". ນັກໂບນເຊວິກທີ່ໄດ້ຖືກຊຸບ ຫລໍ່ດ້ວຍການທົດສອບທີ່ເຂົາເຈົ້າໄດ້ຮັບພາຍຫລັງເຫດການເດືອນກໍລະກົດນັ້ນຮູ້ນຳກຳລັງຂອງຕົນອອກຈາກການບຸກໂຈມຕີ, ຮັກສາສາຍພົວພັນກັບມະຫາຊົນໄວ້ໄດ້ ແລະໄດ້ຊ່ວຍເຂົາເຈົ້າໃນການຕ້ານທານກັບການບຸກຫນ້າຂອງນາຍທຶນ.

ສະພາບການໃຫມ່ທີ່ເກີດຂຶ້ນພາຍໃນປະເທດຣັດເຊຍຮຽກຮ້ອງໃຫ້ວາງຍຸດ ໂທ ບາຍໃຫມ່. ກອງປະຊຸມໃຫຍ່ຄັ້ງທີ ໖ ຂອງພັກໂບນເຊວິກທີ່ໄດ້ໄຂຂຶ້ນທີ່ເມືອງ ເປໂຕຣກຣາດ ຈາກວັນທີ ໒໖ ກໍລະກົດ ຮອດວັນທີ ໓ ສິງຫາ ໑໙໑໗ ໄດ້ ວາງຍຸດໂທບາຍດັ່ງກ່າວ. ກອງປະຊຸມໃຫຍ່ໄດ້ດຳເນີນວຽກງານແບບເຄິ່ງຖືກ ກົດຫມາຍ ວ.ອ.ເລນິນບໍ່ໄດ້ຮ່ວມໃນກອງປະຊຸມໃຫຍ່ ແຕ່ວ່າໃນຕົວຈິງກໍ່ແມ່ນ ເພີ່ນເປັນຜູ້ນຳພາ, ເປັນຜູ້ຮຽບຮຽງມະຕິ ແລະໄດ້ຂຽນຮ່າງຂອງປະຊາມະຕິ. ໃນກອງປະຊຸມໃຫຍ່ມີຕົວແທນຈາກຫລາຍກ່ວາ ໑໖໐ ອົງການຈັດຕັ້ງຊຶ່ງມີ ສະ ມາຊິກຂອງພັກທັງຫມົດປະມານ ໒໔໐ ພັນຄົນເຂົ້າຮ່ວມ. ໃນໄລຍະ ໓ ເດືອນ ຜ່ານໄປພາຍຫລັງກອງປະຊຸມເດືອນເມສາຈຳນວນສະມາຊິກຂອງພັກໄດ້ເພີ່ມ ຂຶ້ນເຖິງສອງເທົ່າ. ຫລາຍກ່ວາ ໖໐% ແມ່ນກຳມະກອນ. ຢູ່ເມືອງ ເປໂຕຣ ກຣາດ ມີນັກກອມມູນິດ ໔໑ ພັນຄົນ, ຢູ່ ມົດສະກູ ແລະແຂວງມົດສະກູ ມີ ໔໐ ພັນຄົນ, ເຂດພູອູຣານ ມີ ໒໕ ພັນຄົນ, ຢູ່ ໂດນບາສ ມີ ໑໖ ພັນຄົນ, ຢູ່ເຂດ ທະເລບານຕິກ ມີ ໑໔ ພັນຄົນ; ເຂດແມ່ນ້ຳ ໂວນກາ ມີ ໑໓ ພັນຄົນ, ໃນ ເຂດເມືອງ ກີແອຟ ມີ ໑໐ ພັນຄົນ.

-ບັນຫາພື້ນຖານທີ່ໄດ້ຖືກແກ້ໄຂໃນກອງປະຊຸມໃຫຍ່ແມ່ນບັນຫາກ່ຽວກັບ ຍຸດໂທບາຍ. ຢູ່ໃນປະຊາມະຕິຂອງກອງປະຊຸມໃຫຍ່ໄດ້ຢ້ຳວ່າ, ລະບົບສອງອຳ ນາດໃນປະເທດໄດ້ຫມົດໄປແລ້ວ, ອຳນາດທັງຫມົດໄດ້ຕົກຢູ່ໃນກຳມືຂອງ ນາຍ ທຶນ. ພວກແອແຊຣ ແລະແມນເຊວິກ ໄດ້ອ່ຽງໄປເຂົ້າຄ້າຍຂອງນາຍທຶນແລະ ພ້ອມກັບນາຍທຶນຕໍ່ສູ້ຕ້ານການປະຕິວັດ. ໃນເງື່ອນໄຂຄືແນວນີ້ຄຳຂວັນຂອງພັກ ໂບນເຊວິກຕ້ອງແມ່ນ "ອຳນາດທັງຫມົດຕ້ອງເປັນຂອງສະພາໂຊວຽດ!", ຄຳ

ຍ້ອນເກົ່າແຫ່ງການຂະຫຍາຍການປະຕິວັດແບບສັນຕິນັ້ນບໍ່ຕອບສະໜອງໄດ້ແລ້ວຕໍ່ສິດຜົນປະໂຫຍດຂອງປະຊາຊົນ, ຕໍ່ໜ້າແຫ່ງການຂະຫຍາຍຕົວຂອງການປະຕິວັດ. ແຕ່ວ່າການເອົາຄຳຍ້ອນອອກນັ້ນບໍ່ໄດ້ໝາຍເຖິງການປະຕິເສດຈາກສະພາໂຊວຽດຊຶ່ງແມ່ນຮູບການອຳນາດແຫ່ງລັດແບບໃໝ່. ອັນນີ້ແມ່ນໝາຍເຖິງວ່າ, ສະພາໂຊວຽດໃນສ່ວນປະກອບແບບນີ້ ແລະໄດ້ຖືກນຳພາໂດຍພວກແມນເຊວິກ ແລະແອແຊຣທີ່ໄດ້ເອົາມືຂອງຕົນຍູດເນື້ອເຖືອໜັງຂອງປະຊາຊົນນັ້ນບໍ່ສາມາດຈະເປັນອົງການອຳນາດຂອງປະຊາຊົນໄດ້ອີກແລ້ວ.

ພັກໂບນເຊວິກໄດ້ວາງແນວທາງແຫ່ງການລຸກຮື້ອນປະກອບອາວຸດເພື່ອກ້າວສູ່ການກຳອຳນາດໂດຍຊາວຜູ້ອອກແຮງງານ. ໃນເວລານັ້ນ ວ.ອ. ເລນິນໄດ້ຂຽນວ່າ "ຄວາມມຸ່ງຫວັງທຸກສິ່ງຢ່າງແຫ່ງການຂະຫຍາຍການປະຕິວັດລັດເຊຍຢ່າງສັນຕິນັ້ນໄດ້ໝົດໄປແລ້ວຢ່າງຈົບເຊີງ. ຫລັກມູນອັນພາວະວິໄສແມ່ນ: ຫລືວ່າໄຊຊະນະຂອງຜະເດັດການການທະຫານຕະຫລອດໄປ, ຫລື ວ່າໄຊຊະນະແຫ່ງການລຸກຮື້ອນປະກອບອາວຸດຂອງກຳມະກອນຊຶ່ງຈະສາມາດເປັນໄປໄດ້ພຽງແຕ່ເມື່ອວ່າການລຸກຮື້ອນນີ້ຫາກກົງກັນກັບການຕໍ່ສູ້ຢ່າງກ້ວາງຂວາງເລິກເຊິ່ງຕ້ານກັບລັດຖະບານ ແລະນາຍທຶນບົນພື້ນຖານແຫ່ງການຖືກທຳລາຍເພົາຜານທາງດ້ານເສດຖະກິດ ແລະການແກ່ຍາວສົງຄາມ.໑)

ໄຊຊະນະຂອງນາຍທຶນກ່ຽວກັບການຍຶດອຳນາດ ແລະການທີ່ພັກຂອງນາຍທຶນນ້ອຍໄດ້ເຂົ້າຮ່ວມຝ່າຍນາຍທຶນນັ້ນສືບຕໍ່ໄປບໍ່ໄດ້ດົນ. ໃນແຕ່ລະ ບາດກ້າວລັດຖະບານໄດ້ເຫັນແຈ້ງວ່າ, ການປະຕິວັດບໍ່ໄດ້ຖືກປາບປາມ. ສົງຄາມທີ່

---

໑) ວ.ອ.ເລນິນ ນິພົນຄົບຊຸດ ເຫລັ້ມ ໓໔ ໜ້າ ໒.

ແກ່ຍາວໄດ້ເຮັດໃຫ້ແຫລ່ງວັດຖຸເງິນຄຳກູດທັຽນເຂົ້າ. ປະຊາຊົນໄດ້ອຶດຫິວ. ໃນກຸ່ມລັດຖະບານໄດ້ເກີດມີແນວຄິດກ່ຽວກັບການດຳເນີນຜະເດັດການທາງທະຫານ. ນາຍພົນ ດີນີກິນ, ໜຶ່ງໃນຈຳນວນພວກຕ້ານປະຕິວັດທີ່ຫ້າວຫັນກ່ວາໝູ່ໄດ້ໃຫ້ລັກສະນະກ່ຽວກັບອາລົມຄະຕິຂອງພວກຊົນຊັ້ນປົກຄອງດັ່ງນີ້: " ປະເທດຊາດພວມຊອກວິລະບູລຸດ". ຢູ່ໃນຄຳເວົ້າຂອງນາຍພົນຜູ້ນີ້ມີແຕ່ຊື່ຂອງ ຜູ້ຊອກເທົ່ານັ້ນບໍ່ຖືກຕ້ອງປານໃດ ເພາະວ່າມັນບໍ່ແມ່ນປະເທດຊາດຊອກຫາວິລະບູລຸດ ແຕ່ຫາກແມ່ນການຕ້ານປະຕິວັດຊອກຫາຜູ້ຜະເດັດການ. ທຳອິດແມ່ນ ກີແຣນສະກີ ຢາກເປັນຜູ້ກຳເອົາບົດບາດນີ້.ກີແຣນສະກີ ໄດ້ຮັບໃຊ້ນາຍທຶນຢ່າງເອົາຈິງເອົາຈັງ, ໄດ້ປາບປາມຢ່າງຮ້າຍກາດຜູ້ທີ່ເຂົ້າຮ່ວມໃນເຫດການເດືອນກໍລະກົດ; ຕາມຄຳຮຽກຮ້ອງຢ່າງແຂງແຮງຂອງພວກນາຍພົນໄດ້ປະຕິບັດການປະຫານຊີວິດໃນແນວໜ້າ. ແຕ່ວ່ານາຍທຶນບໍ່ສາມາດຈະໃຫ້ອະໄພແກ່ລາວໄດ້ຍ້ອນວ່າ ກີແຣນສະກີ ມີການພົວພັນກັບພວກແອແຊຣ ຍ້ອນຄວາມຄອນແຄນຂອງລາວ; "ດ້ວຍເຫດນັ້ນນາຍທຶນຈຶ່ງໄດ້ເລີ່ມຕົ້ນກຽມເອົານາຍພົນ ກອກນີນ-ລົບ ຂຶ້ນເປັນຜູ້ຜະເດັດການໂດຍໄດ້ແຕ່ງຕັ້ງເປັນຜູ້ບັນຊາການສູງສຸດສາກ່ອນ. ການສະຖາປະນາຜູ້ຜະເດັດການໄດ້ສະເໜີຂຶ້ນຢູ່ໃນກອງປະຊຸມພິເສດແຫ່ງລັດຂອງຕົວແທນບັນດາຊັ້ນຄົນທີ່ຮັ່ງມີທັງໝົດຂອງປະຊາຊົນທີ່ໄດ້ໄຂຂຶ້ນໃນວັນທີ ໑໘ ສິງຫາ ຢູ່ມົດສະກູ.

ເພື່ອເຮັດໃຫ້ກອງປະຊຸມແຫ່ງລັດມີຄວາມໝາຍອັນໃຫຍ່ຫລວງທາງດ້ານການເມືອງ ລັດຖະບານໂດຍໄດ້ຮັບຄວາມເຫັນພ້ອມຂອງຜູ້ນຳຂອງພວກ ແອແຊຣ ແລະແມນເຊວິກ ໄດ້ອອກມະຕິດຳລັດໃຫ້ໂຈະການເລືອກຕັ້ງເຂົ້າໃນກອງປະຊຸມ

ສ້າງຕັ້ງໄປອີກສອງເດືອນຈາກວັນທີ ໑໗ ກັນຍາ ໄປໃສ່ວັນທີ ໑໔ ພະຈິກ.

-ນັກໂບນເຊວິກບໍ່ໄດ້ເຂົ້າຮ່ວມໃນກອງປະຊຸມນີ້; ຄະນະກຳມະການບໍລິຫານງານສູນກາງຂອງສະພາໂຊວຽດບໍ່ຕ້ອງການໃຫ້ຜູ້ແທນນັກໂບນເຊວິກ ຂຶ້ນປາໄສຕ້ານກອງປະຊຸມແຫ່ງລັດ. ສູນກາງພັກໂບນເຊວິກໄດ້ຮຽກຮ້ອງໃຫ້ ທົ່ວພັກເພີ່ມແບເຈດຈຳນົງຂອງນາຍທຶນ; ສ່ວນວ່າອີງການຈັດຕັ້ງໂບນເຊວິກຂອງເມືອງມົດສະກູໄດ້ຕົກລົງນັດຢຸດງານລັດລ້ານໜຶ່ງວັນໂດຍບໍ່ມີການເດີນຂະບວນ, ເພາະວ່າພວກຕ້ານປະຕິວັດສາມາດຍິງພວກເຂົາໄດ້, ເໝືອນດັ່ງທີ່ໄດ້ເກີດຂຶ້ນແລ້ວໃນເຫດການເດືອນກໍລະກົດ.

ໃນມື້ເປີດກອງປະຊຸມການນັດຢຸດງານໄດ້ລະເບີດຂຶ້ນຢ່າງແຂງແຮງ. ໃນນັ້ນມີຜູ້ເຂົ້າຮ່ວມຫລາຍກວ່າ ໔໐໐ ພັນຄົນ. ຖັນແຖວກຳມະກອນທັງໝົດໄດ້ນັດຢຸດງານທັງກຳມະກອນຫລອມໂລຫະ, ຕ່ຳແຜ່ນ, ເຄມີ, ຊຸດສາຫະກຳເບົາ. ລົດລາງກໍ່ບໍ່ແລ່ນ. ຄົນເສີບອາຫານໃນຮ້ານອາຫານກໍ່ຢຸດງານ. ຜູ້ແທນ ຂອງກອງປະຊຸມແຫ່ງລັດບໍ່ພຽງແຕ່ຈຳເປັນຕ້ອງໄດ້ຍ່າງ, ເຖິງວ່າອຳນາດການ ປົກຄອງຂອງມົດສະກູຈະໃຫ້ບັດການເດີນທາງໂດຍບໍ່ໄດ້ເສຍຄ່າກໍ່ຕາມແຕ່ຍັງຕ້ອງໄດ້ຫິວຍ້ອນບໍ່ໄດ້ກິນເຂົ້າທ່ຽງທັງໆທີ່ວ່າພວກເຂົາໄດ້ຮັບຄຳໝັ້ນສັນຍາວ່າຈະມີການກິນລ້ຽງ.

ການນັດຢຸດງານລວມທົ່ວມົດສະກູໄດ້ທຳລາຍພິທີການສະຖາປະນາຜູ້ຜະເດັດການ. ນາຍພົນ ກອກນີນລົບ ໄດ້ມາເຖິງມົດສະກູ, ຊຶ່ງວ່າຢູ່ໃນນັ້ນໄດ້ໃຫ້ການຕ້ອນຮັບຢ່າງເປັນທາງການ, ແຕ່ວ່າຍ້ອນການຕໍ່ສູ້ຂອງກຳມະກອນ ກອກ-ນີນລົບ ຈຳເປັນຕ້ອງໄດ້ອອກໜີກ່ອນການຊຸມສຸດກອງປະຊຸມ.

ຍ້ອນມີຄວາມເດືອດແຄ້ນຢ່າງໜັກໜ່ວງພວກຕ້ານປະຕິວັດໄດ້ສືບຕໍ່ການກະກຽມເຮັດລັດຖະປະຫານ. ສູນກາງຂອງມັນແມ່ນກອງບັນຊາການສູງສຸດ, ຊຶ່ງວ່າໃນນັ້ນນາຍພົນກອກນິນລົບ ແລະກອງບັນຊາການຂອງຕົນໄດ້ກະກຽມແຜນການການກໍກະບົດຂຶ້ນ. ໄດ້ຄາດກະຈະສົ່ງກອງທະຫານມ້າເຂົ້າໄປເມືອງ ເປໂຕຣກຣາດ, ຊຶ່ງໃນນັ້ນມີກອງພົນທະຫານມ້າອາສາສະໝັກກອງພົນພິເສດທີ່ໄດ້ປະກອບສ້າງຂຶ້ນຈາກຊົນຊາດທີ່ອາໄສຢູ່ເຂດເໜືອຂອງພູ ກາຟກາສທີ່ບໍ່ຮູ້ພາສາລັດເຊຍ ແລະກໍເຊື່ອໝັ້ນຕໍ່ຜູ້ບັນຊາການຂອງຕົນຢ່າງຕາຍໃຈ. ກອງພົນນັ້ນມີໜ້າທີ່ປາບປາມ "ການລຸກຮື້ຂຶ້ນຂອງໂບນເຊວິກ", ຊຶ່ງຈະໄດ້ຖືກຍຸ ແຍ່ໃຫ້ເກີດຂຶ້ນໂດຍພວກນັກສືບຕ້ານການປະຕິວັດ. ນອກຈາກກອງພົນທະຫານມ້ານີ້ແລ້ວຍັງໄດ້ກະກຽມກອງທະຫານໃນແນວຮົບທີ່ຢູ່ມົ້ງ ເຊັ່ນ ແນວຮົບເຂດເໜືອແລະຕາເວັນຕົກ, ທັງຢູ່ ກີເອຟ, ມົດສະກູ, ນ້ຳໂດນ ໃຫ້ຍັບມໍ່ເຂົ້າຫານະຄອນຫລວງ. ຈະເຄື່ອນໜົດກອງທັບເຂົ້າຫາເມືອງ ເປໂຕຣກຣາດ ຊຶ່ງລວມແລ້ວມີຫລາຍກ່ວາ ໑໐ ກອງພົນລວມທັງທະຫານລາບ ແລະທະຫານມ້າ. ພາຍຫລັງທີ່ໄດ້ປາບປາມການລຸກຮື້ຂຶ້ນທີ່ຈະໄດ້ຍຸແຍ່ໃຫ້ເກີດຢູ່ນະຄອນຫລວງແລ້ວໄດ້ຄາດກະຈະສ້າງຕັ້ງລັດຖະບານຜະເດັດການທະຫານໂດຍການເປັນຫົວໜ້າຂອງນາຍພົນກອກນິນລົບ ເພື່ອປາບປາມການປະຕິວັດໃນທົ່ວປະເທດ, ຕິດຕາມກວາດລ້າງສະພາໂຊວຽດ, ທຸກໆອົງການຈັດຕັ້ງປະຊາທິປະໄຕ, ປະກາດໃຫ້ນັກໂບນເຊວິກ ຢູ່ນອກກົດໝາຍ, ຍິງຜູ້ນຳຂອງເຂົາ ແລະຟື້ນຟູລະບອບລາຊາທິປະໄຕຄືນຢູ່ ລັດເຊຍ.

ເມື່ອເຊື່ອໝັ້ນໃນການດຳເນີນການກະກຽມ ແລະການຫຍັບມໍ່ເຂົ້າຫາ

ນະຄອນຫລວງຂອງກອງພັນທະຫານມ້າແລ້ວ, ກອກນິນລົບ ໄດ້ອອກຄຳສັ່ງໃຫ້ກອງທະຫານຕ່າງໆເລີ່ມຕົ້ນກໍ່ການກະບົດຂຶ້ນ. ໃນຄືນວັນທີ ໒໗ ສິງຫາ ກອກນິນລົບ ໄດ້ເຊັນ "ຖະແຫລງການຕໍ່ປະຊາຊົນລັດເຊຍ" ໂດຍໄດ້ປະກາດວ່າ, ຈະກຳເອົາອຳນາດໄວ້ໃນກຳມືຂອງຕົນ.

ກີແຣນສະກີ ຮູ້ເຖິງເຈດຈຳນົງຂອງພວກຕ້ານປະຕິວັດ ແລະໄດ້ຊ່ວຍໃນການປະຕິບັດແຜນການນັ້ນໂດຍມີຄວາມຫວັງວ່າຕົນຍັງຈະໄດ້ເປັນຫົວ ໜ້າລັດຖະບານຄືເກົ່າ. ແຕ່ເມື່ອໄດ້ຮູ້ວ່າ, ຕົນໄດ້ຖືກປະປ່ອຍ ແລະໂດຍຢ້ານວ່າພວກຕ້ານປະຕິວັດຈະປາບປາມບໍ່ພຽງແຕ່ພັກໂບນເຊວິກເທົ່ານັ້ນ, ແຕ່ຍັງຈະປາບປາມທັງພັກ ແລະກະໂຕ ກີແຣນສະກີ ເອງ, ຈຶ່ງໄດ້ຕັດສິນໃຈອອກຈາກເກມຫລິ້ນນັ້ນ ແລະຍັງໄດ້ຮຽກຮ້ອງໃຫ້ຕໍ່ສູ້ກັບພວກ ກອກນິນລົບ ອີກ.

ຊາວຜູ້ອອກແຮງງານໄດ້ດຳເນີນການຕໍ່ສູ້ຢ່າງແທ້ຈິງກັບພວກຕ້ານປະຕິວັດ. ການກໍ່ກະບົດຂອງ ກອກນິນລົບ ໄດ້ສ້າງຄວາມຄຽດແຄ້ນລວມທົ່ວໄປໃນໝູ່ປະຊາຊົນ. ຕາມຄຳຮຽກຮ້ອງຂອງພັກໂບນເຊວິກໄດ້ສ້າງກອງລະວັງແດງຂອງກຳມະກອນເມືອງ ເປໂຕຣກຣາດຂຶ້ນຢ່າງວ່ອງໄວ, ຊຶ່ງໄດ້ເຄື່ອນໄປພົບກັບກອງທະຫານຕ້ານການປະຕິວັດ. ຢູ່ໃນທຸກໆຕົວເມືອງທີ່ຕັ້ງຢູ່ຕາມເສັ້ນທາງແຫ່ງການເຄື່ອນທັບຂອງ ກອກນິນລົບ, ໄດ້ສ້າງຕັ້ງຄະນະກຳມະການປະຕິວັດການທະຫານຂຶ້ນ, ກອງຮ້ອຍປະຕິວັດກໍ່ໄດ້ສ້າງຂຶ້ນຢ່າງວ່ອງໄວທັນການ. ການກໍ່ກະບົດໄດ້ຖືກທັບມ້າງຕັ້ງແຕ່ຫົວທີໂລດ. ມະຫາຊົນທີ່ປະຕິວັດໄດ້ທວງໃຫ້ລັດຖະບານ ກີແຣນສະກີ ຕ້ອງຈັບນາຍພົນ ກອກນິນລົບ ແລະຜູ້ຊ່ວຍທີ່ໃກ້ຊິດຂອງມັນ. ນາຍພົນ ກຣີມອບ ຜູ້ບັນຊາການກອງພົນທະຫານມ້າໄດ້ຖືກຍິງເປົ້າຈຶ່ງໄດ້ພິສູດ ໃຫ້

ເຫັນວ່າການຕ້ານປະຕິວັດໄດ້ຖືກປະລາໄຊຢ່າງເລິກເຊິ່ງ.

ໂດຍຄຳນຶງເຖິງຄວາມຟົດຟື້ນຂອງຂະບວນການ ແລະການຕໍ່ສູ້ຢ່າງກ້ວາງຂວາງຂອງສະພາໂຊວຽດຫລາຍໆແຫ່ງຕ້ານ ກອກນິນລົບ ວ.ອ.ເລນິນ ໄດ້ສະເຫນີໃຫ້ພວກແອແຊຣ ແລະແມນເຊວິກມອບອຳນາດໃຫ້ສະພາໂຊວຽດ. ແຕ່ວ່າພວກເຂົາໄດ້ປະຕິເສດຈາກຄວາມສາມາດແບບສັນຕິອັນສຸດທ້າຍແຫ່ງການມອບອຳນາດໃຫ້ແກ່ສະພາໂຊວຽດນີ້ອີກ.

ທາງອອກອັນຫນຶ່ງອັນດຽວຈາກສະພາບການທີ່ເກີດຂຶ້ນນີ້ແມ່ນການໂຄ່ນລົ້ມລັດຖະບານຊົ່ວຄາວດ້ວຍການລຸກຮື້ຂຶ້ນປະກອບອາວຸດ ແລະການສ້າງຕັ້ງຜະເດັດການກຳມະຊີບ. ວັນທີ ໓໑ ສິງຫາ ສະພາໂຊວຽດເມືອງ ເປໂຕຣກຣາດ ໄດ້ຮັບຮອງເອົາປະຊາມະຕິໂບນເຊວິກກ່ຽວກັບຄວາມຈຳເປັນມອບອຳນາດໃຫ້ແກ່ສະພາໂຊວຽດ. ວັນທີ ໕ ກັນຍາ ສະພາໂຊວຽດເມືອງມົດສະກູໄດ້ໃຫ້ການສະຫນັບສະຫນູນປະຊາມະຕິຂອງໂບນເຊວິກ. ສະພາໂຊວຽດປະຈຳທ້ອງ ຖິ່ນຫລາຍໆແຫ່ງກໍໄດ້ສະແດງຄວາມເຫັນດີສະຫນັບສະຫນູນໃນທົ່ວປະເທດໄດ້ເລີ້ມຕົ້ນການຫັນສະພາໂຊວຽດເປັນສະພາໂຊວຽດໂບນເຊວິກ.

24/VII
ຫາມຈຳໜ່າຍ

**<u>ການປະຕິວັດບໍ່ພຽງແຕ່ຫລີກລຽງບໍ່ໄດ້ເທົ່ານັ້ນ</u>**

**<u>ແຕ່ຍັງຈຳເປັນອີກດ້ວຍ</u>**

ການເຄື່ອນໄຫວຂອງພວກ ກອກນິລົບໄດ້ເຮັດໃຫ້ສະພາບການລວມພາຍ

ໃນປະເທດມີການປ່ຽນແປງຢ່າງເລິກເຊິ່ງ. ອັນນີ້ມັນໄດ້ສະແດງອອກຈະແຈ້ງເປັນພິເສດຢູ່ໃນການປ່ຽນແປງຮູບການການຕໍ່ສູ້ຂອງຊາວຜູ້ອອກແຮງງານ ແລະມະຫາຊົນທີ່ຖືກກົດຂີ່. ຢູ່ໃນຫລາຍໆທ້ອງຖິ່ນກຳມະກອນໄດ້ຂັບໄລ່ເຈົ້າຂອງອອກໄປ ແລະໄດ້ກຳເອົາການຄຸ້ມຄອງວິສາຫະກິດໄວ້ໃນກຳມືຂອງຕົນ. ຢູ່ໃນໂຮງງານທີ່ໄດ້ຢຶດເອົານັ້ນໄດ້ສ້າງຄະນະກຳມະການພິເສດຈາກກຳມະກອນໂດຍມີການປະກອບສ່ວນຂອງນັກວິຊາວະກອນທາງດ້ານເຕັກນິກຊຶ່ງໄດ້ຈັດ ຕັ້ງການຜະລິດ,ຊອກຫາພາຫະນະ ແລະວັດຖຸດິບທີ່ຈຳເປັນ,ໄດ້ສ້າງສາຍພົວ ພັນກັບວິສາຫະກິດຕ່າງໆທີ່ຈຳເປັນ.

ບັນດາຮູບການແຫ່ງການຕໍ່ສູ້ຂອງຊາວນາກໍ່ປ່ຽນແປງ. ຊາວນາທີ່ ທຸກຈົນຮູ້ວ່າ,ໄຊຊະນະຂອງພວກ ກອກນິນລົບ ອາດຈະນຳໄປສູ່ການປັບປຸງອຳນາດຂອງພວກເຈົ້າທີ່ດິນ ແລະອັນນີ້ມັນໝາຍເຖິງຈຸດຈົບຂອງຄວາມມຸ່ງຫວັງທັງໝົດທີ່ຈະໄດ້ຮັບດິນ. ເມື່ອມີຄວາມກະວົນກະວາຍຕໍ່ອະນາຄົດຄືແນວນີ້,ໂດຍມີຄວາມເດືອດແຄ້ນຕໍ່ລັດຖະບານທີ່ໄດ້ຊຸກຍູ້ ແລະສະໜັບສະໜູນພວກເຈົ້າທີ່ດິນຊຶ່ງບໍ່ຕ້ອງການຈັກດທີ່ຈະກ້າວເຂົ້າແກ້ໄຂບັນຫາທີ່ດິນ,ຊາວນາໄດ້ຢຶດເອົາຊັບສົມບັດຂອງເຈົ້າທີ່ດິນເລື້ອຍໆ,,ໄດ້ຂັບໄລ່ພວກເຈົ້າທີ່ດິນອອກໄປ ແລະໄດ້ແບ່ງປັນດິນ ແລະອຸປະກອນຕ່າງໆລະຫວ່າງພວກເຂົາ.

ຢູ່ໃນກອງທັບ ທະຫານໄດ້ຂັບໄລ່ຜູ້ບັນຊາການທີ່ປະຕິການອອກໄປແລະໄດ້ເລືອກຜູ້ໃໝ່ທີ່ເຂົາເຈົ້າເຊື່ອໝັ້ນຂຶ້ນແທນ. ທະຫານໄດ້ປະຕິເສດຈາກການສືບຕໍ່ເຮັດສົງຄາມ. ຍ້ອນມີຄວາມເບື່ອໜ່າຍສົງຄາມພວກເຂົາໄດ້ອອກໜີຈາກຊຸມຄອງເປັນກອງຮ້ອຍກອງພັນ.

ລັກສະນະຂອງຂະບວນການກໍ່ມີການປ່ຽນແປງທັງຢູ່ໃນຖັນແຖວຂອງຊົນຊາດທີ່ຖືກກົດຂີ່. ໃນນັ້ນໄດ້ສະແດງອອກໃຫ້ເຫັນສອງທ່າອ່ຽງເລື້ອຍໆຄື: ທ່າອ່ຽງນາຍທຶນ ຊຶ່ງໃນນັ້ນນາຍທຶນແຫ່ງຊາດທີ່ຖືກກົດຂີ່ມຸ່ງຫວັງຈະເອົາຕົນ ອອກຈາກຄວາມເປັນເຈົ້າຂອງຊາດໃຫຍ່ມະຫາອຳນາດເພື່ອຈະໄດ້ຂູດຮີດຊາວ ຜູ້ອອກແຮງງານດ້ວຍຕົນເອງ ໂດຍບໍ່ຕ້ອງແບ່ງລາຍໄດ້ຂອງຕົນໃຫ້ແກ່ຊາດທີ່ກົດຂີ່ ແລະທ່າອ່ຽງປະຊາທິປະໄຕ - ປະຕິວັດຊຶ່ງໃນນັ້ນຊາວຜູ້ອອກແຮງງານ ຂອງຊົນຊາດທີ່ຖືກກົດຂີ່ໄດ້ຕໍ່ສູ້ຕ້ານກັບການຂູດຮີດຂອງພວກນາຍທຶນພວກອື່ນ ແລະຂອງຕົນເອງ. ພາຍຫລັງລະບອບ ກອກນິນລົບ; ນາຍທຶນແຫ່ງຊາດຊຶ່ງກ່ອນນີ້ໄດ້ໃຫ້ການສະໜັບສະໜູນລັດຖະບານກໍ່ຍິ່ງເຫັນແຈ້ງວ່າ, ລັດຖະບານລວມທົ່ວລັດເຊຍຈະບໍ່ສາມາດປາບປາມການປະຕິວັດໄດ້, ອາລົມຄະຕິແບບຢາກແຍກ ຕົວອອກຕ່າງຫາກໄດ້ເພີ່ມທະວີຂຶ້ນ ເຊັ່ນວ່າ: ນາຍທຶນແຫ່ງຊາດຂອງທ້ອງຖິ່ນໄດ້ພະຍາຍາມຊອກຫານາຍເໜືອຫົວຕ່າງດ້າວເພື່ອຈະຮັກສາອຳນາດໄວ້ໃຫ້ແກ່ຕົນເອງ ແລະພ້ອມດຽວກັນນັ້ນກໍ່ຕໍ່ສູ້ຕ້ານການປະຕິວັດ. ຂະບວນການປະຕິວັດປະຊາທິປະໄຕກໍ່ເພີ່ມທະວີຄວາມຫ້າວຫັນຂຶ້ນ ເຊັ່ນວ່າ: ຊາວຜູ້ອອກແຮງງານຂອງເຂດຊົນຊາດໄດ້ເຫັນແຈ້ງວ່າ, ການແກ້ໄຂບັນຫາທາງສັງຄົມ ແລະບັນຫາຊົນຊາດຈະສາມາດເປັນໄປໄດ້ກໍ່ມີແຕ່ຢູ່ໃນການຕໍ່ສູ້ຮ່ວມກັນກັບຂະບວນການປະຕິວັດທົ່ວລັດເຊຍ. ການຕໍ່ສູ້ປົດປ່ອຍຊາດໄດ້ຮວມເຂົ້າເປັນກະແສໃຫຍ່ໂຕ ໃນແນວທາງປະຕິວັດລວມ.

ການປະຕິວັດໄດ້ກາຍເປັນບໍ່ພຽງແຕ່ສິ່ງຫລີກລ່ຽງບໍ່ໄດ້ເທົ່ານັ້ນແຕ່ ຍັງແມ່ນສິ່ງຈຳເປັນອີກດ້ວຍ. ເສັ້ນທາງອື່ນແມ່ນບໍ່ມີ. ພັກນາຍທຶນນ້ອຍທັງໝົດໄດ້

ຂາດຄວາມສາມາດໃນການເຄື່ອນໄຫວ. ພັກໂບນເຊວິກໄດ້ກຳເອົາແນວທາງແຫ່ງການລຸກຮືຂຶ້ນປະກອບອາວຸດ.

ວ.ອ.ເລນິນ ໃນເວລາເຄື່ອນໄຫວປິດລັບໄດ້ຕິດຕາມຢ່າງລະອຽດນຳເຫດການພາຍໃນປະເທດ. ໃນຊ່ວໄລຍະ ໑໑໐ ວັນເມື່ອເວລາເຄື່ອນໄຫວປິດລັບນັ້ນເພິ່ນໄດ້ຂຽນບົດ ແລະຈົດໝາຍຫລາຍກ່ວາ ໖໐ ບົດ.

ໃນບັນດາບົດພິມເຫລົ່ານັ້ນມີປັນ "ໄພພິບັດທີ່ຂົ່ມຂູ່ ແລະຈະຕໍ່ສູ້ກັບມັນຄືແນວໃດ". ອັນນີ້ແມ່ນໂຄງການການເມືອງຂອງພັກ, ທີ່ໄດ້ຕອບຕໍ່ບັນຫາວ່າ: ຈະກອບກູ້ປະເທດຊາດອອກຈາກຄວາມພິນາດຄືແນວໃດ. ເມື່ອເວລາວາດພາບເຖິງຄວາມທຸກຍາກ ແລະອຶດຫິວທີ່ມະຫາຊົນສ່ວນໃຫຍ່ໄດ້ຮັບເຄາະຍ້ອນການດຳເນີນທຸລະກິດຕາມໃຈຂອງພວກນາຍທຶນ ແລະເຈົ້າທີ່ດິນນັ້ນ, ເລນິນໄດ້ສ້າງພື້ນຖານ ແລະໄດ້ວາງມາດຕາການປະຕິວັດທີ່ຈະສາມາດຊ່ວຍສະກັດກັ້ນໄພພິບັດນັ້ນຄື: ການກວດກາຂອງກຳມະກອນຕໍ່ການຜະລິດ, ການໂອນເອົາທະນາຄານ, ແຊັງດິກາ ແລະອື່ນໆມາເປັນຂອງລັດ, ພ້ອມໆກັບການຢຶດເອົາທີ່ດິນຂອງເຈົ້າທີ່ດິນ ແລະໂອນເອົາດິນທັງໝົດມາເປັນຂອງລັດ.

ຫລັກມູນອັນພື້ນຖານຂອງເລນິນກ່ຽວກັບຄວາມອາດສາມາດແຫ່ງໄຊຊະນະຂອງສັງຄົມນິຍົມໃນປະເທດໜຶ່ງປະເທດດຽວໄດ້ກາຍເປັນຈຸດເລີ່ມຂອງໂຄງການການເມືອງໃນຕອນຕົ້ນຂອງມະຫາປະຕິວັດກຳມາຊີບ.

ໃນລະຫວ່າງວັນທີ ໑໒ ແລະ ໑໔ ກັນຍາ ວ.ອ.ເລນິນໄດ້ຂຽນ ຈົດໝາຍສອງສະບັບໄປຫາຄະນະບໍລິຫານງານສູນກາງ, ຫາຄະນະບໍລິຫານງານຂອງສະພາໂຊວຽດແຫ່ງເມືອງ ເປແຕັກບວກ ແລະມົດສະກູ, ຊຶ່ງໃນນັ້ນໄດ້ບັນຈຸ

ເອົາການວິເຄາະສະພາບການ ແລະໄດ້ຕອບຢ່າງຈະແຈ້ງທີ່ສຸດກ່ຽວກັບບັນຫາວ່າ, ເປັນຫຍັງນັກໂບນເຊວິກຈຶ່ງຈະສາມາດ ແລະຕ້ອງກຳເອົາອຳນາດ ໂດຍສະເພາະໃນປະຈຸບັນ. ການນຳພາຢູ່ໃນສະພາໂຊວຽດຂອງທັງສອງນະຄອນຫລວງໄດ້ຕົກເຂົ້າຢູ່ໃນກຳມືຂອງນັກໂບນເຊວິກທີ່ມີປະຊາຊົນເດີນຕາມ. ເມື່ອກຳອຳນາດ, ສະພາໂຊວຽດຈະກ້າວເຂົ້າເຊັນສັນຍາສັນຕິພາບແບບປະຊາທິປະໄຕໃນທັນໃດ, ຈະຢຶດເອົາທີ່ດິນຂອງພວກເຈົ້າທີ່ດິນຢ່າງບໍ່ມີການຕອບແທນແລະຈະມອບດິນນັ້ນໃຫ້ຊາວນາ. ເລນິນໄດ້ຂຽນວ່າ "ເມື່ອໄດ້ຮັບສຽງສ່ວນຫລາຍໃນສະພາໂຊວຽດຂອງຜູ້ແທນກຳມະກອນ ແລະທະຫານຂອງທັງສອງນະ ຄອນຫລວງ ນັກໂບນເຊວິກຈະສາມາດແລະຕ້ອງກຳເອົາອຳນາດແຫ່ງລັດໄວ້ໃນກຳມືຂອງຕົນ" ໑).

ໃນຈົດໝາຍຂອງເລນິນບໍ່ໄດ້ແຈ້ງໄລຍະເວລາແຫ່ງການລຸກຮືຂຶ້ນ, ບັນຫານີ້ຄະນະບໍລິຫານງານສູນກາງພັກຕ້ອງໄດ້ແກ້ໄຂໂດຍເລືອກເອົາກາລະ ໂອກາດທີ່ເໝາະສົມສຳລັບການລຸກຮືຂຶ້ນ; ແຕ່ກ່ອນນີ້ແມ່ນເຮັດແນວໃດຕ້ອງໃຫ້ໝົດທົ່ວພັກໂບນເຊວິກຮັບຮູ້ແຈ້ງເຖິງຄວາມຈຳເປັນແຫ່ງການລຸກຮືຂຶ້ນ.

## ຕ້ອງໂຄ່ນລົ້ມລັດຖະບານໃນມື້ນີ້, ເພາະວ່າ ມື້ອື່ນຈະຊ້າເກີນໄປ

---

໑) ວ.ອ.ເລນິນ ນິພົນຄົບຊຸດ ເຫລັ້ມ ໓໔ ໜ້າ ໒໓໙.

ໃນຊ່ວງເວລາຕັ້ງແຕ່ຕອນກາງຂອງເດືອນກັນຍາໃນເມື່ອເວລາທີ່ເລນິນໄດ້ຮຽກຮ້ອງໃຫ້ລຸກຮືຂຶ້ນ, ທີ່ໄດ້ຜ່ານໄປບໍ່ຫລາຍກ່ວາສາມອາທິດຊໍ້ານັ້ນສະພາບການພາຍໃນປະເທດໄດ້ມີການຫັນປ່ຽນຢ່າງແຂງແຮງ.

ພາຍໃຕ້ຂໍ້ອ້າງວ່າ, ເຢຍລະມັນໄດ້ເຕົ້າໂຮມກໍາລັງທະຫານຕ້ານເປໂຕຣກຣາດ ລັດຖະບານຊົ່ວຄາວໄດ້ຕົກລົງເອົາກອງທະຫານທີ່ປະຕິວັດອອກຈາກນະຄອນຫລວງ. ຄວາມມຸ່ງຫວັງຂອງລັດຖະບານແມ່ນຢາກໃຫ້ນັກໂບນເຊວິກຂາດການສະໜັບສະໜູນຈາກກອງຮ້ອຍທະຫານທີ່ປະຕິວັດ. ດ້ານໜຶ່ງອີກອາດເປັນໄປໄດ້ວ່າລັດຖະບານຊົ່ວຄາວໄດ້ຕົກລົງທີ່ຈະມອບເມືອງ ເປໂຕຣກຣາດ ທີ່ປະຕິວັດໃຫ້ພວກເຢຍລະມັນນັ້ນເພື່ອປາບປາມການປະຕິວັດໄດ້.

ພ້ອມດຽວກັນນີ້ພວກກໍາອໍານາດເຢຍລະມັນກໍ່ມີຄວາມຢ້ານກົວຕໍ່ຂະບວນການປະຕິວັດຢູ່ພາຍໃນປະເທດຂອງຕົນທີ່ອາດຈະເພີ່ມຂະຫຍາຍຂຶ້ນພາຍໃຕ້ຜົນສະທ້ອນຂອງໝົດການປະຕິວັດໃນປະເທດລັດເຊຍ. ໂດຍຢ້ານຕໍ່ການສືບຕໍ່ຂະຫຍາຍການປະຕິວັດຢູ່ໃນແນວຫລັງຂອງຕົນ, ພວກເຂົາຈໍາເປັນຕ້ອງໄດ້ເຊັນສັນຍາສັນຕິພາບແຕ່ຝ່າຍດຽວກັບລັດເຊຍ, ເພື່ອພ້ອມໆກັບນາຍທຶນລັດເຊຍຊຶ່ງວ່າປະຈຸບັນຍັງກໍາອໍານາດຢູ່ນັ້ນມຸ່ງທໍາລາຍການປະຕິວັດ.

ການປ່ຽນແປງທັງໝົດເຫລົ່ານີ້ຮຽກຮ້ອງໃຫ້ມີການກໍານົດເວລາແຫ່ງການລຸກຮືຂຶ້ນ. ວັນທີ ໙ ຕຸລາ ເລນິນໄດ້ເດີນທາງເຂົ້າມາ ເປໂຕຣກຣາດຢ່າງລັບໆ. ວັນທີ ໑໐ ຕຸລາ ໄດ້ເປີດກອງປະຊຸມສູນກາງພັກ ຊຶ່ງໃນນັ້ນ ເລນິນໄດ້ເຣັດບົດປາໄສກ່ຽວກັບສະພາບການສາກົນ ແລະພາຍໃນປະເທດໂດຍໄດ້ສະຫລຸບບົດປາໄສນັ້ນກ່ຽວກັບຄວາມຈໍາເປັນແຫ່ງການລຸກຮືຂຶ້ນ. ສ່ວນໃຫຍ່ຂອງ

ສະມາຊິກໃນຄະນະບໍລິຫານງານສູນກາງພັກໄດ້ລົງຄະແນນສຽງເພື່ອຮັບເອົາ
ປະຊາມະຕິກ່ຽວກັບການລຸກຮື້ຂຶ້ນຢ່າງວ່ອງໄວ.

ຄະນະບໍລິຫານງານສູນກາງພັກໄດ້ກ້າວສູ່ການສ້າງຕັ້ງກອງບັນຊາການ ການລຸກຮື້ຂຶ້ນໂລດ. ພາຍໃຕ້ສະພາໂຊວຽດເມືອງເປໂຕຣກຣາດໄດ້ສ້າງຕັ້ງຄະນະກຳມະການການທະຫານປະຕິວັດຊຶ່ງ ດຳເນີນການລຸກຮື້ຂຶ້ນໃນຕົວຈິງ.

ຊີໂນວີເອບ ແລະກາແມນເນບ ທີ່ໄດ້ລົງຄະແນນສຽງຕ້ານປະຊາມະຕິ ບໍ່ໄດ້ປະຕິບັດຕາມມະຕິຂອງສູນກາງ ແລະໄດ້ທໍລະຍົດຢ່າງເປີດເຜີຍ; ພວກເອົາໄດ້ຂຽນຈົດໝາຍກ່ຽວກັບການລົງຄະແນນສຽງຂອງຕົນພ້ອມທັງມະຕິຂອງສູນກາງພັກກ່ຽວກັບການລຸກຮື້ຂຶ້ນໄປໃຫ້ໜັງສືພິມຂອງແມນເຊວິກ. ລັດຖະບານທີ່ໄດ້ຖືກບອກເຕືອນດ້ວຍພວກທໍລະຍົດໄດ້ເພີ່ມທະວີມາດຕາການກ່ຽວກັບການປາບປາມການລຸກຮື້ຂຶ້ນທີ່ຈະໄດ້ຈັດຂຶ້ນ, ໄດ້ຮຽກເອົາກອງຮ້ອຍທີ່ບໍລິສຸດຕໍ່ລັດຖະບານກັບຈາກແນວໜ້າ. ພວກຜູ້ນຳແມນເຊວິກ ແລະແຂແຊຣ ໄດ້ວາງມາດຕາການເພີ່ມເຕີມ ເຊັ່ນວ່າ: ພວກເອົາໄດ້ຕົກລົງຍ້າຍການຮຽກປະຊຸມໃຫຍ່ຄັ້ງທີ ໒ ຂອງສະພາໂຊວຽດໄປໃສ່ວັນທີ ໒໕ ຕຸລາ ແລະຫວງໃຫ້ບັນດາການຈັດຕັ້ງຂອງຕົນຕ້ອງປະຕິບັດມາດຕາການທີ່ຈຳເປັນທັງໝົດເພື່ອຮັບປະກັນສຽງສ່ວນໃຫຍ່ຂອງຕົນໄວ້ໃນສະພາໂຊວຽດດັ່ງກ່າວ.

ໃນເງື່ອນໄຂດັ່ງນີ້ຈະຕໍ່ສູ້ກໍແມ່ນການສ່ຽງໄພ ດ້ວຍເຫດນັ້ນໂບນເຊວິກຈຶ່ງໄດ້ໂຈະການລຸກຮື້ຂຶ້ນໄວ້ກ່ອນ. ແຕ່ວ່າໂຈະນັ້ນບໍ່ໝາຍເຖິງການເລີ້ມລົ້ມ. ນັກໂບນເຊວິກໄດ້ເພີ່ມທະວີການສ້າງຕັ້ງກອງລະວັງແດງຂຶ້ນ. ໄດ້ກວດກາເບິ່ງອາລົມຄະຕິຂອງບັນດາກອງພົນທະຫານ. ຄະນະກຳມະການການທະຫານ ປະຕິ

ວັດໄດ້ສົ່ງຜູ້ບັນຊາການດ້ານການເມືອງຂອງຕົນໄປໃນທຸກໆກອງຮ້ອຍ, ໂດຍໄດ້ມອບໝາຍໃຫ້ເຂົາເຈົ້າເຕົ້າໂຮມຄວາມສາມັກຄີ ແລະກະກຽມກອງທະຫານເຂົ້າໃນການລຸກຮືຂຶ້ນ. ໄດ້ດຳເນີນການໂຄສະນາທາງດ້ານການເມືອງຢ່າງກວ້າງຂວາງຢູ່ໃນໂຮງຈັກ, ໂຮງງານ, ໃນກອງທະຫານນະຄອນຫລວງ. ຢູ່ໃນກອງລະວັງແດງຂອງນະຄອນຫລວງກ່ອນໜ້າການລຸກຮືຂຶ້ນນັ້ນມີກຳມະກອນຫລາຍກວ່າ ໒໐ ພັນຄົນ. ນັກໂບນເຊວິກໄດ້ຮັບການສະໜັບສະໜູນບໍ່ພຽງແຕ່ໃນເປໂຕຣກຣາດ ແລະມົດສະກູເທົ່ານັ້ນ. ຈຳນວນຂອງກອງລະວັງແດງໄດ້ເພີ່ມທະວີຂຶ້ນໃນທົ່ວປະເທດ.

ວ.ອ. ເລນິນຖືວ່າ, ຈຸດເລັງຂອງກຳລັງທັງໝົດທີ່ໄດ້ກະກຽມເຂົ້າສູ່ການລຸກຮືຂຶ້ນນັ້ນຕ້ອງແມ່ນເມືອງ ເປໂຕຣກຣາດ ເພາະວ່າຢູ່ນີ້ແມ່ນທີ່ຕັ້ງຂອງລັດຖະບານ, ສຳນັກງານຂອງລັດຖະບານ, ຢູ່ນີ້ແມ່ນສູນກາງຂອງພັກໂບນເຊວິກທີ່ໄດ້ຮັບການສະໜັບສະໜູນຂອງຊົນຊັ້ນກຳມະກອນທີ່ເດັດດ່ຽວ, ໜຽວແໜ້ນແລະມີປະສົບປະການຄືຊາວກຳມາຊົບເມືອງ ເປແຕັກບວກ, ກອງທັບເຮືອແລະກອງທະຫານປະຕິວັດ.

ໂດຍມີການຄຳນຶງເຖິງວ່າພວກຜູ້ນຳແອແຊຣ ແລະແມນເຊວິກໄດ້ຍ້າຍກອງປະຊຸມໃຫຍ່ຂອງສະພາໂຊວຽດໄປໃສ່ວັນທີ ໒໕ ຕຸລານັ້ນບໍ່ແມ່ນບັງເອີນ, ພວກເຂົາຕ້ອງການຢາກເຮັດໃຫ້ແຜນການຂອງນັກໂບນເຊວິກສັບສົນປົນເປ, ສ່ວນອີກດ້ານໜຶ່ງແມ່ນເພື່ອໃຫ້ໄດ້ຮັບສຽງສ່ວນຫລາຍ, ໂດຍບໍ່ຍິນຍອມຕໍ່ ການລັກໂລບໝາກຜົນຂອງການເລືອກຕັ້ງນັ້ນ ເລນິນໄດ້ຕໍ່ສູ້ໃຫ້ລຸກຮືຂຶ້ນກ່ອນກອງປະຊຸມໃຫຍ່. ພວກແອແຊຣ ຝ່າຍຊ້າຍເພື່ອນຮ່ວມທາງທີ່ບໍ່ໝັ້ນຄົງຂອງນັກ

ໂບນເຊວິກ, ເຖິງວ່າໄດ້ປະກາດກ່ຽວກັບການສະໜັບສະໜູນນັກໂບນເຊວິກ ແລະທັງໄດ້ສະເໜີໃຫ້ຕົວແທນຂອງຕົນເຂົ້າຮ່ວມໃນຄະນະກຳມະການການທະຫານປະຕິວັດຂອງສະພາໂຊວຽດເມືອງເປໂຕຣກຣາດກໍຍັງບໍ່ທັນໄດ້ຕັດຂາດກັບພວກແຂແຊຣຝ່າຍຂວາ. ນອກຈາກນັ້ນໃນບາດກ້າວແຕ່ງການກະກຽມການລຸກຮືຂຶ້ນ, ໄດ້ສະແດງໃຫ້ເຫັນວ່າ ຕຣົດສະກີ ເຫັນພ້ອມນຳການໂຈະການລຸກຮືຂຶ້ນກ່ອນການຮຽກປະຊຸມໃຫຍ່ຊຶ່ງຕາມທັດສະນະຂອງ ຕຣົດສະກີ ນັ້ນຈະໄດ້ແກ້ໄຂບັນຫາກ່ຽວກັບການມອບອຳນາດໃຫ້ສະພາໂຊວຽດ.

ຕຣົດສະກີ ກໍດີ ຊິໂນວີເອບ ແລະ ກາແມນເນບ ທີ່ສະໜັບສະໜູນມັນໄດ້ປິດບັງຄຳສະເໜີຂອງຕົນດ້ວຍຄວາມຄິດຄວາມເຫັນ "ທີ່ຊອບກົດໝາຍ" ເຊັ່ນເວົ້າວ່າ, ມະຕິກອງປະຊຸມໃຫຍ່ກ່ຽວກັບການຍຶດອຳນາດນັ້ນຈະຖືກຕ້ອງຕາມກົດໝາຍ, ຖ້າຫາກວ່າລັດຖະບານບໍ່ຍອມປະຕິບັດຕາມມະຕິແລ້ວ ເວລານັ້ນຕ້ອງໄດ້ບັງຄັບໃຫ້ລັດຖະບານເຮັດແບບນັ້ນ. ແຕ່ວ່າ "ພວກຊອບກົດໝາຍ" ບໍ່ເຂົ້າໃຈ ຫລືວ່າບໍ່ຕ້ອງການເຂົ້າໃຈວ່າການສະເໜີໃຫ້ລໍຖ້າການແກ້ໄຂ ບັນຫາກ່ຽວກັບອຳນາດກ່ອນກອງປະຊຸມໃຫຍ່ຂອງສະພາໂຊວຽດຂອງເຂົານັ້ນບໍ່ພຽງແຕ່ບໍ່ໄດ້ຄຳນຶງເຖິງຄວາມຄອນແຄນຂອງເພື່ອນຮ່ວມທາງທີ່ບໍ່ໝັ້ນຄົງທີ່ອາດສາມາດເປັນໄປໄດ້ ແລະຄວາມອາດສາມາດລັກໂລບໃນການເລືອກຕັ້ງຂອງພວກແຂແຊຣ ແລະແມນເຊວິກເທົ່ານັ້ນ ແຕ່ໃນຕົວຈິງແລ້ວຍັງໄດ້ບອກວັນທີ່ຂອງການລຸກຮືຂຶ້ນໃຫ້ສັດຕູຮູ້ອີກດ້ວຍ.

ວ.ອ.ເລນິນໄດ້ຕໍ່ສູ້ຢ່າງເດັດດ່ຽວເພື່ອເຮັດແນວໃດຕ້ອງໃຫ້ໄດ້ ເລີ່ມຕົ້ນການລຸກຮືຂຶ້ນກ່ອນກອງປະຊຸມໃຫຍ່ຄັ້ງທີ ໒ ຂອງສະພາໂຊວຽດ. ຕ້ອງໄດ້

ລົງມືກ່ອນສັດຕູທີ່ໄດ້ບອກເຕືອນໃຫ້ຮູ້ໂດຍພວກທໍລະຍົດ ແລະພວມລໍຖ້າການລຸກຮື້ອນໃນວັນຂອງການເປີດກອງປະຊຸມໃຫຍ່ນັ້ນຢູ່.

ຕາມຄຳສະເໜີຂອງເລນິນຄະນະບໍລິຫານງານສູນກາງພັກໄດ້ເລີ່ມຕົ້ນການລຸກຮື້ອນໃນວັນທີ ໒໔ ຕຸລາ ກ່ອນການເປີດກອງປະຊຸມໃຫຍ່ຄັ້ງທີ ໒ຂອງສະພາໂຊວຽດ. ກອງລະວັງແດງ ແລະກອງຮ້ອຍຂອງກຳລັງປ້ອງກັນທີ່ໄດ້ແຕ່ງຕັ້ງໄວ້ກ່ອນແລ້ວນັ້ນໄດ້ຍຶດເອົາສຳນັກງານຂອງລັດຖະບານຢ່າງມີແຜນການ, ໄດ້ຍຶດເອົາຂົວຂ້າມແມ່ນ້ຳ ນີວາ ໄວ້ໃຕ້ການຮັກສາຂອງຕົນຊຶ່ງໄດ້ຮັບປະກັນການຕິດຕໍ່ລະຫວ່າງກຳມະກອນຂອງເຂດເມືອງກັບສູນກາງ. ພວກທີ່ໄດ້ລຸກຮື້ອນໄດ້ຍຶດເອົາຄຸກໂດຍປາສະຈາກການຕ້ານຄືນໃດໆ ແລະໄດ້ປົດປ່ອຍຜູ້ທີ່ຖືກຂຸມຂັງທາງດ້ານການເມືອງ. ຜູ້ທີ່ໄດ້ຮັບການປົດປ່ອຍກໍໄດ້ເຂົ້າຮ່ວມໃນຖັນແຖວຂອງຜູ້ທີ່ລຸກຮື້ອນໃນທັນໃດ. ໄດ້ຍຶດເອົາສະຖານີລົດໄຟ ແລະໄດ້ປະກອບສ້າງກອງປ້ອງກັນໃນກໍລະນີທີ່ມີການເສີມກຳລັງຂອງພວກຕ້ານປະຕິວັດດ້ວຍການຖອນເອົາທະຫານມາຈາກແນວໜ້າ.

ບໍ່ໄດ້ມີການປະກາດໃຫ້ນັດຢຸດງານນັ້ນບໍ່ມີຄວາມຈຳເປັນເພາະວ່າໂຮງຈັກໂຮງງານໄດ້ຕົກຢູ່ໃນກຳມືຂອງກຳມະກອນແລ້ວ. ໃນວິສາຫະກິດໄດ້ມີພວກອາສາສະໝັກຍື່ນຄຳຮ້ອງເຂົ້າໃນກະຂວງລະວັງແດງ. ທະຫານເຮືອຈາກ ກຣົງ-ສະຕາດ ທີ່ໄດ້ກະກຽມເພື່ອປະກອບສ່ວນໃນການລຸກຮື້ອນນັ້ນໄດ້ອອກເດີນທາງມານະຄອນຫລວງ. ຮອດຕອນແລງຂອງມື້ຕໍ່ມາກອງທະຫານເຮືອກໍໄດ້ມາຮອດແລ້ວ. ໄດ້ຍຶດເອົາທະນາຄານແຫ່ງລັດ, ສູນກາງໄປສະນີ ແລະໂທລະຄົມມະນາຄົມ, ສ່ວນວ່າໃນເຂດເມືອງຕ່າງໆນັ້ນໄດ້ຍຶດເອົາພະແນກໄປສະນີທ້ອງຖິ່ນ. ພວກ

ລຸກຮືຂຶ້ນໄດ້ຍຶດເອົາສຳນັກບັນນາທິການໜັງສືພິມນາຍທຶນ.

ລັດຖະບານຊົ່ວຄາວໄດ້ເສຍແຮງລ້າໆຍ້ອນສົນລະວົນນຳໂທລະເລກ. ກະແສໂທລະເລກພ້ອມດ້ວຍຄຳໝັ້ນສັນຍາວ່າຈະສົ່ງກອງຮ້ອຍທີ່ໄດ້ທວງເອົານັ້ນໄດ້ຫລັ່ງໄຫລມາຈາກແນວໜ້າເຂົ້າມາວັງລະດູໜາວຢ່າງລຽນຕິດ, ແຕ່ວ່າກໍບໍ່ມີທະຫານແມ່ນແຕ່ຄົນດຽວເຂົ້າປະກົດຕົວ.

ໃນຕອນແລງວັນທີ ໒໔ ຕຸລາ ຄະນະບໍລິຫານງານສູນກາງໄດ້ຮຽກຮ້ອງເລນິນຈາກເຮືອນລັບຂອງເພິ່ນມາຢູ່ຕຶກສະໂມນນີ. ຜູ້ນຳພາທີ່ຍິ່ງໃຫຍ່ຂອງພັກ, ຜູ້ລະດົມ ແລະຈັດຕັ້ງການລຸກຮືຂຶ້ນປະກອບອາວຸດໄດ້ກາຍເປັນຜູ້ກຳພວງມາໄລຂອງການປະຕິວັດແລ້ວ. ເລນິນໄດ້ທວງໃຫ້ຍຶດເອົາວັງລະດູໜາວໂດຍດ່ວນ ແລະຈັບສະມາຊິກຂອງລັດຖະບານຊົ່ວຄາວ. ເລນິນໄດ້ຂຽນໃນຕອນແລງຂອງວັນທີ ໒໔ ຕຸລາ ວ່າ: "ບໍ່ປ່ອຍໃຫ້ອຳນາດຕົກຢູ່ໃນກຳມືຂອງ ກີແຣນສະກີ ແລະກຸ່ມຂອງມັນຮອດວັນທີ ໒໕ ເດັດຂາດ...ຕ້ອງແກ້ໄຂວຽກງານໃນຕອນແລງມື້ນີ້ ຫລືວ່າຕອນກາງຄືນ" ໑).

ໃນຕອນກາງຄືນຂອງວັນທີ ໒໕ ຕຸລາ ໄດ້ເຕົ້າໂຮມປະຊຸມຄະນະບໍລິຫານງານສູນກາງ. ການລາຍງານທັງໝົດໄດ້ເວົ້າເຖິງຜົນສຳເລັດຢ່າງ ຮຸ່ງເຮືອງຂອງການລຸກຮືຂຶ້ນ. ໄດ້ຄົ້ນຄວ້າບັນຫາກ່ຽວກັບສ່ວນປະກອບຂອງລັດ ຖະບານໃໝ່, ລັດຖະບານປະຕິວັດ, ກ່ຽວກັບການປາໄສຂອງເລນິນຢູ່ໃນກອງ ປະຊຸມໃຫຍ່ຄັ້ງທີສອງ, ກ່ຽວກັບສັນຕິພາບ ແລະທີ່ດິນ. ເລນິນໄດ້ຖືກມອບໝາຍໃຫ້ຂຽນແຈ້ງການກ່ຽວກັບໄຊຊະນະຂອງການລຸກຮືຂຶ້ນ ແລະການໂຄ່ນລົ້ມລັດຖະ

---

໑) ເລນິນ ນິພົນຄົບຊຸດ ເຫລັ້ມ ໓໔, ໜ້າ ໔໓໖.

ບານຊົ່ວຄາວ. ເວລາ ໑໐ ໂມງເຊົ້າຂອງວັນທີ ໒໕ ຕຸລາ ໄດ້ຮັບຮອງເອົາຄຳຮຽກຮ້ອງ "ເຖິງປະຊາຊົນລັດເຊຍ" ທີ່ຂຽນໂດຍເລນິນ.

"ລັດຖະບານຊົ່ວຄາວໄດ້ຫມົດອຳນາດ. ອຳນາດແຫ່ງລັດໄດ້ຕົກຢູ່ໃນກຳມືຂອງອົງການສະພາໂຊວຽດຂອງຜູ້ແທນກຳມະກອນ ແລະທະຫານເມືອງເປໂຕຣກຣາດ ຂອງຄະນະກຳມະການປະຕິວັດການທະຫານຊຶ່ງເປັນຜູ້ນຳພາຊາວກຳມາຊີບ ແລະກອງປ້ອງກັນເມືອງ ເປໂຕຣກຣາດ ແລ້ວ.

ພາລະກິດທີ່ປະຊາຊົນໄດ້ຕໍ່ສູ້ ຄື: ການເຊັນສັນຍາສັນຕິພາບແບບປະຊາທິປະໄຕໂດຍດ່ວນ, ລົບລ້າງກຳມະສິດຂອງເຈົ້າທີ່ດິນຕໍ່ທີ່ດິນ, ການກວດກາຂອງກຳມະກອນຕໍ່ການຜະລິດ, ການສ້າງຕັ້ງລັດຖະບານໂຊວຽດນັ້ນໄດ້ຖືກຮັບປະກັນແລ້ວ.

ການປະຕິວັດຂອງກຳມະກອນ, ທະຫານ ແລະຊາວນາ ຫມັ້ນຍືນ![1]

ຫາຍາກທີ່ສຸດ, ໃນປະຫວັດສາດທີ່ຈະມີແບບຢ່າງຄຳຮ້ຽກຮ້ອງທີ່ຫຍໍ້ແລະສັ້ນທີ່ສຸດຄືແນວນີ້ ຊຶ່ງໄດ້ແຈ້ງການເຖິງການໂຄ່ນລົ້ມລັດຖະບານເກົ່າ, ເຖິງການກຳອຳນາດຂອງຊົນຊັ້ນໃຫມ່, ເຖິງໂຄງການຂອງລັດຖະບານໃຫມ່. ລັກສະນະສັ້ນໆນີ້ກໍສະແດງໃຫ້ເຫັນຈະແຈ້ງທີ່ສຸດແລ້ວວ່າ: ພໍແລ້ວຄຳເວົ້າ ແລະຄຳຫມັ້ນສັນຍາທີ່ລັດຖະບານຊຸດກ່ອນໆໄດ້ໃຫ້ໄປຢ່າງລົ້ນເຫລືອ, ຕ້ອງກ້າວເຂົ້າສູ່ການກະທຳຕົວຈິງທີ່ປະຊາຊົນຜູ້ອຶດຫິວ, ຜູ້ໄດ້ຮັບຄວາມທຸກທໍລະມານນັ້ນຄອຍຢູ່.

ໃນຕອນຄ່ຳຂອງວັນທີ ໒໕ ຕຸລາ ໄດ້ໄຂກອງປະຊຸມໃຫຍ່ຄັ້ງທີ ໒ ຂອງ

---

໑) ວ.ອ.ເລນິນ, ນິພົນຄົບຊຸດເຫລັ້ມ ໓໕, ຫນ້າ ໑.

ສະພາໂຊວຽດ. ກ່ອນຮອດພິທີໄຂໄດ້ມີຜູ້ແທນມາຂຶ້ນທະບຽນ ໖໔໙ ຄົນ. ໃນທ່າມກາງຜູ້ແທນ, ນັກໂບນເຊວິກມີ ໓໐໐໐ ຄົນ ເກືອບ ໖໐% ຂອງກອງ ປະຊຸມໃຫຍ່. ໃນມື້ຂຶ້ນທະບຽນນັ້ນພວກແອແຊຣຍັງປະກອບເປັນຝ່າຍຄ້ານເອ ກະພາບຢູ່ ແລະມີຜູ້ແທນທັງໝົດ ໑໖໐ ຄົນ ມີປະມານ ໑໘% ຂອງກອງປະຊຸມໃຫຍ່. ພວກແມນເຊວິກທຸກກະແສ ແລະທຸກໆປະເພດມີຜູ້ແທນ ໗໘ ຄົນ-໑໑%. ໃນວັນໄຂກອງປະຊຸມໃຫຍ່ຝ່າຍຄ້ານຂອງພວກແອແຊຣໄດ້ແຍກກັນຄື: ພວກແອແຊຣຝ່າຍຊ້າຍປະກອບເປັນຝ່າຍຄ້ານຕ່າງຫາກ ຊຶ່ງໃນນັ້ນມີຈຳນວນພວກແອ-ແຊຣສ່ວນຫລາຍເຂົ້າຮ່ວມ.

ກອງປະຊຸມໃຫຍ່ໄດ້ຕາງໜ້າໃຫ້ສະພາໂຊວຽດທັງໝົດທົ່ວປະເທດຫຼາຍກ່ວາ ໔໐໐ ແຫ່ງ. ເຂດຊົນຊາດທີ່ຫ່າງໄກກໍໄດ້ສົ່ງຜູ້ແທນຂອງຕົນເຂົ້າຮ່ວມຫລາຍກ່ວາ ໘໐໐ ຄົນ ເທົ່າກັນກັບຜູ້ແທນທີ່ເປັນຕົວແທນໃຫ້ແກ່ກອງທັບ ແລະທະຫານເຮືອ. ກຳມະກອນ ແລະຊາວຜູ້ອອກແຮງງານຂອງທຸກໆຊົນຊາດເປັນສິບໆລ້ານ, ທົ່ວປະເທດ ແລະກອງທັບ, ກຳລັງອັນພື້ນຖານທັງໝົດຂອງການປະຕິວັດໄດ້ສົ່ງຕົວແທນຂອງຕົນເຂົ້າຮ່ວມໃນກອງປະຊຸມໃຫຍ່. ມັນແມ່ນການຮວມ ທີ່ສະແດງໃຫ້ເຫັນຄວາມປາຖະໜາ ແລະກຳລັງແຮງຂອງປະຊາຊົນ.

ແຕ່ວ່າວຽກງານຂອງກອງປະຊຸມໃຫຍ່ໄດ້ເລີ່ມຕົ້ນດ້ວຍການຂັດຂວາງ ເຊັ່ນວ່າ ບັນດາຕົວແທນຂອງພວກແອແຊຣຝ່າຍຂວາ ແລະພວກແມນເຊວິກ ໄດ້ອ່ານຖະແຫລງການດ້ວຍການຕິຕຽນການປະຕິວັດ ແລະໄດ້ປະກາດວ່າ ພວກເຂົາຈະຕັດຂາດກັບກອງປະຊຸມໃຫຍ່ ແລະຈະອອກຈາກກອງປະຊຸມໃຫຍ່ໄປ ຫາວັງລະດູໜາວເພື່ອ "ຕາຍຮ່ວມກັບຜູ້ທີ່ໄດ້ເລືອກຕັ້ງຕົນຂຶ້ນມາ". ຕາມຂໍ້ມູນ

ຂອງຄະນະກຳມະການກວດກາບັດໄດ້ແຈ້ງໃຫ້ຮູ້ວ່າ ມີຜູ້ແທນ ៥໑ ຄົນ ປະມານ ໗% ຂອງຜູ້ແທນທີ່ເຂົ້າຮ່ວມກອງປະຊຸມໃຫຍ່ໄດ້ອອກໜີໂດຍໄດ້ຖອນບັນດານັກບັນທຶກກອງປະຊຸມໄປນຳ (ປະຫວັດສາດຂອງກອງປະຊຸມໃຫຍ່ກໍ່ ຂຽນຕາມເອກະສານຂອງກອງປະຊຸມໃຫຍ່ຕາມບົດບັນທຶກຫຍໍ້ຂອງນັກໜັງສືພິມແລະຄວາມຊົງຈຳຂອງນັກການເມືອງ). ອັນນີ້ແມ່ນກໍລະນີທຳອິດຂອງການກໍ່ຈາລະຈົນຕໍ່ອຳນາດໂຊວຽດທີ່ພວກຕ້ານການປະຕິວັດໄດ້ນຳໃຊ້ຢ່າງກວ້າງຂວາງເປັນໜຶ່ງຂອງພາຕະນະແຫ່ງການຕໍ່ສູ້.

ເກືອບວ່າແມ່ນຜູ້ສຸດທ້າຍໃນຈຳນວນຜູ້ທີ່ອອກໄປໄດ້ລີ້ຢູ່ປະຕູ, ໃນເມື່ອຢູ່ເທິງເວທີໄດ້ມີຕົວແທນຂອງພວກເມນເຊວິກຝ່າຍຊ້າຍຜູ້ໜຶ່ງປະກົດຕົວ ແລະ ໄດ້ຖະແຫລງວ່າ, ຝ່າຍລ້ານທັງໝົດຂອງພວກເມນເຊວິກຝ່າຍຊ້າຍຈະສະໜັບ ສະໜູນນັກໂບນເຊວິກໃນກອງປະຊຸມໃຫຍ່. ຄຳຖະແຫລງການນີ້ໄດ້ຮັບການຕົບມືຈົມເຊີຍຢ່າງຟົດສະໜັ່ນ.

ໃນເວທີການຖົກຖຽງກັນພວມດຳເນີນໄປໃນກອງປະຊຸມໃຫຍ່ນັ້ນ, ພວກທີ່ລຸກຮືຂຶ້ນໄດ້ປິດລ້ອມສະໜາມຫລວງຂອງພາລາຊະວັງຢ່າງສົມບູນແລ້ວ ຊຶ່ງວ່າໃນນັ້ນມີວັງລະດູໜາວ ແລະກອງບັນຊາການຂອງກອງທະຫານປ້ອງກັນເມືອງເປໂຕຣກຣາດທີ່ນຳພາການປ້ອງກັນລັດຖະບານໄດ້ຖືກໂຄ່ນລົ້ມແລ້ວ. ວັງລະດູໜາວມີນັກຮຽນນາຍທະຫານ, ນາຍທະຫານ ແລະທະຫານຂອງກອງພົນເພດຍິງປະຈັນບານປ້ອງກັນຢູ່ປະມານ ໓໐໐໐ ຄົນ.

ວັນທີ ໒៥ ຕຸລາ ຕາມການຍິງສັນຍານຈາກເຮືອກຳປັ່ນ"ອາວໍຣາ" ບັນດາກອງຮ້ອຍຂອງກອງລະວັງແດງທີ່ໄດ້ໂຮມກຳລັງຢູ່ທີ່ວັງລະດູໜາວໄດ້ ເລີ່ມ

ຕົ້ນບຸກໂຈມຕີ.

ບໍ່ມີໃຜຮູ້ວ່າລັດຖະບານທີ່ໄດ້ຖືກໂຄ່ນລົ້ມນັ້ນຢູ່ໃນຫ້ອງໃດແທ້. ໃນທີ່ສຸດ ປະຕູຫ້ອງຊຶ່ງມີພວກລັດຖະມົນຕີທີ່ມີຄວາມຢ້ານກົວສຸດຂະໜາດນັ່ງຢູ່ນັ້ນໄດ້ ໄຂອອກ. ກ່ອນໜ້ານັ້ນບໍ່ດົນຈາກບ່ອນນີ້ໄດ້ສົ່ງໂທລະເລກອັນສຸດທ້າຍໄປຍັງ ກອງບັນຊາການສູງສຸດທີ່ມີເນື້ອໃນວ່າ "ສະພາໂຊວຽດຂອງຜູ້ແທນກຳມະກອນແລະທະຫານເມືອງເປໂຕຣກຣາດ ໄດ້ປະກາດປົດອຳນາດລັດຖະບານ, ໄດ້ຮຽກຮ້ອງໃຫ້ມອບອຳນາດພາຍໃຕ້ການຂົ່ມຂູ່ວ່າຈະຍິງຖະຫລົ່ມວັງລະດູໜາວ ດ້ວຍປືນໃຫຍ່ຈາກຄ້າຍ ເປໂຕຣປາຟລອບ ແລະເຮືອກຳປັ່ນຮົບ "ອາວໍຣາ".ລັດຖະບານຈະສາມາດມອບອຳນາດມີແຕ່ໃຫ້ແກ່ກອງປະຊຸມສ້າງຕັ້ງເທົ່ານັ້ນ, ໄດ້ຕົກລົງບໍ່ຍອມ ແລະບໍ່ມອບຕົນເອງໃຫ້ແກ່ການປ້ອງກັນຂອງປະຊາຊົນ ແລະກອງທັບ. ຣີບຟ້າວສົ່ງກອງທະຫານມາໄວ".

ເຂັມໂມງຊີ້ບອກເວລາພໍດີ ໑ ໂມງ ໕໐ ນາທີ (ວັນທີ ໒໕ ຕຸລາ) ເວລານັ້ນໄດ້ເລີ່ມຕົ້ນປະກອບເອກະສານກ່ຽວກັບຈັບລັດຖະມົນຕີເກົ່າ. ພວກເຂົາໄດ້ຖືກສົ່ງໄປຄ້າຍ ເປໂຕຣປາຟລອບ ທີ່ວ່າກ່ອນນັ້ນໄດ້ກັກຂັງນັກຕໍ່ສູ້ ຕ້ານລະບອບເຈົ້າຊາ. ພວກນາຍທະຫານ ແລະນັກຮຽນນາຍທະຫານທີ່ຖືກຈັບໃນວັງໄດ້ຖືກປົດອາວຸດ ແລະໄດ້ປ່ອຍໂຕ.

ບັນດາຜູ້ແທນຂອງກອງປະຊຸມໃຫຍ່ບໍຮັບຂ່າວກ່ຽວກັບການລົ້ມລະລາຍຂອງເສົາຄ້ຳອັນສຸດທ້າຍຂອງລັດຖະມົນຕີເກົ່ານັ້ນດ້ວຍຄວາມເຫັນດີເຫັນພ້ອມຢ່າງເປັນເອກະສັນ. ໄດ້ຮັບຮອງເອົາຄຳຮຽກຮ້ອງເຖິງກຳມະກອນ, ທະຫານ ແລະຊາວນາທີ່ຂຽນໂດຍເລນິນທີ່ມີເນື້ອໃນດັ່ງຕໍ່ໄປນີ້: "ໂດຍອີງໃສ່ຄວາມມຸ່ງມາດປາ

ຖະໜາຂອງກຳມະກອນ, ທະຫານ ແລະຊາວນາສ່ວນໃຫຍ່ມະຫາສານ, ໂດຍອີງໃສ່ການລຸກຮືຂຶ້ນທີ່ຊະນະເລີດຂອງກຳມະກອນ ແລະກອງທະຫານ, ທີ່ ໄດ້ເກີດຂຶ້ນຢູ່ເມືອງ ເປໂຕຣກຣາດ ກອງປະຊຸມໃຫຍ່ຈະກຳເອົາອຳນາດໄວ້ໃນກຳມືຂອງຕົນ". ໑). ເອກະສານດັ່ງກ່າວກໍ່ໄດ້ປະກາດແຈ້ງການອຳນາດທັງໝົດຕົກຢູ່ໃນກຳມືຂອງບັນດາສະພາໂຊວຽດຂອງຜູ້ແທນກຳມະກອນ, ທະຫານ ແລະຊາວນາ.

ໃນຕອນແລງວັນທີ ໒໖ ຕຸລາ ໄດ້ໄຂກອງປະຊຸມເທື່ອທີສອງຂອງກອງປະຊຸມໃຫຍ່ຄັ້ງທີ ໒ ຂອງສະພາໂຊວຽດ.

ບັນດາຜູ້ແທນໄດ້ຮັບຮອງເອົາຄຳສັ່ງກ່ຽວກັບການລົບລ້າງການປະຫານຊີວິດຢູ່ແນວໜ້າ ແລະການປົດປ່ອຍທະຫານ ແລະນາຍທະຫານທັງໝົດທີ່ ຖືກຈັບຍ້ອນການຕໍ່ສູ້ທາງດ້ານການເມືອງຕ້ານອຳນາດການປົກຄອງກໍ່ຄືສະມາຊິກຂອງຄະນະກຳມະການທີ່ດິນທັງໝົດທີ່ໄດ້ຖືກຟ້ອງຂຶ້ນສານດ້ວຍລັດຖະບານ ຊົ່ວຄາວເກົ່າ ແລະດ້ວຍລັດຖະມົນຕີການປູກຝັງຂອງພວກແອແຊຣ.

ຫລັງຈາກນັ້ນເລນິນໄດ້ຂຶ້ນກ່າວຄຳປາໄສກ່ຽວກັບສັນຕິພາບ. ເພິ່ນໄດ້ເວົ້າວ່າ: "ບັນຫາກ່ຽວກັບສັນຕິພາບແມ່ນບັນຫາທີ່ເດືອດຮ້ອນກວ່າໝູ່, ແມ່ນບັນຫາອຳມະພາດແຫ່ງຍຸກສະໄໝ. ກ່ຽວກັບສັນຕິພາບມີຜູ້ເວົ້າ ແລະຂຽນຫລາຍທີ່ສຸດ ແລະພວກທ່ານທັງໝົດກໍ່ອາດຈະໄດ້ອະພິປາຍ ຫລາຍແລ້ວ. ດ້ວຍເຫດນັ້ນຂ້າພະເຈົ້າຂໍອະນຸຍາດອ່ານບົດຖະແຫລງການຊຶ່ງລັດຖະບານທີ່ພວກທ່ານໄດ້ເລືອກຕັ້ງຂຶ້ນຈະໄດ້ພິມເຜີຍແຜ່". ໒)

---

໑) ວ.ອ. ເລນິນ, ນິພົນຄົບຊຸດເຫລັ້ມ ໓໕, ໜ້າ ໑໑.

໒) ວ.ອ. ເລນິນ, ນິພົນຄົບຊຸດເຫລັ້ມ ໓໕, ໜ້າ ໑໓.

ລັດຖະບານໂຊວຽດໄດ້ສະເໜີໃຫ້ປະຊາຊົນ ແລະລັດຖະບານທັງໝົດທີ່ຕໍ່ສູ້ກັນເລີ່ມຕົ້ນການເຈລະຈາກ່ຽວກັບສັນຕິພາບແບບປະຊາທິປະໄຕທີ່ເປັນທຳຢ່າງວ່ອງໄວ. ເພື່ອຫລີກເວັ້ນຈາກຄວາມເຂົ້າໃຈຜິດ ແລະການສວຍໃຊ້ທາງດ້ານການທູດ "ດຳລັດກ່ຽວກັບສັນຕິພາບ" ໄດ້ໃຫ້ນິຍາມ ແລະການອະທິບາຍຢ່າງຖືກຕ້ອງ, ຈະແຈ້ງທີ່ສຸດວ່າສັນຕິພາບແບບປະຊາທິປະໄຕແມ່ນສັນຕິພາບໂດຍປາສະຈາກການຄອບຄອງ ແລະການເສຍສ່ວຍໃດໆ. ພັກນາຍທຶນ ແລະນາຍທຶນນ້ອຍໄດ້ພະຍາຍາມນຳໃຊ້ຄວາມສຳນຶກການຄອບຄອງໂດຍສອດຄ່ອງກັບສິດຜົນປະໂຫຍດທາງຊົນຊັ້ນຂອງຕົນ; ໂດຍສະເພາະແມ່ນຖືວ່າດິນທັງໝົດໄດ້ຖືກຍຶດດ້ວຍຈັກກະພັດໃນສົງຄາມນັ້ນແມ່ນດິນທີ່ຖືກຄອບຄອງ. ໃນ "ດຳລັດກ່ຽວກັບສັນຕິພາບ" ໄດ້ຢ້ຳວ່າ, ຄຳວ່າການຄອບຄອງນັ້ນແມ່ນໝາຍເຖິງການໂຮມເອົາຊາດນ້ອຍ ແລະອ່ອນເພຍໂດຍປາສະຈາກຄຳຕົກລົງທີ່ສະແດງອອກດ້ວຍຄວາມສະໝັກໃຈຂອງຊາດນັ້ນເຂົ້າກັບປະເທດໃຫຍ່ ຫລືວ່າເຂັ້ມແຂງ. ໃນນີ້ໂດຍບໍ່ຂຶ້ນກັບວ່າ, ການຮ່ວມແບບບັງຄັບນັ້ນໄດ້ເກີດຂຶ້ນເວລາໃດຊາດທີ່ໄດ້ຖືກເອົາແບບບັງຄັບ ຫລືວ່າກັກໄວ້ໃນຊາຍແດນຂອງປະເທດນັ້ນແບບບັງຄັບນັ້ນຈະແມ່ນຊາດທີ່ຂະຫຍາຍຕົວ ຫລືວ່າຫລ້າຫລັງປານໃດກໍ່ຕາມ, ໃນທີ່ສຸດ, ໂດຍບໍ່ຂຶ້ນກັບວ່າຊາດນັ້ນຈະອາໄສຢູ່ໃນທະວີບເອີລົບ ຫລືວ່າໃນປະເທດທີ່ຫ່າງໄກປານໃດກໍ່ຕາມ.

ໃນດຳລັດຂອງໂຊວຽດໄດ້ເວົ້າເຖິງສັນຕິພາບລວມທົ່ວໄປແບບປະຊາທິປະໄຕສຳລັບປະຊາຊາດທັງໝົດ. ເພື່ອຢືນຢັນການປະຕິເສດຈາກການທູດແບບປິດລັບ ລັດຖະບານໂຊວຽດໄດ້ຖະແຫລງວ່າ, ຈະເລີ່ມຕົ້ນການພິມເຜີຍແຜ່ສັນຍາ

ປົດລັບທີ່ໄດ້ເຊັນໂດຍລັດຖະບານເຈົ້າຊາ ແລະລັດຖະບານຊົ່ວຄາວທີ່ໄດ້ ຖືກໂຄ່ນລົ້ມແລ້ວນັ້ນໂດຍດ່ວນ ແລະຈະລົບລ້າງສັນຍານັ້ນ.

ດຳລັດກ່ຽວກັບສັນຕິພາບ ໄດ້ເພີຍແຜ່ລັກສະນະປຸ້ນສະດົມຂອງສົງຄາມໂລກຄັ້ງທີໜຶ່ງໃຫ້ມວນມະນຸດທັງໝົດໄດ້ເຫັນ ແລະຍັງແມ່ນຄຳຮຽກຮ້ອງອັນຍິ່ງໃຫຍ່ໃນການສ້າງສັນຕິພາບສຳລັບປະຊາຊາດຂອງທຸກໆປະເທດ. ດ້ວຍດຳລັດອັນນີ້ກອງປະຊຸມໃຫຍ່ໄດ້ສະຖາປະນາຫລັກການການຢູ່ຮ່ວມກັນໂດຍສັນຕິລະຫວ່າງປະເທດໂຊວຽດ ແລະປະເທດທຶນນິຍົມຕ່າງໆ. ບັນດາຫລັກການຂອງກົດໝາຍໂຊວຽດອັນທຳອິດໄດ້ກາຍເປັນພື້ນຖານຂອງນະໂຍບາຍການເມືອງພາຍນອກຂອງອຳນາດໂຊວຽດ.

ໃນຕອນແລງຂອງມື້ນັ້ນ ເລນິນໄດ້ອ່ານ "ດຳລັດກ່ຽວກັບທີ່ດິນ". ດຳລັດນີ້ມີສາມຂໍ້:

໑).ກຳມະສິດຕໍ່ທີ່ດິນຂອງພວກເຈົ້າທີ່ດິນຕ້ອງຖືກລົບລ້າງຢ່າງວ່ອງໄວໂດຍບໍ່ມີການຊົດເຊີຍໃດໆ.

໒).ຊັບສົມບັດຂອງເຈົ້າທີ່ດິນກໍຄືທີ່ດິນທັງໝົດໂດຍສະເພາະແມ່ນຂອງເຈົ້າຊາ,ຂອງວັດ,ຂອງໂບດ ພ້ອມທັງອຸປະກອນເຄື່ອງມືທັງໝົດອັນມີຊີວິດແລະບໍ່ມີຊີວິດ,ເຮືອນຊານບ້ານຊ່ອງ ແລະທຸກສິ່ງທຸກຢ່າງທີ່ເປັນຂອງເຂົາຕ້ອງຕົກເປັນພັນທະຂອງຄະນະກຳມະການທີ່ດິນນ້ອຍໆ ແລະຂອງສະພາໂຊວຽດຂອງຜູ້ແທນຊາວນາຂັ້ນເມືອງ,ຈົນຂັ້ນກອງປະຊຸມສ້າງຕັ້ງ.

໓).ບໍ່ວ່າການສ້າງຄວາມເສຍຫາຍໃດໆຕໍ່ຊັບສົມບັດທີ່ຍຶດໄດ້ຊຶ່ງເປັນຂອງປະຊາຊົນທັງໝົດໃນປະຈຸບັນຈະຖືວ່າແມ່ນການກະທຳຜິດຢ່າງຮ້າຍ ແຮງ,

ແລະຈະຖືກລົງໂທດດ້ວຍສານປະຕິວັດ. ສະພາໂຊວຽດຂອງຜູ້ແທນຊາວນາອັ້ນ ເມືອງຈະປະຕິບັດທຸກມາດຕາການເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍໃນການຍຶດ, ເພື່ອກຳນົດວ່າພາກສ່ວນໃດແທ້ໆສົມຄວນຕ້ອງຍຶດ, ເພື່ອບັນທຶກຢ່າງເຄັ່ງຄັດຊັບສົມບັດທັງໝົດທີ່ຍຶດໄດ້ ແລະເພື່ອປົກປັກຮັກສາມັນ.

ບໍ່ມີຈັກເທື່ອໃນປະຫວັດສາດ, ກົດໝາຍທີ່ພົວພັນເຖິງສິດຜົນປະໂຫຍດຂອງຊາວນາຢ່າງໜ້ອຍກໍ່ແມ່ນ ໑໐໐ ລ້ານຄົນຈະໄດ້ຂຽນໜຍໍ້, ສັ້ນ ແລະ ຈະແຈ້ງຄືແນວນີ້.

ວ.ອ.ເລນິນ ໄດ້ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າລັດຖະບານທີ່ມີຊື່ວ່າ ສະພາລັດຖະມົນຕີຂອງປະຊາຊົນ. ກອງປະຊຸມໃຫຍ່ໄດ້ເລືອກຕັ້ງຄະນະກຳມະການບໍລິຫານງານສູນກາງທົ່ວລັດເຊຍໃໝ່, ທີ່ວ່າສະມາຊິກສ່ວນໃຫຍ່ນັ້ນແມ່ນນັກໂບນເຊວິກ.

ເມື່ອເວລາກອງປະຊຸມໃຫຍ່ຄັ້ງທີ ໒ ຂອງສະພາໂຊວຽດໄດ້ສຳເລັດວຽກງານຂອງຕົນນັ້ນຟ້າກໍ່ແຈ້ງແລ້ວ...

## <u>ການປະຕິວັດເດືອນຕຸລາໄດ້ໃຫ້ຫຍັງແດ່ແກ່ປະຊາຊາດຕ່າງໆຂອງລັດເຊຍ ແລະຊາວຜູ້ອອກແຮງງານຂອງໂລກ</u>

ກ່ອນການປະຕິວັດເດືອນຕຸລາ ສັງຄົມມະນຸດເຄີຍຮູ້ພຽງແຕ່ຮູບການອັນ

ດຽວຂອງພະເດັດການກຳມາຊີບ. ມັນແມ່ນກອມມູນປາຣີ. ເຖິງແມ່ນວ່າ ມັນໄດ້ລົງຕົວທັງຫມົດ ໗໒ ວັນປານນັ້ນກໍຕາມ ແຕ່ວ່າບົດຮຽນຂອງກອມມູນປາຣີ, ພົນສຳເລັດ ແລະຄວາມອາດສາມາດຂອງມັນກາຍເປັນມູນມໍລະດົກຂອງຊາວຜູ້ອອກແຮງງານຂອງໂລກ. ລັດທິມາກນັ້ນເອງໄດ້ເຮັດໃຫ້ການປະຕິວັດເດືອນຕຸລາໄດ້ໃຫ້ຮູບການພະເດັດການກຳມາຊີບແບບໃຫມ່, ແບບສະພາໂຊວຽດທີ່ ໄດ້ສັງລວມເອົາພັນທະພາບຂອງຊາວກຳມາຊີບ ແລະຊາວນາທຸກ. ນີ້ແມ່ນ ຮູບການອຳນາດທີ່ກ້າວຫນ້າກວ່າ, ມີປະຊາທິປະໄຕກວ່າທຸກໆຮູບການໃນເມື່ອກ່ອນ, ເພາະວ່າມັນໄດ້ດູດດຶງເອົາມະຫາຊົນອັນກ້ວາງຂວາງເຂົ້າໃນການຄຸ້ມຄອງລັດ. ມັນໄດ້ສ້າງຄວາມອາດສາມາດໃຫ້ແກ່ການເປີດກ້ວາງກຳລັງແຮງທີ່ປະດິດສ້າງຂອງປະຊາຊົນທີ່ໄດ້ບົບຄໍ ແລະທັບມ້າງທົ່ນມາແລ້ວ.

ແຕ່ອັນນີ້ກໍບໍ່ໃຫ້ເຂົ້າໃຈວ່າ, ຄວາມປະດິດສ້າງຂອງປະຊາຊົນຈະຖືກຈຳກັດດ້ວຍການສ້າງສະພາໂຊວຽດ, ວ່າການປົດປ່ອຍໂລກຈາກການກົດຂີ່ລວມທັງຫມົດນັ້ນຈະຕ້ອງດຳເນີນໄປພຽງແຕ່ໃນຮູບການນີ້. ຄວາມປະດິດສ້າງທາງດ້ານການຈັດຕັ້ງຂອງປະຊາຊົນນັ້ນອາດຈະເຮັດໃຫ້ເກີດມີຮູບການອື່ນໆອີກກໍໄດ້. ລະບອບອຳນາດການປົກຄອງແບບປະຊາທິປະໄຕປະຊາຊົນໄດ້ກາຍເປັນຮູບການຫນຶ່ງຂອງພະເດັດການກຳມາຊີບພາຍຫລັງເດືອນຕຸລາໄດ້ຢັ້ງຢືນໃຫ້ເຫັນແລ້ວກ່ຽວກັບບັນຫານີ້. ແຕ່ວ່າປະເພດຂອງອຳນາດ, ທາດແທ້ຂອງມັນ, ລັກສະນະໃນທຸກໆກໍລະນີຍັງແມ່ນອັນດຽວກັນ ຄື ອຳນາດຂອງກຳມະກອນຢູ່ໃນພັນທະພາບກັບຊັ້ນຄົນທີ່ອອກແຮງງານອື່ນບໍ່ແມ່ນກຳມາຊີບ.

ຄວາມຫມາຍປະຫວັດສາດ-ລວມທົ່ວໂລກຂອງການປະຕິວັດເດືອນຕຸລາ

ມີຢູ່ບ່ອນວ່າ, ມັນໄດ້ຊີ້ເສັ້ນທາງແຫ່ງການປົດປ່ອຍສັງຄົມມະນຸດອອກຈາກ ສົງຄາມນອງເລືອດຂອງຈັກກະພັດທີ່ອາດຈະຊ້ຳຄືນຢ່າງຫລີກລ່ຽງບໍ່ໄດ້. ສົງຄາມໂລກຄັ້ງທີໜຶ່ງໄດ້ສ້າງຄວາມເສຍຫາຍຢ່າງໜັກໜ່ວງແກ່ສັງຄົມມະນຸດ, ໃນນັ້ນມີຜູ້ເສຍຊີວິດ ໑໐ ລ້ານຄົນ ແລະກາຍເປັນຜູ້ເສຍອົງຄະເຖິງ ໒໐ ລ້ານຄົນ. ສົງຄາມໂລກຄັ້ງທີສອງທີ່ລະບອບຟາຊິດໄດ້ກໍ່ຂຶ້ນໄດ້ສ້າງຄວາມເສຍຫາຍຫລາຍກວ່ານັ້ນເຖິງສາມເທົ່າ. ສົງຄາມຄັ້ງທີສາມ, ດ້ວຍການໃຊ້ລະເບີດປະລະມານູ ພວມຂົ່ມຂູ່ການຄົງຕົວຂອງໂລກ, ອາດຈະທຳລາຍທັງໝົດຄວາມສີວິໄລໃນປະຈຸບັນໃຫ້ຮາບກ້ຽງໄດ້.

ລະບອບທີ່ໄດ້ສ້າງຕັ້ງຂຶ້ນດ້ວຍການປະຕິວັດສັງຄົມນິຍົມສາມາດບໍ່ ພຽງແຕ່ປົບປັ້ງພວກຈັກກະພັດ, ບໍ່ອະນຸຍາດໃຫ້ພວກເຂົານຳເອົາສັງຄົມມະນຸດເຂົ້າຫາສົງຄາມເທົ່ານັ້ນ ແຕ່ຍັງໄດ້ລົບລ້າງຢ່າງຊິ້ນເຊີງສົງຄາມທີ່ໃຊ້ເປັນເຄື່ອງມືໃນການແກ້ໄຂກໍລະນີຜິດພາດ, ກໍລະນີປະທະກັນ, ສູ້ຢັນກັນ, ເປັນເຄື່ອງມືຂອງລັດທິແຜ່ອານາເຂດ. ສັງຄົມນິຍົມ ແລະສັນຕິພາບບໍ່ຕັດແຍກຈາກກັນຈັກເທື່ອ. ບໍ່ແມ່ນເລື່ອງບັງເອີນທີ່ວ່າ "ດຳລັດກ່ຽວກັບສັນຕິພາບ" ທີ່ໄດ້ວາງຫລັກການພື້ນຖານໃຫ້ແກ່ນະໂຍບາຍການເມືອງພາຍນອກຂອງໂຊວຽດນັ້ນໄດ້ກາຍເປັນ ກົດໝາຍອັນທຳອິດຂອງອຳນາດໂຊວຽດ.

ຫລາຍໆຮ້ອຍປີແລ້ວທີ່ຊາວນາໄດ້ໄຝ່ຝັນເຖິງທີ່ດິນ. ພັກຂອງນາຍທຶນແລະນາຍທຶນນ້ອຍຕ່າງໆກໍໄດ້ໃຫ້ຄຳໝັ້ນສັນຍາຢູ່ໃນໂຄງການ ແລະບົດປາໄສຂອງຕົນແກ່ຊາວນາວ່າຈະປົດປ່ອຍເຂົາເຈົ້າອອກຈາກແອກຂອງເຈົ້າທີ່ດິນ. ມີແຕ່ການປະຕິວັດເດືອນຕຸລາເທົ່ານັ້ນທີ່ໄດ້ເຮັດໃຫ້ຄຳໝັ້ນສັນຍາຂອງຕົນກາຍ

ເປັນຈິງ, ໄດ້ມອບດິນໃຫ້ແກ່ຊາວນາ. ສັງຄົມນິຍົມໄດ້ລົບລ້າງ ຄວາມທຸກຍາກຫລ້າຫລັງຂອງຊົນນະບົດ, ລົບລ້າງຄວາມທຸກຍາກອະນາຖາ, ໄດ້ລົບລ້າງຄວາມຊື້ນເຄີຍແບບເປັນຂ້ອຍຂ້າຕໍ່ຕ່ອນດິນນ້ອຍໆ, ໄດ້ລົບລ້າງຄວາມຊື້ນເຄີຍກັບກຳມະສິດນ້ອຍແລະນ້ອຍທີ່ສຸດຕໍ່ທີ່ດິນທີ່ເຮັດໃຫ້ຊາວຂາດແຄນ, ອອກແຮງງານຢ່າງຫນັກຫນ່ວງ. ສັງຄົມນິຍົມໄດ້ເຮັດໃຫ້ມີການອອກແຮງງານຢ່າງອິດສະລະພາບຢູ່ໃນທີ່ອິດສະລະ. ປະຊາຊາດຂອງໂລກທີ່ເປັນເມືອງຂຶ້ນ ແລະຖືກກົດຂີ່ເປັນ ສະຕະວັດ, ທີ່ໄດ້ຖືກບັງຄັບໃຫ້ກົ້ມຫົວຕໍ່ຫນ້າຜູ້ທີ່ແຂງແຮງກ່ວາດ້ວຍແທ່ງເຫລັກແລະໂລຫິດນັ້ນ ໄດ້ມອງເຫັນບົດຮຽນຂອງປະຊາຊາດໃນລັດເຊຍທີ່ໄດ້ຮັບການປົດປ່ອຍນັ້ນວ່າລັດທິຈັກກະພັດບໍ່ແມ່ນຈະມີອຳນາດຢ່າງບໍ່ມີຂອບເຂດ. ດຳລັດຂອງອຳນາດໂຊວຽດກ່ຽວກັບການລົບລ້າງການກົດຂີ່ຊົນຊາດ, ການຮັບຮູ້ສິດທິ ໃນການປົກຄອງຕົນເອງຈົນເຖິງການແຍກ ແລະການສ້າງສາທາລະນະລັດ ແຫ່ງຊາດທີ່ເປັນເອກະລາດນັ້ນ ໄດ້ຊີ້ໃຫ້ເຫັນເສັ້ນທາງ ໄປສູ່ການປົດປ່ອຍແກ່ ປະຊາຊາດທີ່ຖືກກົດຂີ່. ໄຊຊະນະຂອງການປະຕິວັດເດືອນຕຸລາໄດ້ຍົກສູງສະຕິການຈັດຕັ້ງຂອງຊາວກຳມາຊີບໂລກ. ກ່ອນການປະຕິວັດປີ1917ມີພັກກອມມູນິດພຽງແຕ່ພັກດຽວຢູ່ໃນປະເທດລັດເຊຍ. ພາຍຫລັງການປະຕິວັດເດືອນຕຸລາມີແຕ່ ໃນຊຸມ5ປີທຳອິດກໍ່ໄດ້ສ້າງຕັ້ງພັກກອມມູນິດຂຶ້ນແລ້ວເກືອບເຖິງ40ພັກ. ການເກີດຂຶ້ນຂອງພັກເຫລົ່ານີ້, ແນ່ນອນແມ່ນຍ້ອນຄວາມຮຽກຮ້ອງຕ້ອງການພາຍໃນຂອງປະເທດເຫລົ່ານັ້ນ, ແຕ່ວ່າດຳລັດຂອງອຳນາດໂຊວຽດນັ້ນກໍ່ຕັ້ງເຫມືອນດັ່ງທອນໄຟທີ່ບໍ່ຮູ້ມອດແທ້ໆຊຶ່ງໄດ້ເຍືອງເສັ້ນທາງອັນຫຍຸ້ງຍາກແຫ່ງການກໍ່ສ້າງພັກເຫຼົ່ານັ້ນ. ຄວາມຫມາຍສາກົນຂອງມະຫາປະຕິວັດເດືອນຕຸລາກໍ່ແມ່ນຢູ່ບ່ອນນີ້ຫລະ.

I) ວ.ອ.ເລນິນ ແມ່ນຜູ້ສ້າງຕັ້ງອົງການມາກຊິດອັນທຳອິດຂຶ້ນຢູ່ໃນປະເທດລັດເຊຍ ຄື "ສະຫະພັນການຕໍ່ສູ້ເພື່ອປົດປ່ອຍຊົນຊັ້ນກຳມະກອນ".

2) ຫນັງສືພິມ "ອິສກຣາ" ທີ່ຢູ່ໃຕ້ການນຳພາຂອງນັກມາກຊິດນັ້ນໄດ້ກາຍເປັນອົງການສູ້ຮົບຂອງນັກມາກຊິດປະຕິວັດ,ທີ່ວ່າໃນເງື່ອນໄຂອັນຫຍຸ້ງຍາກເປັນພິເສດກໍ່ຍັງຮູ້ດຳເນີນວຽກງານອັນໃຫຍ່ໂຕກ່ຽວກັບການກະກຽມທາງດ້ານແນວຄິດ,ການເມືອງ ແລະການຈັດຕັ້ງໃຫ້ແກ່ການສ້າງຕັ້ງພັກແບບໃຫມ່.

3) ໃນປີ ໑໙໐໕ ຢູ່ປະເທດລັດເຊຍໄດ້ເກີດມີການປະຕິວັດປະຊາທິປະໄຕນາຍທຶນ.ກອງທັບທີ່ແມ່ນເສົາຄ້ຳປະກອບອາວຸດຂອງລະບອບເຈົ້າຊາໄດ້ເຂົ້າປະກອບສ່ວນເປັນເທື່ອທຳອິດກັບກຳລັງປະຕິວັດ: ການລຸກຮື້ຂຶ້ນຂອງທະຫານເຮືອຮົບ "ປາຈອມກິນ".

4) ໃນທົ່ວປະເທດໄດ້ເກີດມີກະແສຟອງການນັດຢຸດງານ,ການແຫ່ຂະບວນທີ່ໄດ້ຖືກປາບປາມຢ່າງຫນັກຫນ່ວງດ້ວຍອຳນາດເຈົ້າຊາ.

5) ໃນການນັດຢຸດງານຂອງກຳມະກອນທາງລົດໄຟຢູ່ມົດສະກູໃນລະດູແລ້ງປີ ໑໙໑໒ ນັ້ນມີກຳມະກອນເປັນພັນໆຄົນເຂົ້າຮ່ວມ. ທັງຫມົດນີ້ສະແດງ

ໃຫ້ເຫັນຄວາມຟົດຟື້ນປະຕິວັດຄັ້ງໃຫມ່ຂອງມະຫາຊົນ.

6) ກອງປະຊຸມຂອງຄະນະບໍລິຫານງານສະພາໂຊວຽດຂອງຜູ້ແທນກຳມະກອນ ແລະທະຫານເມືອງ ເປໂຕຣກຣາດ.

7) ທະຫານທີ່ແນວໜ້າໄດ້ສະແດງຄວາມຊົມເຊີຍການໂຄ່ນລົ້ມລະບອບເຈົ້າຊາ.

8) ວັນທີ ໔ ເມສາ ໑໙໑໗ ວ.ອ.ເລນິນ ໄດ້ກ່າວຄຳປາໄສຕໍ່ໜ້າ ນັກໂບນເຊວິກຜູ້ທີ່ຫ້າວຫັນຂອງເມືອງ ເປໂຕຣກຣາດ ດ້ວຍການອ່ານບົດວິນິດໄສອັ້ງໃນນັ້ນໄດ້ວາງແຜນການການຕໍ່ສູ້ເພື່ອຫັນປ່ຽນການປະຕິວັດປະຊາທິປະໄຕນາຍທຶນເປັນການປະຕິວັດສັງຄົມນິຍົມ.ບົດວິນິດໄສນັ້ນເອີ້ນວ່າ "ບົດວິນິດໄສເດືອນເມສາ".

9) ເພື່ອນຮ່ວມຮົບຂອງ ວ.ອ.ເລນນ: ເຊຊິນສະກີ, ຊະເວຍຣລົບ,ສະຕາລິນ.

10) "ບຸນແຮງງານສາກົນໝັ້ນຍືນ!","ສັງຄົມນິຍົມໝັ້ນຍືນ!" ກຳມະກອນ ແລະທະຫານຂອງກອງປ້ອງກັນເມືອງ ເປໂຕຣກຣາດ ໄດ້ດຳເນີນຂະບວນວັນທີ ໑ ເມສາ ພາຍໃຕ້ຄຳຂັວນເຫລົ່ານີ້ຫລະ. ເປັນເທື່ອທຳອິດໃນປະເທດລັດເຊຍທີ່ໄດ້ສະເຫລີມສະຫລອງວັນບຸນກຳມາຊົນສາກົນຢ່າງມີອິດສະລະພາບ.

11) ຍ້ອນໄຊຊະນະຂອງການປະຕິວັດເດືອນກຸມພາ ພັກໂບນເຊວິກໄດ້ອອກຈາກການເຄື່ອນໄຫວປິດລັບ ແລະເປັນເທື່ອທຳອິດທີ່ມີຄວາມສາມາດເຄື່ອນໄຫວຢ່າງເປີດເຜີຍ. ວັນທີ ໕ ມີນາ ໑໙໑໗ ໄດ້ເລີ່ມຕົ້ນພິມເຜີຍແຜ່ໜັງສືພິມ

"ປຣາວະດາ" ຊຶ່ງແມ່ນອົງການສູນກາງຂອງພັກນັ້ນຄືນໃໝ່, ຊຶ່ງໄດ້ຖືກປິດ "ຢ່າງອະມະຕະ" ດັ່ງທີ່ພວກເຈົ້ານາຍຂອງເຈົ້າຊາຄິດໃນຕອນຕົ້ນຂອງ ສົງຄາມໂລກຂອງຈັກກະພັດ.

I2) ໃນທົ່ວລັດເຊຍໄດ້ເກີດມີກະແສຟອງຂອງການເດີນຂະບວນຢ່າງກ້ວາງຂວາງເພື່ອຕ້ານລັດຖະບານຊົ່ວຄາວຂອງນາຍທຶນ, ທີ່ໄດ້ປະກາດການກຽມພ້ອມຂອງຕົນສືບຕໍ່ສົງຄາມ "ຈົນເຖິງໄຊຊະນະສຸດທ້າຍ". ວັນທີ ໑໘ ມິຖຸນາ ໑໙໑໗ ຢູ່ທີ່ເມືອງ ເປໂຕຣກຣາດ ໄດ້ມີການເດີນຂະບວນໃຫຍ່ທີ່ມີກຳມະກອນ ແລະຊາວນາເຂົ້າຮ່ວມເຖິງເຄິ່ງລ້ານ ຊຶ່ງດຳເນີນໄປໃຕ້ຄຳຂວັນຂອງໂບນເຊວິກ ເຊັ່ນ: "ຄັດຄ້ານສົງຄາມ!", "ອຳນາດທັງໝົດຕ້ອງເປັນຂອງສະພາໂຊວຽດ!", "ຄັດຄ້ານລັດຖະມົນຕີນາຍທຶນ!".

I3) ການເດີນຂະບວນໃນວັນທີ ໓-໔ ກໍລະກົດ ແມ່ນຄວາມພະຍາຍາມອັນສຸດທ້າຍທີ່ຊຸກຍູ້ສະພາໂຊວຽດໃຫ້ກຳເອົາອຳນາດທັງໝົດໄວ້ໃນກຳມືຂອງຕົນ. ລັດຖະບານຊົ່ວຄາວ ໄດ້ປາບປາມພວກເດີນຂະບວນຢ່າງຮ້າຍກາດ.

I4) ມີແຕ່ພາຍຫລັງເຫດການເດືອນກໍລະກົດເທົ່ານັ້ນສ່ວນໃຫຍ່ຂອງປະຊາຊົນຜູ້ອອກແຮງງານຈຶ່ງໄດ້ເລີ່ມຕົ້ນຫັນມາສະໜັບສະໜູນພັກໂບນເຊວິກທີ່ໄດ້ດຳເນີນແນວທາງການປະຕິວັດສັງຄົມນິຍົມຢ່າງສຸດກົກສຸດປາຍ, ສະພາບການທາງດ້ານການເມືອງໃນປະເທດໄດ້ເພີ່ມຄວາມຂ້ຽວຂາດຂຶ້ນ.

I5) ປະຊາຊົນຢູ່ທຸກບ່ອນທຸກທີ່ຕ້ອງການສາທາລະນະລັດປະຊາທິປະໄຕທີ່ແທ້ຈິງ, ສັນຕິພາບ ແລະທີ່ດິນ. ການເດີນຂະບວນເດືອນກັນຍາຢູ່ ຊີບີຣີ...

I6) ...ການຮວມຊຸມນຸມມິດຕິງຂອງທະຫານ ແລະຊາວຜູ້ອອກແຮງ

ງານອູສະເບັກຢູ່ເມືອງຕາສະເກນ.

I7) ກອງບັນຊາການຂອງການປະຕິວັດແມ່ນສະຖາບັນ ສະໂມນນິຍ.

I8) ກອງລະວັງແດງກຽມພ້ອມທຸກນາທີ ທີ່ຈະລຸກຂຶ້ນຕໍ່ສູ້ກັບກໍາລັງປະກອບອາວຸດຂອງລັດຖະບານຊົ່ວຄາວ.

I9) ມົດສະກູ.ທະຫານການປະຕິວັດກັບອາວຸດເພື່ອຕໍ່ສູ້.

20) ໜ້າທີ ໑ ຂອງຕົ້ນສະບັບ"ຖະແຫລງການກ່ຽວກັບສິດທິ ຂອງຊາວຜູ້ອອກແຮງງານ ແລະປະຊາຊົນທີ່ຖືກກົດຂີ່" ຂອງວ.ອ.ເລນິນ,ຊຶ່ງໄດ້ປະກາດ ລົບລ້າງທຸກໆການຂູດຮີດຄົນດ້ວຍຄົນ ແລະການເລີ່ມຕົ້ນການກໍ່ສ້າງສັງຄົມນິຍົມ. ເອກະສານນີ້ໄດ້ຖືກຮັບຮອງເອົາໃນວັນທີ ໕ ມັງກອນ ໑໙໑໘ ຊຶ່ງຕາມ ທາດແທ້ຂອງຕົນແລ້ວ ແມ່ນລັດຖະທໍາມະນູນສະບັບທໍາອິດ ຂອງປະເທດໂຊວຽດ.

2I) ວ.ອ.ເລນິນ.

22) ເມື່ອກ້າວເຂົ້າສູ່ການປະຕິບັດໂຄງການໃຫມ່ທີ່ໃຫຍ່ໂຕ ແຫ່ງການສືບ ຕໍ່ຂະຫຍາຍ ແລະບູລະນະສັງຄົມນິຍົມ ທີ່ໄດ້ຮັບຮອງເອົາໃນກອງປະຊຸມໃຫຍ່ຄັ້ງທີ ໒໒ ຂອງ ພກສຊ ນັ້ນນັກກອມມູນິດໂຊວຽດປະກາດວ່າ "ເລນິນຢູ່ນໍາພວກເຮົາ!" ນັກກອມມູນິດໂຊວຽດຍາມໃດ ກໍ່ບໍ່ລືສູດຈັດຊື່ຕໍ່ອຸດົມການສັນຕິພາບ ແລະຄວາມສາມັກຄີສາກົນຂອງ ເລນິນ.

**Исаак Израилевич Минц**

КАК ПРОИЗОШЛА ОКТЯБРЬСКАЯ РЕВОЛЮЦИЯ

*на лаосском языке*

Цена 45 коп.

2



# ИСКРА

ДЕКАБРЬ [illegible] ГОДА.

I





3

4

5

6


24 / VII

ຫ້າມຈຳໜ່າຍ



8

9

10

11

Россійская Соціалъ-Демократическая Рабочая Партія

# ПРАВДА

ОРГАНЪ
Центральнаго Комитета
и
Петербургскаго Комитета
Р.С.Д.Р.П.

ЕЖЕДНЕВНАЯ ГАЗЕТА

I2

I3

Дорогу женщинъ!
РЕСПУБЛИКА
Пролитарiи всѣхъ странъ
Да здравствуетъ земля и воля

I6

18



19





Декларація правъ трудящагося и эксплуатируемаго народа.

Учред. Собраніе постановляетъ:

I 1 Россія объявляется республикой Совѣтовъ Рабочихъ, Солдатскихъ и Крестьянскихъ Депутатовъ. Вся власть в центрѣ и на мѣстахъ принадлежитъ этимъ Совѣтамъ.

II 2 Совѣтская россійская республика учреждается на основѣ свободнаго союза свободныхъ націй, какъ федерація совѣтскихъ національныхъ республикъ.

III Ставя своей основной задачей уничтоженіе всякой эксплуатаціи человѣка человѣкомъ, полное устраненіе дѣленія общества на классы, безпощадное подавленіе эксплуататоровъ, установленіе соціалистической организаціи общества и побѣды соціализма во всѣхъ странахъ, Учред. Собраніе постановляетъ далѣе:

1 Частная собственность на землю отмѣняется. Вся земля, со всѣми постройками, инвентаремъ и прочими принадлежностями с.-х. производства, объявляется достояніемъ всего трудящагося народа

24/VII

XXVII
СЪЕЗД
КПСС

ການປະຕິວັດເດືອນຕຸລາ
ເກີດຂຶ້ນແນວໃດ